ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC



ບົດລາຍງານປະຈຳປີ
ANNUAL REPORT
2025

ສາລະບານ

I. ຂໍ້ມູນການເງິນທີ່ສຳຄັນ (5 ປີຄືນຫຼັງ)..... 1

II. ຄຳເຫັນຂອງຜູ້ບໍລິຫານ..... 4

III. ຂໍ້ມູນກ່ຽວກັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 10

IV. ສະພາບເສດຖະກິດໃນປີ 2025 ແລະ ແນວໂນ້ມສຳລັບປີ 2026..... 14

V. ຜົນການດຳເນີນທຸລະກິດຕົ້ນຕໍໃນແຕ່ລະດ້ານ..... 23

VI. ໂຄງປະກອບການຈັດຕັ້ງ..... 32

VII. ກອງປະຊຸມຜູ້ຖືຮຸ້ນ ແລະ ການປະຕິບັດໜ້າທີ່ຂອງສະພາບໍລິຫານ..... 37

VIII. ບົດລາຍງານຄວາມຍືນຍົງ..... 44

IX. ຜູ້ກວດສອບອິດສະຫຼະ..... 53

X. ສາຂາ ແລະ ໜ່ວຍບໍລິການ..... 113

XI. ລາງວັນ ແລະ ການຍອມຮັບ..... 119

XII. ບັນດາທະນາຄານຕົວແທນ..... 123

I. ຂໍ້ມູນການເງິນທີ່ສຳຄັນ (5 ປີຄົນຫຼັງ)

1. ຜົນການດຳເນີນງານ

ຂໍ້ມູນທາງການເງິນທີ່ສຳຄັນ ຕາມການກວດສອບມາດຖານສາກົນ ແຕ່ປີ 2021-2025

ຫົວໜ່ວຍ: ລ້ານກີບ

ເນື້ອໃນ	2025	2024	2023	2022	2021
ລາຍຮັບດອກເບ້ຍສຸດທິ	3,821,121	3,652,284	1,738,189	1,270,883	752,597
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	818,311	830,984	553,206	364,145	278,198
ລາຍຮັບການຄ້າສຸດທິ	356,734	244,081	390,926	-38,154	4,084
ລາຍຮັບຈາກການດຳເນີນງານອື່ນໆ	374,074	506,516	445,957	121,260	180,385
ລາຍຮັບທັງໝົດຈາກການດຳເນີນງານ	**5,370,240**	**5,233,865**	**3,128,278**	**1,718,134**	**1,215,264**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ	-2,869,743	-3,553,571	-2,098,555	-912,720	-649,075
ການເພີ່ມຂຶ້ນຂອງການດ້ອຍຄ່າຂອງເງິນລົງທຶນທາງການເງິນປະເພດມີໄວ້ເພື່ອຂາຍ	-14,955	-7,287	-2,301	-	-
ລາຍຮັບສຸດທິຈາກການດຳເນີນງານ	**2,485,542**	**1,673,007**	**1,027,422**	**805,414**	**566,189**
ລາຍຈ່າຍພະນັກງານ	-857,643	-595,148	-399,534	-329,249	-305,806
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ	-128,325	-104,278	-93,616	-112,823	-81,350
ຄ່າຫລຸ້ຍຫ້ຽນສິດນຳໃຊ້ຊັບສິນ	-23,880	-13,881	-8,574	-7,898	-8,040
ລາຍຈ່າຍອື່ນໆຈາກການດຳເນີນງານ	-374,066	-322,607	-294,971	-195,263	-175,296
ລາຍຈ່າຍທັງໝົດຈາກການດຳເນີນງານ	**-1,383,914**	**-1,035,914**	**-796,695**	**-645,233**	**-570,492**
ສ່ວນແບ່ງກຳໄລໃນອົງສາຫະກິດຂາຮຸ້ນ ແລະ ອົງສາຫະກິດປະສົມ	**51,214**	**57,418**	**52,393**	**36,898**	**16,888**
ກຳໄລກ່ອນອາກອນ	**1,152,842**	**694,511**	**283,120**	**197,079**	**12,585**
ອາກອນກຳໄລ	-220,298	-244,948	-51,712	31,111	-1,175
ກຳໄລສຸດທິພາຍໃນປີ	**932,544**	**449,563**	**231,408**	**228,190**	**11,410**

2. ຂໍ້ມູນດ້ານການເງິນ

ຫົວໜ່ວຍ: ລ້ານກີບ

ເນື້ອໃນ	2025	2024	2023	2022	2021
ເງິນສົດ ແລະ ເງິນຝາກຢູ່ທະນາຄານ ແຫ່ງ ສປປ ລາວ	33,121,131	32,718,705	31,684,143	27,786,294	19,022,276
ເງິນຝາກຢູ່ທະນາຄານອື່ນ	21,646,309	20,512,515	21,964,355	11,855,719	9,182,845
ເງິນກູ້ໃຫ້ແກ່ລູກຄ້າ	64,938,608	59,941,800	53,892,356	47,235,372	32,372,070
ເງິນລົງທຶນຕ່າງໆ	35,428,469	25,876,222	15,700,735	5,748,355	6,008,327
ຊັບສິນບັດຄົງທີ່ ແລະ ອຸປະກອນ	752,182	663,369	568,104	540,325	563,503
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	385,077	357,421	321,734	283,285	293,321
ສິດນຳໃຊ້ຊັບສິນ	76,751	72,066	53,500	52,028	55,713
ຊັບສິນອາກອນລໍຖ້າຊຳລະສະສາງ	52,780	226,165	102,813	116,520	61,030
ຊັບສິນອື່ນໆ	4,355,528	1,822,987	2,146,019	875,117	677,906
ລວມຍອດຊັບສິນ	**160,756,835**	**142,191,250**	**126,433,759**	**94,493,015**	**68,236,991**
ໜີ້ຕ້ອງສົ່ງທະນາຄານ	6,127,760	6,198,128	9,463,117	6,639,183	5,269,436
ໜີ້ຕ້ອງສົ່ງລູກຄ້າ	145,507,532	127,589,277	109,471,717	80,994,071	57,169,169
ກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	3,599,765	4,456,239	4,378,394	4,105,783	3,354,623
ໜີ້ຕ້ອງສົ່ງອາກອນໃນປີ	101,445	195,347	27,454	21,907	-
ໜີ້ຕ້ອງສົ່ງສັນຍາເຊົ່າ	44,736	47,059	29,285	26,553	29,595
ໜີ້ສິນອາກອນລໍຖ້າຊຳລະສະສາງ	-	203,260	-	-	-
ໜີ້ສິນອື່ນໆ	776,269	579,150	486,128	347,558	282,022
ລວມໜີ້ສິນ	**156,157,507**	**139,268,460**	**123,856,095**	**92,135,055**	**66,104,845**
ທຶນຈົດທະບຽນ	1,544,872	1,038,617	1,038,617	1,038,617	1,038,617
ສ່ວນເພີ່ມມູນຄ່າຮຸ້ນ	326,253	-	-	-	-
ຄັງສະສົມຕາມລະບຽບການ	1,598,280	1,154,828	911,701	836,635	831,667
ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	-8,665	-24,013	18,107	9,040	11,416
ກຳໄລສະສົມ	1,138,588	753,358	609,239	473,668	250,446
ລວມຍອດທຶນ	**4,599,328**	**2,922,790**	**2,577,664**	**2,357,960**	**2,132,146**
ລວມໜີ້ສິນ ແລະ ທຶນ	**160,756,835**	**142,191,250**	**126,433,759**	**94,493,015**	**68,236,991**

3. ອັດຕາສ່ວນຕົວຊີ້ບອກການດຳເນີນງານ ຈຳນວນໜຶ່ງ

ເນື້ອໃນ	2025	2024	2023	2022	2021
ລາຍຮັບດອກເບ້ຍສຸດທິ/ຊັບສິນທັງໝົດ	2.38%	2.57%	1.37%	1.34%	1.10%
ລາຍຮັບດອກເບ້ຍ/ຊັບສິນທີ່ກໍ່ໃຫ້ເກີດດອກເບ້ຍ	6.04%	6.12%	4.89%	5.89%	6.05%
ລາຍຈ່າຍດອກເບ້ຍ/ໜີ້ສິນທີ່ມີດອກເບ້ຍ	2.26%	2.33%	2.34%	2.50%	2.99%
ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ/ລາຍຮັບທັງໝົດຈາກການດຳເນີນງານ	20.35%	32.43%	29.57%	29.91%	26.16%
ລາຍຈ່າຍຈາກການດຳເນີນງານ/ລາຍຮັບທັງໝົດຈາກການດຳເນີນງານ	25.77%	19.79%	25.47%	37.55%	46.94%
ກຳໄລສຸດທິຕໍ່ຊັບສິນ (ROA)	0.58%	0.32%	0.18%	0.24%	0.02%
ກຳໄລສຸດທິຕໍ່ທຶນ (ROE)	20.28%	15.38%	8.98%	9.68%	0.54%
ອັດຕາສ່ວນເງິນກູ້ຕໍ່ເງິນຝາກທັງໝົດ	46.08%	46.69%	44.38%	49.33%	48.67%
ໜີ້ NPL ຕໍ່ເງິນກູ້ທັງໝົດ	2.76%	2.97%	1.92%	3.36%	3.85%
ອັດຕາຜົນຕອບແທນຕໍ່ຮຸ້ນ (ກີບ)	826.16	2,164	1,114	1,099	55
ອັດຕາຄວາມພຽງພໍຂອງທຶນ	10.20%	6.00%	4.91%	6.29%	7.37%

*ໃນວັນທີ 18 ກຸມພາ 2025, ທະນາຄານໄດ້ດຳເນີນການແບ່ງແຍກຮຸ້ນ ຮຸ້ນ ສາມັນໃນອັດຕາສ່ວນ 1:5 ໃນຕະຫຼາດຫຼັກຊັບລາວ (LSX).

*ໃນວັນທີ 28 ຕຸລາ 2025, ທະນາຄານໄດ້ອອກຈຳໜ່າຍຮຸ້ນ ໃໝ່ຈຳນວນ 506,255,500 ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມອບຊື້ນທົ່ວໄປ ພາຍຫຼັງຈາກໄດ້ຮັບການອະນຸມັດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍການເພີ່ມທຶນດັ່ງກ່າວມີມູນຄ່າລວມ 841,911,622,580 ກີບ.

ຫົວໜ່ວຍ: ລ້ານກີບ

ເນື້ອໃນ	2025	2024	2023	2022	2021
ກຳໄລສຸດທິພາຍໃນປີ	932,544	449,563	231,408	228,190	11,410
ລວມຍອດຊັບສິນ/ໜີ້ສິນ	160,756,835	142,191,250	126,433,759	94,493,015	68,236,991
ຍອດສິນເຊື່ອ	69,513,902	62,162,622	52,198,063	42,808,801	30,080,974
ຍອດເງິນຝາກ	150,847,574	133,135,787	117,626,838	86,782,335	61,802,739

II. ຄຳເຫັນຂອງຜູ້ບໍລິຫານ

1. ຄຳເຫັນຂອງທ່ານປະທານສະພາບໍລິຫານ

ຮຽນ: ບັນດາທ່ານທີ່ນັບຖື ແລະ ຮັກແພງ,



ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຕາງໜ້າໃຫ້ສະມາຊິກສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ມີຄຳເຫັນໃນປຶ້ມລາຍງານປະຈຳປີ 2025, ຂ້າພະເຈົ້າຂໍລາຍງານໃຫ້ບັນດາທ່ານຊາບວ່າ:

ໃນ ປີ 2025 ຖືເປັນປີທີ່ ທຄຕລ ໄດ້ກ້າວຂຶ້ນສູ່ຂັ້ນໃໝ່ທີ່ໂດດເດັ່ນ ທ່າມກາງສະພາບເສດຖະກິດພາກພື້ນ ແລະ ສາກົນ ທີ່ຍັງມີຄວາມທ້າທາຍ. ຕະຫຼອດໄລຍະ 1 ປີຜ່ານມາ, ສະພາບໍລິຫານໄດ້ຕິດຕາມ ແລະ ໃຫ້ທິດຊີ້ນຳແກ່ຄະນະຜູ້ບໍລິຫານ ທຄຕລ ໃນການປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນທຸລະກິດຢ່າງຕໍ່ເນື່ອງ ໂດຍໄດ້ດຳເນີນກອງປະຊຸມທັງໝົດ 9 ຄັ້ງ, ສິ່ງພົ້ນເດັ່ນແມ່ນສະພາບໍລິຫານໄດ້ຮັບຮອງແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029 ແລະ ໄດ້ຊີ້ນຳການເພີ່ມທຶນຈົດທະບຽນຂອງ ທຄຕລ ຢ່າງສຳເລັດຜົນເຊິ່ງໄດ້ ສຳເລັດການເພີ່ມທຶນຈຳນວນ 841.91 ຕື້ກີບ ຜ່ານການອອກຈຳໜ່າຍຮຸ້ນໃຫ້ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ ເຊິ່ງສະແດງໃຫ້ເຫັນເຖິງຄວາມໄວ້ວາງໃຈຈາກຜູ້ຖືຮຸ້ນ ແລະ ນັກລົງທຶນ ເພື່ອສະໜັບສະໜູນການຂະຫຍາຍຕົວຂອງ ທຄຕລ.

ສຳລັບປີ 2026 ເຖິງແມ່ນວ່າສະພາບເສດຖະກິດ ພາກພື້ນ ແລະ ສາກົນ ຍັງຄົງມີຄວາມທ້າທາຍຫຼາຍດ້ານ ເປັນຕົ້ນ ແມ່ນຂໍ້ຂັດແຍ່ງທາງດ້ານການເມືອງ ແລະ ທາງພູມສາດ, ຄວາມຜັນຜວນຂອງຕະຫຼາດການເງິນ, ຜົນກະທົບຈາກການປ່ຽນແປງສະພາບດິນຟ້າອາກາດ, ແລະ ວິກິດການດ້ານພະລັງງານ ໂດຍສະເພາະການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟ, ແຕ່ຂ້າພະເຈົ້າຍັງຄົງເຊື່ອ ໝັ້ນວ່າ ສະພາບໍລິຫານ, ຄະນະບໍລິຫານ ແລະ ພະນັກງານຂອງ ທຄຕລ ທຸກທ່ານຈະສືບຕໍ່ຄຸ້ມຄອງ ບໍລິຫານ ແລະ ພັດທະນາ ທຄຕລ ຢ່າງມີຜົນສຳເລັດ ເພື່ອຮັບປະກັນໃຫ້ບັນລຸແຜນຍຸດທະສາດ ແລະ ວິໄສທັດ **"ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ"**

ໃນໂອກາດນີ້, ໃນນາມ ຕາງໜ້າສະພາບໍລິຫານ ທຄຕລ ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງ ຕໍ່ການນຳທຸກຂັ້ນທີ່ໄດ້ເອົາໃຈໃສ່ຊຸກຍູ້ ແລະ ຊີ້ນຳນຳພາ ທຄຕລ ຢ່າງບໍ່ຢຸດຢັ້ງມາໂດຍຕະຫຼອດ ລວມເຖິງບັນດາທ່ານຜູ້ຖືຮຸ້ນທຸກທ່ານທີ່ໄດ້ໃຫ້ຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈໃນທ່າແຮງ ແລະ ທິດທາງຂອງ ທຄຕລ ດ້ວຍດີສະເໝີມາ. ພ້ອມດຽວກັນນັ້ນ, ສະພາບໍລິຫານ ຂໍສະແດງຄວາມຮູ້ບຸນຄຸນ ຕໍ່ບັນດາລູກຄ້າທຸກທ່ານ ທີ່ຍາມໃດກໍ່ໄດ້ໃຫ້ຄວາມໄວ້ວາງໃຈ ແລະ ເລືອກໃຊ້ບໍລິການຂອງ ທຄຕລ ເຊິ່ງຄວາມໄວ້ວາງໃຈອັນລ້ຳຄ່ານີ້ ຈະສືບຕໍ່ເປັນແຮງຜັກດັນ ແລະ ເປັນພາລະກິດທີ່ ທຄຕລ ຈະບໍ່ຢຸດຢັ້ງໃນການສ້າງ ແລະ ພັດທະນາຕົນເອງໃຫ້ດີຂຶ້ນເລື້ອຍໆ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ສຸລິວັດ ສຸວັນນະຈູມຄຳ
ປະທານສະພາບໍລິຫານ

2. ຄຳເຫັນຂອງທ່ານຜູ້ອຳນວຍການ ທຄຕລ



ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ ທຄຕລ

ບັນດາທ່ານຜູ້ຖືຮຸ້ນ ແລະ ທ່ານລູກຄ້າຜູ້ມີອຸປະການະຄຸນ ທີ່ນັບຖື ແລະ ຮັກແພງ.

ຂ້າພະເຈົ້າຕາງໜ້າໃຫ້ຄະນະຜູ້ບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດປະກອບຄຳເຫັນຕໍ່ກັບຜົນການດຳເນີນທຸລະກິດ ແລະ ບົດລາຍງານປະຈຳປີ 2025 ຄືດັ່ງນີ້: ພາຍໃຕ້ການຊີ້ນຳຂອງ ສະພາບໍລິຫານ ແລະ ການຮ່ວມແຮງຮ່ວມໃຈຂອງ ພະນັກງານທຸກຂັ້ນ, ທຄຕລ ໄດ້ດຳເນີນທຸລະກິດໃນປີ 2025 ດ້ວຍຜົນສຳເລັດທີ່ໜ້າພໍໃຈໃນທຸກດ້ານ. ໃນດ້ານທຸລະກິດ, ຍອດເງິນຝາກ 160,756 ຕື້ກີບ ແລະ ຍອດເງິນກູ້ 69,513 ຕື້ກີບ ຕ່າງກໍ່ເກີນແຜນ ໃນຂະນະທີ່ ອັດຕາ NPL ຖືກຮັດແຄບໄວ້ທີ່ 2.76% ສະທ້ອນໃຫ້ເຫັນເຖິງວິໄນໃນການຄຸ້ມຄອງຄຸນນະພາບສິນເຊື່ອ. ໃນດ້ານຜົນການດຳເນີນທຸລະກິດ ແມ່ນສາມາດສ້າງກຳໄລໄດ້ລື່ນປີ 2024 ທີ່ຜ່ານມາ, ທຄຕລ ສ້າງໄດ້ຊັບສິນ 160,756 ຕື້ກີບ, ກຳໄລສຸດທິ 932 ຕື້ກີບ ເກີນແຜນການເຖິງ 161.90% ເຊິ່ງເປັນຕົວຊີ້ວັດທີ່ສະທ້ອນໃຫ້ເຫັນປະສິດທິພາບໃນການດຳເນີນທຸລະກິດຂອງ ທຄຕລ. ໃນດ້ານດິຈິຕອນ, ທຄຕລ ໄດ້ເປີດຕົວຜະລິດຕະພັນ ແລະ ບໍລິການໃໝ່ຫຼາຍລາຍການ ເຊັ່ນ OneBank Kid, OnePay Shop, ATM UnionPay Virtual Card, ການຊື້ຂາຍຮຸ້ນຜ່ານ BCEL One. ພ້ອມທັງຂະຫຍາຍເຄືອຂ່າຍຕົວແທນ BCOME ແລະ ມັນນີແກຣມ ເພີ່ມຂຶ້ນ ເພື່ອຕອບໂຈດຄວາມຕ້ອງການຂອງລູກຄ້າໃຫ້ຄົບຖ້ວນ ແລະ ທັນສະໄໝ. ຄຽງຄູ່ກັນນັ້ນ, ທຄຕລ ຍັງໄດ້ສືບຕໍ່ຍຶດໝັ້ນໃນຄຸນຄ່າຂອງການເປັນທະນາຄານທີ່ຮັບຜິດຊອບຕໍ່ສັງຄົມ ໂດຍໃນປີ 2025 ໄດ້ປະກອບສ່ວນເຂົ້າໃນໂຄງການ CSR ທັງໝົດ 148 ລາຍການ ລວມເປັນມູນຄ່າ 2,112.62 ລ້ານກີບ ໃນຂະນະທີ່ BCEL One Heart ໄດ້ເປັນສື່ກາງລະດົມທຶນໄດ້ 300.55 ລ້ານກີບ ຈາກ 4,699 ຄັ້ງຂອງການບໍລິຈາກ ໃນ 09 ໂຄງການ ເຊິ່ງທຸກກິດຈະກຳເຫຼົ່ານີ້ ສະແດງໃຫ້ເຫັນວ່າ ທຄຕລ ບໍ່ພຽງແຕ່ດຳເນີນທຸລະກິດເພື່ອຜົນກຳໄລ ຫາກແຕ່ຍັງເປັນຜູ້ຮ່ວມສ້າງສັງຄົມ ແລະ ປະເທດຊາດທີ່ເຂັ້ມແຂງ.

ກ້າວເຂົ້າສູ່ປີ 2026, ທ່າມກາງຄວາມທ້າທາຍຂອງສະພາບແວດລ້ອມເສດຖະກິດພາຍໃນ ແລະ ນານາປະເທດທີ່ຍັງສືບຕໍ່ຜັນແປ ທັງຄວາມຜັນຜວນຂອງອັດຕາແລກປ່ຽນ, ລາຄານ້ຳມັນ ແລະ ຄວາມບໍ່ແນ່ນອນທາງດ້ານເສດຖະກິດ-ການເງິນ, ຄະນະອຳນວຍການ ທຄຕລ ຈະສືບຕໍ່ຂັບເຄື່ອນ ທຄຕລ ໃຫ້ກ້າວໜ້າຢ່າງໝັ້ນຄົງ ດ້ວຍທິດທາງທຸລະກິດທີ່ສູ້ຊົນ ໂດຍຕັ້ງເປົ້າໝາຍກຳໄລສຸດທິ ເພີ່ມຂຶ້ນ 10% ຈາກປີ 2025 ແລະ ຮັກສາ NPL ໃຫ້ຢູ່ໃນລະດັບບໍ່ເກີນ 3% ສອດຄ່ອງກັບວິໄສທັດ **"ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ"** ຂອງ ທຄຕລ ເພື່ອຜົນປະໂຫຍດທີ່ຍືນຍົງຂອງຜູ້ຖືຮຸ້ນ, ລູກຄ້າ ແລະ ສັງຄົມໂດຍລວມ.

ໃນໂອກາດນີ້, ຄະນະອຳນວຍການ ທຄຕລ ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງ ຕໍ່ການນຳທຸກຂັ້ນທີ່ຍາມໃດກໍ່ບໍ່ຢຸດຢັ້ງໃນການເອົາໃຈໃສ່ຊຸກຍູ້ ແລະ ຊີ້ນຳນຳພາ ທຄຕລ ຢ່າງໃກ້ຊິດ ແລະ ຕໍ່ເນື່ອງ ຈົນເຮັດໃຫ້ ທຄຕລ ສາມາດດຳເນີນທຸລະກິດໄດ້ຢ່າງໝັ້ນທ່ຽງ ແລະ ມີທິດທາງທີ່ຊັດເຈນ. ຂໍສະແດງຄວາມຮູ້ບຸນຄຸນ ຢ່າງຈິງໃຈຕໍ່ບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ໄດ້ ມອບຄວາມໄວ້ວາງໃຈ ແລະ ສະໜັບສະໜູນ ທຄຕລ ດ້ວຍຄວາມເຊື່ອໝັ້ນຢ່າງຕໍ່ເນື່ອງ ຕະຫຼອດເຖິງລູກຄ້າທຸກທ່ານ ຜູ້ທີ່ຍາມໃດກໍ່ໄດ້ໃຫ້ກຽດເລືອກໃຊ້ ແລະ ໄວ້ວາງໃຈບໍລິການຂອງ ທຄຕລ ດ້ວຍດີສະເໝີມາ, ຄວາມໄວ້ວາງໃຈ ແລະ ອຸປະຖຳຈາກທ່ານທັງຫຼາຍນີ້ ຈະສືບຕໍ່ເປັນພະລັງສຳຄັນທີ່ຂັບເຄື່ອນໃຫ້ ທຄຕລ ບໍ່ຢຸດຢັ້ງໃນການພັດທະນາ ເພື່ອໃຫ້ສົມກັບການໄວ້ວາງໃຈ ແລະ ຄວາມຄາດຫວັງຂອງທ່ານທຸກຄົນ.

3. ຄຳເຫັນຂອງຄະນະກຳມະການກວດສອບ

ຄະນະກຳມະການກວດສອບຂອງ ທຄຕລ ປະກອບດ້ວຍສະມາຊິກສະພາບໍລິຫານ 3 ທ່ານ, ໃນນັ້ນມີສະມາຊິກອິດສະລະ 2 ທ່ານ ແລະ ສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ 1 ທ່ານ ໂດຍປະທານຄະນະກຳມະການເປັນສະມາຊິກອິດສະລະ ເຊິ່ງໂຄງປະກອບດັ່ງກ່າວສອດຄ່ອງກັບນິຕິກຳທີ່ໃຊ້ບັງຄັບ ແລະ ສາມາດຮັບປະກັນຄວາມເປັນອິດສະລະໃນການປະຕິບັດພາລະບົດບາດໄດ້ຢ່າງມີປະສິດທິຜົນ.



ຕະຫຼອດໄລຍະປີ 2025, ຄະນະກຳມະການກວດສອບໄດ້ດຳເນີນກອງປະຊຸມຢ່າງເປັນປົກກະຕິຕາມຣອບວຽນທີ່ກຳນົດໄວ້ ໂດຍໄດ້ເອົາໃຈໃສ່ຕິດຕາມ ແລະ ພິຈາລະນາຜົນການກວດສອບຈາກທຸກພາກສ່ວນ ທັງຜູ້ກວດສອບຈາກ ທຫລ, ອົງການກວດສອບແຫ່ງລັດ, ກົມສ່ວຍສາອາກອນ ແລະ ຜູ້ກວດສອບອິດສະລະ ທີ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນ. ຈາກການຕິດຕາມດັ່ງກ່າວ, ຄະນະກຳມະການໄດ້ໃຫ້ທິດຊີ້ນຳ ທຄຕລ ໃນການນຳເອົາຂໍ້ຜິບເຫັນ ແລະ ຄຳແນະນຳຂອງຜູ້ກວດສອບ ໄປປັບປຸງແກ້ໄຂຢ່າງທັນສະພາບ ແລະ ສອດຄ່ອງ.

ນອກຈາກນັ້ນ, ຄະນະກຳມະການກວດສອບຍັງໄດ້ຮັບຮອງເອກະສານລາຍງານທາງການເງິນຂອງ ທຄຕລ ປະຈຳ 6 ເດືອນຕົ້ນປີ 2025 ທີ່ຜ່ານການທົບທວນຂອງຜູ້ກວດສອບອິດສະລະ ເພື່ອເປັນພື້ນຖານນຳສະເໜີຕໍ່ສະພາບໍລິຫານພິຈາລະນາຮັບຮອງ ແລະ ເປີດເຜີຍຂໍ້ມູນຕໍ່ຜູ້ຖືຮຸ້ນ ແລະ ນັກລົງທຶນ.

ໂດຍລວມ, ຄະນະກຳມະການເຫັນວ່າ ທຄຕລ ໄດ້ປະຕິບັດຕາມຫຼັກການບັນຊີ ແລະ ດຳເນີນວຽກງານບົນພື້ນຖານລະບຽບຫຼັກການໄດ້ດີ ພ້ອມທັງໄດ້ເອົາໃຈໃສ່ດ້ານການເປີດເຜີຍຂໍ້ມູນຢ່າງໂປ່ງໃສ ຊ່ວຍໃຫ້ຜູ້ຖືຮຸ້ນ, ນັກລົງທຶນ ແລະ ມວນຊົນທົ່ວໄປ ສາມາດເຂົ້າເຖິງຂໍ້ມູນການດຳເນີນທຸລະກິດ ແລະ ຮັບຮູ້ການເຄື່ອນໄຫວທີ່ສຳຄັນຂອງ ທຄຕລ ໃນແຕ່ລະໄລຍະ. ຄະນະກຳມະການກວດສອບຍັງໄດ້ຮັບຄວາມຮ່ວມມືເປັນຢ່າງດີຈາກຄະນະຜູ້ບໍລິຫານ ແລະ ພະນັກງານ ທຄຕລ ທຸກຝ່າຍໃນການໃຫ້ຂໍ້ມູນ ແລະ ເຂົ້າເຖິງເອກະສານຕ່າງໆ ທີ່ຈຳເປັນ ເຊິ່ງຊ່ວຍໃຫ້ການປະຕິບັດໜ້າທີ່ຂອງຄະນະກຳມະການ ເປັນໄປໄດ້ຢ່າງມີປະສິດທິຜົນ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານຄະນະກຳມະການກວດສອບ
ສອນໄຊ ສິລາເພັດ

4. ຄຳເຫັນຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການຄຸ້ມຄອງຄວາມສ່ຽງຂອງ ທຄຕລ ປະກອບດ້ວຍ ສະມາຊິກສະພາບໍລິຫານ 3 ທ່ານ, ໃນນັ້ນມີສະມາຊິກອິດສະຫຼະ 2 ທ່ານ ແລະ ສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ 1 ທ່ານ ເຊິ່ງໂຄງປະກອບດັ່ງກ່າວ ສາມາດຮັບປະກັນປະສິດທິຜົນໃນການຄົ້ນຄວ້າ ແລະ ພິຈາລະນາວຽກງານຄຸ້ມຄອງຄວາມສ່ຽງຂອງ ທຄຕລ ໄດ້ເປັນຢ່າງດີ.



ໃນໄລຍະປີ 2025, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ເອົາໃຈໃສ່ຕິດຕາມການອອກ ແລະ ປັບປຸງນະໂຍບາຍ ແລະ ລະບຽບການກ່ຽວກັບວຽກງານຄຸ້ມຄອງຄວາມສ່ຽງ. ໃນນີ້, ຄະນະກຳມະການໄດ້ຮັບຮອງການປັບປຸງຕົວຊີ້ວັດຄວາມສ່ຽງທີ່ຍອມຮັບໄດ້ໃນດ້ານສິນເຊື່ອ ແລະ ດ້ານ ຕະຫຼາດ ເພື່ອໃຫ້ສອດຄ່ອງກັບສະພາບການຕົວຈິງຂຶ້ນຕື່ມ. ພ້ອມທັງຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດບັນດາໂຄງການ ແລະ ແຜນງານກ່ຽວກັບ ຫຼັກການ Basel II ຂອງ ທຄຕລ ຢ່າງໃກ້ຊິດ.

ຈາກການຕິດຕາມຕົວຊີ້ວັດຄວາມສ່ຽງໃນທຸກດ້ານ ເຫັນໄດ້ວ່າ ໂດຍລວມຕົວຊີ້ວັດສ່ວນຫຼາຍຢູ່ໃນລະດັບທີ່ສາມາດຍອມຮັບໄດ້ ຢ່າງໃດກໍ່ດີ ຍັງມີຕົວຊີ້ວັດຈຳນວນໜຶ່ງທີ່ຕ້ອງໃຫ້ຄວາມສຳຄັນ ເຊັ່ນ: ການປ່ອຍກູ້ໃຫ້ບາງຂະແໜງການເສດຖະກິດ, ການນຳໃຊ້ແຫຼ່ງທຶນໄລຍະສັ້ນເຂົ້າໃນການປ່ອຍກູ້ໄລຍະຍາວ ເຊິ່ງຄະນະກຳມະການໄດ້ໃຫ້ຄຳເຫັນຊີ້ນຳ ທຄຕລ ນຳໄປຄົ້ນຄວ້າຫາມາດຕະການແກ້ໄຂ ແລະ ຕິດຕາມຢ່າງຕໍ່ເນື່ອງ ໂດຍໃຫ້ຄວາມໝັ້ນໃຈວ່າ ສັດສ່ວນທີ່ເກີນລະດັບຍອມຮັບໄດ້ດັ່ງກ່າວ ມີທ່າອ່ຽງຫຼຸດລົງຢ່າງຕໍ່ເນື່ອງ. ຄຽງຄູ່ກັນນັ້ນ, ຄະນະກຳມະການ ກໍ່ໄດ້ຮັບຮອງ ແລະ ໃຫ້ທິດຊີ້ນຳດ້ານນະໂຍບາຍຄຸ້ມຄອງຄວາມສ່ຽງຈຳນວນໜຶ່ງ ເພື່ອຍົກລະດັບວຽກງານຄຸ້ມຄອງຄວາມສ່ຽງຂອງ ທຄຕລ ໄປຕາມຫຼັກການ Basel II ແລະ ມາດຕະຖານສາກົນ ເຊິ່ງຄະນະກຳມະການ ຈະສືບຕໍ່ຕິດຕາມ ແລະ ຊີ້ນຳໃຫ້ ທຄຕລ ດຳເນີນວຽກງານດ້ານການຄຸ້ມຄອງຄວາມສ່ຽງ ໃຫ້ໄດ້ຕາມເປົ້າໝາຍທີ່ວາງໄວ້ຕໍ່ໄປ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ
ຣສ. ທອງເພັດ ຈັນທະນິວົງ

5. ຄຳເຫັນຂອງຄະນະກຳມະການຄຸ້ມຄອງບໍລິຫານ



ຄະນະກຳມະການຄຸ້ມຄອງບໍລິຫານຂອງ ທຄຕລ ປະກອບດ້ວຍສະມາຊິກ 4 ທ່ານ, ໃນນັ້ນມີສະມາຊິກທີ່ເປັນຜູ້ບໍລິຫານ 1 ທ່ານ,ສະມາຊິກອິດສະລະ 2 ທ່ານ ເຊິ່ງ 1 ໃນນັ້ນດຳລົງຕຳແໜ່ງປະທານຄະນະກຳມະການ ແລະ ສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ 1 ທ່ານ. ຄະນະກຳມະການນີ້ ມີພາລະບົດບາດສຳຄັນໃນການຊ່ວຍສະພາບໍລິຫານ ຕິດຕາມ ແລະ ຊີ້ນຳຄະນະອຳນວຍການ ທຄຕລ ແລະ ພະແນກການທີ່ກ່ຽວຂ້ອງ ໃຫ້ຈັດຕັ້ງປະຕິບັດແຜນທຸລະກິດໃນແຕ່ລະໄລຍະ ໄດ້ຢ່າງມີປະສິດທິຜົນ.

ຕະຫຼອດໄລຍະປີ 2025, ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ດຳເນີນກອງປະຊຸມຢ່າງເປັນປົກກະຕິ ເພື່ອຮັບຟັງລາຍງານຜົນການດຳເນີນທຸລະກິດຂອງ ທຄຕລ ໃນແຕ່ລະໄລຍະ ພ້ອມທັງໄດ້ໃຫ້ທິດຊີ້ນຳທີ່ຈຳເປັນໃຫ້ແກ່ທຸກພາກສ່ວນ ໃນການປັບປຸງ ແລະ ແກ້ໄຂຂໍ້ຫຍຸ້ງຍາກຕ່າງໆ ເພື່ອໃຫ້ສາມາດບັນລຸຜົນດຳເນີນທຸລະກິດຕາມເປົ້າໝາຍແຜນການທີ່ວາງໄວ້. ຄຽງຄູ່ກັນນັ້ນ, ທຄຕລ ກໍ່ໄດ້ຈັດກອງປະຊຸມທົບທວນຜົນດຳເນີນທຸລະກິດປະຈຳໄຕມາດ ຢ່າງເປັນປົກກະຕິ ເຊິ່ງບັນດາພະແນກ ແລະ ສາຂາທົ່ວປະເທດ ໄດ້ລາຍງານຜົນດຳເນີນງານ ແລະ ສະເໜີແຜນດຳເນີນງານໃນຕໍ່ໜ້າ ໃຫ້ຄະນະອຳນວຍການຮັບຊາບ ແລະ ໃຫ້ຄຳເຫັນຊີ້ນຳ ເພື່ອຮັບປະກັນຄວາມຄ່ອງຕົວ ແລະ ການປະສານງານພາຍໃນໃຫ້ດີຂຶ້ນໃນທຸກດ້ານ.

ຈາກການຕິດຕາມ ແລະ ຊີ້ນຳດັ່ງກ່າວ, ເຫັນໄດ້ຢ່າງຊັດເຈນວ່າ ການຈັດຕັ້ງປະຕິບັດແຜນການໃນທຸກດ້ານ ໄດ້ຮັບການເອົາໃຈໃສ່ຢ່າງດີທັງໃນລະດັບສະພາບໍລິຫານ ຜ່ານຄະນະກຳມະການຄຸ້ມຄອງບໍລິຫານ ແລະ ໃນລະດັບຄະນະອຳນວຍການ ຜ່ານກອງປະຊຸມທົບທວນປະຈຳໄຕມາດ ຊຶ່ງກົນໄກດັ່ງກ່າວໄດ້ຊ່ວຍໃຫ້ ທຄຕລ ມີຂໍ້ມູນທີ່ຖືກຕ້ອງ ທັນເວລາ ໃນການຄົ້ນຄວ້າ ແລະ ປັບປຸງການຄຸ້ມຄອງບໍລິຫານ ຢ່າງທັນສະພາບ ເພື່ອຮັບປະກັນຜົນສຳເລັດໃນການດຳເນີນທຸລະກິດ ຕາມທິດທາງ ແລະ ເປົ້າໝາຍທີ່ວາງໄວ້ ເຊິ່ງເຫັນໄດ້ຈາກຜົນກຳເນີນທຸລະກິດທີ່ມີປະສິດທິຜົນສາມາດສ້າງກຳໄລໄດ້ລື່ນແຜນການ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານຄະນະກຳມະການຄຸ້ມຄອງບໍລິຫານ
ລັດດາວັນ ຊົງວິໄລ

6. ຄຳເຫັນຂອງຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ



ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ປະກອບດ້ວຍ ສະມາຊິກສະພາບໍລິຫານ 3 ທ່ານ, ໃນນັ້ນມີສະມາຊິກທີ່ມາຈາກຄະນະ ອຳນວຍການ 1 ທ່ານ, ສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ 2 ທ່ານ. ເຊິ່ງມີ ສະມາຊິກອິດສະລະ 1 ທ່ານ ດຳລົງຕຳແໜ່ງປະທານຄະນະກຳມະການ ເຊິ່ງໂຄງປະກອບດັ່ງກ່າວ ສາມາດຮັບປະກັນຄວາມໂປ່ງໃສ ແລະ ປະ ສິດທິຜົນໃນການປະຕິບັດໜ້າທີ່ໄດ້ຢ່າງເໝາະສົມ.

ໃນໄລຍະປີ 2025, ຄະນະກຳມະການ ໄດ້ປະຕິບັດໜ້າທີ່ຂອງຕົນຢ່າງ ເປັນປົກກະຕິ ໂດຍໄດ້ຮັບຮອງການແຕ່ງຕັ້ງ ແລະ ສັບຊ້ອນຄະນະຜູ້ ບໍລິຫານຂັ້ນສູງ ຕາມຄວາມຮຽກຮ້ອງຕ້ອງການຂອງ ທຄຕລ ລວມທັງ ການຮັບຮອງການສັບຊ້ອນ ແລະ ແຕ່ງຕັ້ງພະນັກງານຂັ້ນຫົວໜ້າ ແລະ ຮອງຫົວໜ້າ ຂອງພະແນກ, ສູນ ແລະ ສາຂາ ເພື່ອຮັບປະກັນການຈັດສັນ ບຸກຄົນທີ່ເໝາະສົມ ສອດຄ່ອງກັບຄວາມຕ້ອງການຂອງແຕ່ລະໜ້າວຽກ ໂດຍຖືການສັບຊ້ອນບຸກຄະລາກອນ ໃຫ້ເປັນລະບົບ ແລະ ເປັນຮອບ ວຽນ ເພື່ອຜັດທະນາຜູ້ນຳລຸ້ນໃໝ່ຂອງ ທຄຕລ ຢ່າງຕໍ່ເນື່ອງ.

ໃນດ້ານການຄຸ້ມຄອງຄ່າຕອບແທນ, ຄະນະກຳມະການ ໄດ້ມີການທົບທວນຄົ້ນຄວ້າ ແລະ ນຳສະເໜີການປັບປຸງນະໂຍບາຍສຳລັບ ພະນັກງານ ທຄຕລ ໃຫ້ສອດຄ່ອງກັບລະດັບຄ່າຄອງຊີບ ແລະ ສະພາບເສດຖະກິດ ໃນປັດຈຸບັນ ເພື່ອໃຫ້ພະນັກງານທຸກທ່ານ ມີ ຄວາມໝັ້ນໃຈ ແລະ ຄວາມອຸ່ນໃຈໃນການສືບຕໍ່ອຸທິດຕົນ ປະກອບສ່ວນໃຫ້ແກ່ ທຄຕລ ຢ່າງເຕັມກຳລັງ ແລະ ເພື່ອໃຫ້ຮັກສາໄດ້ ບຸກຄະລາກອນຜູ້ທີ່ມີຄວາມຮູ້ຄວາມສາມາດ. ຄະນະກຳມະການ ຈະສືບຕໍ່ຕິດຕາມ ແລະ ຮັບປະກັນໃຫ້ ທຄຕລ ມີບຸກຄະລາກອນທີ່ ມີຄຸນນະພາບ ສາມາດຮອງຮັບການຂະຫຍາຍຕົວຂອງ ທຄຕລ ຕາມທິດທາງທີ່ໄດ້ວາງໄວ້ໃນແຜນຍຸດທະສາດ 2025–2029.

ດ້ວຍຄວາມນັບຖືຢ່າງສູງ,

ປະທານຄະນະກຳມະການຄັດເລືອກ
ແລະ ກຳນົດຄ່າຕອບແທນ
ນຸນຕາ ດາຣາວີ

III. ຂໍ້ມູນກ່ຽວກັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

1. ປະຫວັດການສ້າງຕັ້ງ ແລະ ການເຕີບໃຫຍ່ຂະຫຍາຍຕົວ

1.1 ການສ້າງຕັ້ງ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຖືກສ້າງຕັ້ງຂຶ້ນ ຕາມຂໍ້ຕົກລົງສ້າງຕັ້ງທະນາຄານ ສະບັບ ເລກທີ 129/ທຄຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງລັດ (ທະນາຄານແຫ່ງ ສປປ ລາວ ໃນປະຈຸ ບັນ) ຊຶ່ງໃນເວລານັ້ນ ທຄຕລ ມີຊື່ວ່າ ທະນາຄານການຄ້າຕ່າງປະເທດລາວ. ແຕ່ເຄົ້າກຳເນີດຂອງ ທຄຕລ ແມ່ນເລີ່ມມີມາ ນັບຕັ້ງແຕ່ການສະຖາປະນາ ສປປ ລາວ ໃນປີ 1975 ໂດຍໃນໄລຍະປີ 1975 – 1989 ທຄຕລ ເປັນພະແນກໜຶ່ງຂອງທະ ນາຄານແຫ່ງລັດ ທີ່ຮັບຜິດຊອບການຊຳລະຕ່າງປະເທດ ແລະ ຄຸ້ມຄອງເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອຈາກຕ່າງປະເທດ. ໂດຍປະຕິບັດຕາມແນວທາງປ່ຽນແປງໃໝ່ຂອງພັກ ແລະ ອີງຕາມຄວາມຮຽກຮ້ອງຕ້ອງການທາງທຸລະກິດໃນໄລຍະໃໝ່, ລັດຖະບານ ຈຶ່ງໄດ້ເຫັນດີຫັນ ທຄຕລ ມາເປັນທະນາຄານທຸລະກິດຢ່າງເຕັມຮູບແບບໃນວັນທີ 1 ພະຈິກ 1989 ຕາມຂໍ້ຕົກ ລົງຂອງທະນາຄານແຫ່ງລັດດັ່ງກ່າວ.

ການຫັນເປັນທະນາຄານທຸລະກິດ ຖືໄດ້ວ່າເປັນຈຸດລິເລີ່ມແຫ່ງການດຳເນີນກິດຈະການທະນາຄານຂອງ ທຄຕລ ຢ່າງຄົບຊຸດຂຶ້ນກວ່າເກົ່າ ໂດຍມີການໃຫ້ບໍລິການຮັບຝາກ, ການປ່ອຍກູ້, ການຄ້ຳປະກັນ, ການຮຽກເກັບ ແລະ ການຊຳລະ ພາຍໃນ ແລະ ຕ່າງປະເທດ. ອັນໄດ້ເຮັດໃຫ້ ທຄຕລ ມີເງື່ອນໄຂພັດທະນາຕົນເອງຂຶ້ນເປັນກ້າວໆ ແລະ ກາຍເປັນທະນາ ຄານທຸລະກິດຂອງລັດທີ່ມີຄວາມເຂັ້ມແຂງ ແລະ ມີເງື່ອນໄຂຄົບຖ້ວນໃນການຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ ເປັນ ທະນາຄານແຫ່ງທຳອິດ ຊຶ່ງໃນວັນທີ 23 ທັນວາ 2010 ທຄຕລ ໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ ແລະ ໄດ້ປ່ຽນ ຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນ ທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ່ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ມາຮອດວັນທີ 15 ກໍລະກົດ 2011, ກະຊວງການເງິນ ໄດ້ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ Compagnie Financière de la BRED (COFIBRED) ຊຶ່ງເປັນບໍລິສັດ ໃນເຄືອຂອງ BRED ຊຶ່ງເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ.

ໃນປີ 2017 ທຄຕລ ໄດ້ມີການເພີ່ມທຶນ ໂດຍການສະເໜີຂາຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ໃຫ້ແກ່ສາ ທະລະນະຊົນໃນຕະຫຼາດຫຼັກຊັບລາວ ຕາມການອະນຸຍາດຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ໃນວັນທີ 17 ສິງຫາ 2017 ຊຶ່ງສາມາດເພີ່ມທຶນຈົດທະບຽນໄດ້ຕື່ມຈຳນວນ 355,728,500,000 ກີບ (71,145,700 ຮຸ້ນ) ຕາມໃບຢັ້ງຢືນ ຂອງຕະຫຼາດຫຼັກຊັບລາວ ສະບັບເລກທີ 01 /ຕລຊລ, ລົງວັນທີ 15 ກັນຍາ 2017. ດັ່ງນັ້ນ, ທຶນຈົດທະບຽນຂອງ ທຄຕລ ຈຶ່ງໄດ້ເພີ່ມຂຶ້ນຈາກເດີມ 682,888 ລ້ານກີບ ມາເປັນ 1,038,617 ລ້ານກີບ.

ເພື່ອສືບຕໍ່ພັດທະນາ ທຄຕລ ໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງໝັ້ນຄົງ ລັດຖະບານຈຶ່ງໄດ້ເປີດໂອກາດໃຫ້ມວນຊົນ ແລະ ນັກລົງທຶນທົ່ວໄປ ສາມາດຮ່ວມເປັນເຈົ້າຂອງ ທຄຕລ ໃຫ້ຫຼາຍຂຶ້ນດ້ວຍການຫຼຸດສັດສ່ວນການຖືຮຸ້ນຢູ່ ທຄຕລ ລົງ ເພື່ອສະເໜີຂາຍຮຸ້ນດັ່ງກ່າວໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ ເຊິ່ງໃນວັນທີ 11 ຕຸລາ 2019 ສຳນັກງານຄະນະ ກຳມະການຄຸ້ມຄອງຫຼັກຊັບ ໄດ້ອະນຸມັດການຫຼຸດສັດສ່ວນຮຸ້ນດັ່ງກ່າວ ແລະ ອີງຕາມການຢັ້ງຢືນຂອງສຳນັກງານຄະນະ ກຳມະການຄຸ້ມຄອງຫຼັກຊັບ ໃນວັນທີ 29 ພະຈິກ 2019 ໄດ້ຢັ້ງຢືນວ່າ ທຄຕລ ໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາ ສ່ວນ 10% ຂອງ ທຄຕລ.

ໃນວັນທີ 18 ກຸມພາ 2025 ຕະຫຼາດຫຼັກຊັບລາວໄດ້ອະນຸມັດ ການປ່ຽນແປງມູນຄ່າກຳນົດຮຸ້ນ ຫຼື ມູນຄ່າ ໜ້າຮຸ້ນ (Par Value) ຂອງ ທຄຕລ ໂດຍການແຕກຮຸ້ນອອກ (Stock Split) ຕາມອັດຕາສ່ວນ 1/5 ໝາຍຄວາມວ່າຈາກເດີມ ລາຄາ 5,000 ກີບ/ຮຸ້ນ ເປັນລາຄາ 1,000 ກີບ/ຮຸ້ນ, ເຮັດໃຫ້ຈຳນວນຮຸ້ນຂອງ ທຄຕລ ເພີ່ມຂຶ້ນຈາກເດີມ 207,723,300 ຮຸ້ນ ເປັນ 1,038,616,500 ຮຸ້ນ ໂດຍທຶນຈົດທະບຽນຍັງຄົງເທົ່າເດີມເພື່ອເພີ່ມສະພາບຄ່ອງຂອງການຊື້-ຂາຍຮຸ້ນຂອງ ທຄຕລ ໃນຕະຫຼາດຫຼັກຊັບລາວ ແລະ ເພື່ອເຮັດໃຫ້ນັກລົງທຶນສາມາດເຂົ້າເຖິງຮຸ້ນຂອງ ທຄຕລ ໄດ້ຫຼາຍຂຶ້ນ ດ້ວຍລາຄາທີ່ຖືກລົງ ແຕ່ໃນຂະນະດຽວກັນມູນຄ່າຫຼັກຊັບຕາມລາຄາຕະຫຼາດຍັງຄົງເດີມ ຍັງຄົງຮັກສາສັດສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນໄວ້ຕາມເດີມ.

ໃນວັນທີ 27 ສິງຫາ 2025 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອອກໃບອະນຸຍາດໃຫ້ ທຄຕລ ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ເປັນຈຳນວນຮຸ້ນ 506,255,500 ຮຸ້ນ ໃນລາຄາ 1,640 ກີບ/ຮຸ້ນ ສຳລັບຜູ້ຖືຮຸ້ນເດີມ 1,730 ກີບ/ຮຸ້ນ ສຳລັບມວນຊົນທົ່ວໄປ ແລະ ໃນວັນທີ 28 ຕຸລາ 2025 ທຄຕລ ສາມາດອອກຈຳໜ່າຍຮຸ້ນສຳເລັດ ເຊິ່ງໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍມູນຄ່າລະດົມທຶນ 841,911,622,580 ກີບ ເຮັດໃຫ້ທຶນຈົດທະບຽນເພີ່ມຂຶ້ນ ຈຳນວນ 506,255,500,000 ກີບ.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60%, ນັກລົງທຶນພາຍໃນ ແລະ ນັກລົງທຶນຕ່າງປະເທດຖືຮຸ້ນ 30% ແລະ ຄູ່ຮ່ວມຮຸ້ນທາງຍຸດທະສາດຖືຮຸ້ນ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

1.2 ທຶນຈົດທະບຽນ

ທຶນຈົດທະບຽນຂອງ ທຄຕລ ນະວັນທີ 31 ທັນວາ 2025 ແມ່ນ 1,544,872 ລ້ານກີບ (ນະວັນທີ 31 ທັນວາ 2024 ແມ່ນ 1,038,616 ລ້ານກີບ) ອີງຕາມໃບທະບຽນວິສາຫະກິດປັດຈຸບັນ.

1.3 ໂຄງສ້າງການຖືຮຸ້ນ

ໂຄງສ້າງການຖືຮຸ້ນຂອງ ທຄຕລ ນະວັນທີ 31 ທັນວາ 2025 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	ສັດສ່ວນ
ລັດຖະບານ (ຕາງໜ້າໂດຍກະຊວງການເງິນ)	926,922,633	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ (COFIBRED)	154,487,295	10%
ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດອື່ນໆ (*)	463,462,072	30%
ລວມທັງໝົດ	**1,544,872,000**	**100%**

(*) ແຕ່ລະບຸກຄົນທຳມະດາ ຫຼື ອົງກອນ ແມ່ນອະນຸຍາດໃຫ້ຖືຮຸ້ນໄດ້ສູງສຸດ 2% ຂອງຈຳນວນຮຸ້ນທັງໝົດ.

1.4 ທຸລະກິດ

ທຸລະກິດຕົ້ນຕໍຂອງ ທຄຕລ ແມ່ນສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງ ທຄຕລ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການ

ບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າ ອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

1.5 ຫ້ອງການ ແລະ ສາຂາ

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງ ວຽງຈັນ. ນະວັນທີ 31 ທັນວາ 2025 ທະນາຄານມີ 01 ສຳນັກງານໃຫຍ່, 7 ບໍລິສັດຮ່ວມທຶນ, 21 ສາຂາ, 101 ໜ່ວຍ ບໍລິການ ແລະ 9 ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

2. ວິໄສທັດ

ທຄຕລ ໄດ້ກຳນົດວິໄສທັດຂອງຕົນ ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າ ໝາຍ ແລະ ວັດຖຸປະສົງຄື: "**ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ".**

3. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ບັນລຸຕາມວິໄສທັດ ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ ນັ້ນ ພາລະກິດຫຼັກທີ່ສຳຄັນ ຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ແມ່ນ ພັດທະນາປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະການປ່ຽນໃໝ່ ໂດຍຖື ເອົາລູກຄ້າເປັນໃຈກາງ; ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການ BASEL II; ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ ນຳໃຊ້ນະວັດຕະກຳໃໝ່ໃນທຸລະກິດ ທັນ ສູ່ຮູບແບບ Digital Banking ຢ່າງເຕັມຮູບແບບ; ພັດທະນາລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພ Cyber Security ໄດ້ມາດຕະຖານສາກົນ; ພັດທະນາບຸກຄະລາກອນໃນແຕ່ລະ ດ້ານໃຫ້ມີຄວາມຊຳນິຊຳນານ, ເປັນມືອາຊີບດ້ານການບໍລິການທະນາຄານ; ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ ບໍລິການ; ສ້າງຜົນປະໂຫຍດສູງສຸດໃນແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ ແລະ ປະກອບເປັນສ່ວນໜຶ່ງຂອງສັງຄົມ; ສ້າງ ບັນດາເງື່ອນໄຂດ້ານຕ່າງໆ ເພື່ອປະຕິບັດໄດ້ບັນດາມາດຕະຖານຕ່າງໆຂອງສາກົນ.

4. ຄຸນຄ່າຫຼັກ

ທຄຕລ ຍຶດຖືຄຸນຄ່າຫຼັກ 5 ປະການ ດັ່ງລຸ່ມນີ້:

1) ຖືເອົາລູກຄ້າເປັນສູນກາງ;
2) ຍຶດໝັ້ນໃນຄວາມຊື່ສັດ;
3) ເຮັດວຽກຢ່າງມີປະສິດທິພາບ;
4) ຮັບຮູ້ການປ່ຽນແປງ;
5) ມີຄວາມຮັບຜິດຊອບຕໍ່ສັງຄົມ;

5. ບໍລິສັດໃນເຄືອຂ່າຍ

ບັນດາບໍລິສັດໃນເຄືອຂ່າຍຂອງ ທຄຕລ ນະວັນທີ 31 ທັນວາ 2025 ມີດັ່ງນີ້:

ລຳດັບ	ຊື່ບໍລິສັດ	ປະເພດທຸລະກິດ	ທີ່ຕັ້ງ	ຮຸ້ນຂອງ ທຄຕລ	ຊື່ຄູ່ຮ່ວມຖືຮຸ້ນ
1	ທະນາຄານຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ	ທະນາຄານ	ສປປ ລາວ	25%	- BIDV (65%) - ບໍລິສັດ ສຸກຮຸ່ງເຮືອງ (10%)
2	ບໍລິສັດ ປະກັນໄພລາວ-ຫວຽດ ຈຳກັດ	ປະກັນໄພ	ສປປ ລາວ	35%	BIC (Vietnam) 65%
3	ທະນາຄານ ລາວ-ຝຣັ່ງ ຈຳກັດ	ທະນາຄານ	ສປປ ລາວ	30%	COFIBRED 70%
4	ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	ຫຼັກຊັບ	ສປປ ລາວ	70%	KTZMICO 30%
5	ທະນາຄານ ລາວ-ຈີນ ຈຳກັດ	ທະນາຄານ	ສປປ ລາວ	39.87%	FUDIAN BANK 51%
6	ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ	ການຄຸ້ມຄອງ ລະບົບຊຳລະສະ ສາງທຸລະກຳອີ ເລັກໂທຣນິກ	ສປປ ລາວ	20%	1. ທະນາຄານແຫ່ງ ສປປ ລາວ 25%; 2. ບໍລິສັດຢູນຽນເພສາກົນ 15% 3. ທະນາຄານພັດທະນາລາວ 10% 4. ທະນາຄານສົ່ງເສີມກະສິກຳ 10% 5. ທະນາຄານຮ່ວມພັດທະນາ 5% 6. ທະນາຄານຮ່ວມທຸລະກິດລາວ-ຫວຽດ 5% 7. ທະນາຄານເອັສທີ ຈຳກັດ 5% 8. ທະນາຄານ ບີໄອຊີ ລາວ ຈຳກັດ 5%
7	ບໍລິສັດ ຕະຫຼາດແລກປ່ຽນ ເງິນຕາຕ່າງປະເທດລາວ ຈຳກັດ	ການບໍລິການ ແລກປ່ຽນ ເງິນຕາ ຕ່າງປະເທດ (ເອເລັກໂທຣ ນິກ)	ສປປ ລາວ	10%	1. ທະນາຄານແຫ່ງ ສປປ ລາວ 44% 2. ທະນາຄານສົ່ງເສີມກະສິກຳ 5% 3. ທະນາຄານເອັສທີ ຈຳກັດ 5% 4. ທະນາຄານບີໄອຊີ 5% 5. ທະນາຄານຮ່ວມທຸລະກິດລາວ-ຫວຽດ 5% 6. ທະນາຄານພັດທະນາລາວ 5% 7. ທະນາຄານອິນໂດຈີນ ຈຳກັດ 5% 8. ທະນາຄານລາວ-ຝຣັ່ງ ຈຳກັດ 5% 9. ທະນາຄານຮ່ວມພັດທະນາ 5% 10. ທະນາຄານພົ້ງສະຫວັນ 5% 11. ທະນາຄານມາຮຸຣານເຈແປນລາວ 1%

IV. ສະພາບເສດຖະກິດໃນປີ 2025 ແລະ ແນວໂນ້ມສຳລັບປີ 2026

1. ສະພາບການພົ້ນເດັ່ນຂອງສາກົນ ແລະ ພາກພື້ນ

ອີງຕາມບົດລາຍງານຂອງກອງທຶນການເງິນສາກົນ (IMF) ເສດຖະກິດໂລກຂະຫຍາຍ 3.4% ໃນປີ 2025 ເຊິ່ງສູງຂຶ້ນເລັກນ້ອຍເມື່ອທຽບກັບປີ 2024 (3.3%). ຕົວເລກດັ່ງກ່າວສະແດງໃຫ້ເຫັນວ່າເສດຖະກິດໂລກມີການປັບຕົວດີຂຶ້ນໃນບາງສ່ວນ ແຕ່ກໍຍັງປະເຊີນກັບຄວາມບໍ່ແນ່ນອນຫຼາຍດ້ານປັດໃຈສ່ຽງທີ່ສຳຄັນປະກອບມີ: ຄວາມຜັນຜວນຂອງຕະຫຼາດໃນສາກົນທີ່ສົ່ງຜົນຕໍ່ລາຄາຄຳ ແລະ ລາຄານ້ຳມັນໃນຕະຫຼາດໂລກ, ການເພີ່ມຂຶ້ນຂອງພາສີນຳເຂົ້າທີ່ສົ່ງຜົນກະທົບຕໍ່ການຄ້າສາກົນ, ອຸປະສັກທາງການຄ້າທີ່ສູງຂຶ້ນ, ນະໂຍບາຍການເງິນທີ່ບໍ່ມີສະຖຽນລະພາບ, ຂໍ້ຂັດແຍ້ງທາງດ້ານການທະຫານ, ຄວາມເຄັ່ງຕຶງທາງການເມືອງຂອງປະເທດມະຫາອຳນາດທີ່ໄດ້ສົ່ງຜົນກະທົບເປັນວົງກວ້າງ, ໄພພິບັດທຳມະຊາດທີ່ຮຸນແຮງຂຶ້ນຈາກການປ່ຽນແປງຂອງສະພາບອາກາດ, ລວມທັງຄວາມຜັນຜວນຂອງຕະຫຼາດການເງິນ. ປັດໃຈເຫຼົ່ານີ້ສົ່ງຜົນໃຫ້ນັກລົງທຶນ, ທຸລະກິດ ແລະ ລັດຖະບານປະສົບກັບຄວາມທ້າທ້າຍໃນການວາງແຜນພັດທະນາເສດຖະກິດໄລຍະຍາວ[1].

2. ສະພາບເສດຖະກິດມະຫາພາກຂອງ ສປປ ລາວ 2025

ໃນປີ 2025 ສະພາບເສດຖະກິດຂອງ ສປປ ລາວ ໂດຍລວມເສດຖະກິດແມ່ນຢູ່ໃນຊ່ວງຟື້ນຕົວດີຂຶ້ນ ແຕ່ກໍຍັງປະເຊີນກັບຄວາມສ່ຽງຫຼາຍດ້ານອັນເນື່ອງມາຈາກສະພາບແວດລ້ອມເສດຖະກິດໂລກທີ່ມີຄວາມບໍ່ແນ່ນອນສູງ. ປັດໄຈສ່ຽງສຳຄັນປະກອບມີ: (1) ຄວາມເຄັ່ງຕຶງທາງການຄ້າໂລກໂດຍສະເພາະມາດຕະການກຳນົດອັດຕາພາສີຂອງສະຫະລັດອາເມລິກາທີ່ສົ່ງຜົນກະທົບຕໍ່ຫ່ວງໂສ້ການຜະລິດ ແລະ ການສົ່ງອອກໃນລະດັບພາກພື້ນ ແລະ ໂລກ; (2) ຄວາມຂັດແຍ້ງທາງພູມີສາດການເມືອງ - ການທະຫານໃນຫຼາຍພາກພື້ນຂອງໂລກ; (3) ການປັບປ່ຽນນະໂຍບາຍເສດຖະກິດຂອງບັນດາປະເທດມະຫາອຳນາດທີ່ສົ່ງຜົນໂດຍກົງຕໍ່ກະແສການລົງທຶນ ແລະ ການຄ້າສາກົນ; (4) ຜົນກະທົບຈາກໄພທຳມະຊາດທີ່ສ້າງຄວາມເສຍຫາຍຕໍ່ຜົນຜະລິດກະສິກຳ ແລະ (5) ການປ່ຽນແປງຂອງດິນຟ້າອາກາດທີ່ມີແນວໂນ້ມຮຸນແຮງຂຶ້ນຢ່າງຕໍ່ເນື່ອງ. ບັນຫາດັ່ງກ່າວສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມຕໍ່ການຜະລິດສິນຄ້າ, ການສົ່ງອອກ, ການດຶງດູດການລົງທຶນ ແລະ ການຂະຫຍາຍຕົວຂອງຂະແໜງການບໍລິການຂອງ ສປປ ລາວ[2]. ດັ່ງນັ້ນ, ການຮັກສາສະຖຽນລະພາບເສດຖະກິດມະຫາພາກຄຽງຄູ່ກັບການຍົກສູງຄວາມສາມາດໃນການຮັບມືກັບຄວາມສ່ຽງຈາກພາຍນອກຈຶ່ງເປັນພາລະກິດສຳຄັນທີ່ຕ້ອງສືບຕໍ່ໃຫ້ຄວາມສຳຄັນໃນຕໍ່ໜ້າ.

ອີງຕາມແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດປະຈຳປີ 2026, ຕົວເລກລວມຍອດຜະລິດຕະພັນພາຍໃນ (GDP) ຂອງ ສປປ ລາວ ປີ 2025 ຂະຫຍາຍຕົວ 4.8% ເຊິ່ງເທົ່າກັນກັບມະຕິຂອງສະພາແຫ່ງຊາດກຳນົດໄວ້ 4.8%[3] ແລະ ອີງຕາມລາຍງານຂອງອົງການ IMF ຕົວເລກລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວຢູ່ໃນລະດັບ 4.5%[4]. ແຕ່ເຖິງຢ່າງໃດກໍ່ຕາມ, ສະພາບການພາຍໃນປະເທດຍັງມີປັດໄຈທີ່ເປັນທ່າແຮງຊຸກຍູ້ໃຫ້ເສດຖະກິດເຕີບໂຕ, ເປັນຕົ້ນແມ່ນຂະແໜງການທ່ອງທ່ຽວ ທີ່ມີການຟື້ນຕົວຂຶ້ນໂດຍຈຳນວນນັກທ່ອງທ່ຽວຕ່າງປະເທດເພີ່ມຂຶ້ນ ໂດຍສະເພາະຫຼັງຈາກການເປີດໃຊ້ທາງລົດໄຟ ລາວ-ຈີນ ທີ່ຊ່ວຍສ້າງຄວາມສະດວກໃນການເດີນທາງ ແລະ ຍົກລະດັບປະສິດທິພາບຂອງລະບົບໂລຈິສຕິກ; ຄຽງຄູ່ກັບການຜະລິດກະສິກຳເພື່ອການສົ່ງອອກ ທີ່ມີລັກສະນະຟື້ນຕົວ ແລະ ຂະຫຍາຍຕົວດີຂຶ້ນ. ປັດໄຈເຫຼົ່ານີ້ຈະເປັນກົນໄກສຳຄັນໃນການດຶງດູດການໄຫຼເຂົ້າຂອງເງິນຕາຕ່າງປະເທດເຂົ້າສູ່ລະບົບເສດຖະກິດໃຫ້ມີປະລິມານສູງຂຶ້ນກວ່າໄລຍະຜ່ານມາ. ພ້ອມທັງເປັນທ່າແຮງສຳຄັນຕໍ່ການຂະຫຍາຍຕົວທາງເສດຖະກິດຂອງ ສປປ ລາວ ໃນຕໍ່ໜ້າ.

---

[1] World Economic Outlook, October 2025; Global Economy in Flux, Prospects Remain Dim

[2] https://www.lsb.gov.la/

[3] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປີ 2026

[4] Lao P.D.R. 2025 Article IV Consultation: IMF Staff Concluding Statement

ຕາຕະລາງ 1: ການຂະຫຍາຍໂຕເສດຖະກິດ (%)

ລາຍລະອຽດ	2025	2024	2023	2022	2021
GDP	4.8	4.3	4.2	4.4	3.5
ກະສິກຳ	3.5	1.4	3.4	3.4	2.5
ອຸດສາຫະກຳ	5.1	4.7	3.1	4.4	6.1
ບໍລິການ	5.2	5.1	5.6	5.0	1.4
ພາສີອາກອນຜະລິດຕະພັນສຸດທິ	4.2[5]	3.9[6]	3.8	3.9	3.1

ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ:

ອັດຕາເງິນເຟີ້ໃນປີ 2025 ເຫັນວ່າມີການເໜັງຕີງຄ່ອຍໆຫຼຸດລົງໃນແຕ່ລະເດືອນ ສະເລ່ຍໝົດປີແມ່ນຢູ່ໃນລະດັບ 5.6% ເຊິ່ງຫຼຸດລົງຫຼາຍເມື່ອທຽບກັບເດືອນມັງກອນ 2025 ຢູ່ໃນລະດັບ 15.5%. ສະແດງໃຫ້ເຫັນວ່າອັດຕາເງິນເຟີ້ ຂອງ ສປປ ລາວ ມີການສະຖຽນ ແລະ ມີທ່າອ່ຽງຄ່ອຍໆຫຼຸດລົງເທື່ອລະກ້າວ. ໃນນັ້ນ, ໝວດສິນຄ້າທີ່ເພີ່ມຂຶ້ນສູງກວ່າໝູ່ແມ່ນໝວດທີ່ພັກອາໄສ, ນ້ຳປະປາໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ ເພີ່ມຂຶ້ນ 18.1%, ໝວດຮັກສາສຸຂະພາບ ແລະ ຢາເພີ່ມຂຶ້ນ 14.4%, ໝວດການສຶກສາເພີ່ມຂຶ້ນ 11.4%; ໝວດເຄື່ອງນຸ່ງຫົ່ມ ແລະ ເກີບເພີ່ມຂຶ້ນ 8.1%; ໝວດເຫຼົ້າ ແລະ ຢາສູບ ເພີ່ມຂຶ້ນ 7.2%; ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 7.1%; ໝວດສິນຄ້າ ແລະ ບໍລິການອື່ນໆ ເພີ່ມຂຶ້ນ 29.2%. ສະຫຼຸບລວມແລ້ວ, ການເພີ່ມຂຶ້ນຂອງອັດຕາເງິນເຟີ້ເດືອນ ທັນວາ 2025 ສ່ວນໜຶ່ງແມ່ນມາຈາກການເພີ່ມຂຶ້ນຂອງລາຄາໄຟຟ້າ, ນ້ຳປະປາ ແລະ ການປັບຂຶ້ນຂອງລາຄາເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ໃນເຮືອນທີ່ພົວພັນກັບອັດຕາແລກປ່ຽນເງິນບາດໄທ[7].

ໃນປີ 2025 ການເຄື່ອນໄຫວຂອງອັດຕາແລກປ່ຽນໃນລະບົບທະນາຄານມີການປ່ຽນແປງທີ່ສຳຄັນດັ່ງນີ້: ສຳລັບອັດຕາແລກປ່ຽນເງິນໂດລາສະຫະລັດ ໄດ້ປັບຕົວຫຼຸດລົງຈາກ 21,681.74 ກີບ/ໂດລາ (ເດືອນ 01/2025) ມາເປັນ 21,596.18 ກີບ/ໂດລາ (ເດືອນ 12/2025), ເຊິ່ງສະແດງເຖິງການແຂງຄ່າຂຶ້ນເລັກນ້ອຍຂອງເງິນກີບຕໍ່ກັບໂດລາ ແລະ ສຳລັບອັດຕາແລກປ່ຽນເງິນບາດ ໄດ້ປັບຕົວເພີ່ມຂຶ້ນຈາກ 632.94 ກີບ/ບາດ (ເດືອນ 01/2025) ມາຢູ່ທີ່ 684.15 ກີບ/ບາດ (ເດືອນ 12/2025) ເຊິ່ງສະແດງເຖິງການອ່ອນຄ່າລົງຂອງເງິນກີບຕໍ່ກັບບາດໄທຢ່າງຕໍ່ເນື່ອງ.

ການປ່ຽນແປງຂອງອັດຕາແລກປ່ຽນດັ່ງກ່າວສົ່ງຜົນກະທົບຕໍ່ເສດຖະກິດຫຼາຍດ້ານ ໂດຍສະເພາະລາຄາສິນຄ້ານຳເຂົ້າທີ່ສູງຂຶ້ນເຊິ່ງເຮັດໃຫ້ຕົ້ນທຶນການຜະລິດ ແລະ ລາຄາສິນຄ້າບໍລິໂພກໃນຕະຫຼາດພາຍໃນປັບຕົວສູງຂຶ້ນຕາມ, ສິ່ງຜົນໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນ ແລະ ກົດດັນອຳນາດຊື້ຂອງປະຊາຊົນ. ນອກຈາກນັ້ນ, ພາລະການຊຳລະໜີ້ຕ່າງປະເທດກໍເພີ່ມໜັກຂຶ້ນເມື່ອຄິດໄລ່ເປັນເງິນກີບສົ່ງຜົນໃຫ້ງົບປະມານແຫ່ງຊາດ ແລະ ພາກທຸລະກິດທີ່ມີໜີ້ຕ່າງປະເທດໄດ້ຮັບຜົນກະທົບຕາມກັນ[8].

ການນຳເຂົ້າ-ສົ່ງອອກ

ອີງຕາມແຫຼ່ງຂໍ້ມູນ ຈາກສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ (Lao PDR Trade Portal: LTP) ລາຍງານແມ່ນຮອດເດືອນ ພຶດສະພາ 2025, ເຊິ່ງມູນຄ່າການນຳເຂົ້າ ແລະ ສົ່ງອອກສິນຄ້າ (ບໍ່ລວມໄຟຟ້າ) ຂອງ ສປປ ລາວ ບັນລຸໄດ້ປະມານ 1,906 ລ້ານໂດລາສະຫະລັດ ທຽບໃສ່ເດືອນ ເມສາ ເພີ່ມຂຶ້ນ 21%. ໃນນີ້, ມູນຄ່າການສົ່ງອອກບັນລຸໄດ້ 971 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 19% ແລະ ມູນຄ່າການນຳເຂົ້າ ບັນລຸໄດ້ 935 ລ້ານ

[5] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປີ2026

[6] https://www.lsb.gov.la/

[7] https://laosis.lsb.gov.la/board/BoardList.do?bbs_bbsid=B404

[8] https://www.bol.gov.la/exchang_rate_all

ໂດລາສະຫະລັດ ເພີ່ມຂຶ້ນ 23.5% ທຽບໃສ່ ເດືອນ ເມສາ 2025. ສິ່ງຜັນໃຫ້ດຸນການຄ້າເກີນດຸນປະມານ 36 ລ້ານ ໂດລາສະຫະລັດ (ບໍ່ລວມໄຟຟ້າ)

ສິນຄ້າສົ່ງອອກຫຼັກປະກອບມີ: ເຄື່ອງໃຊ້ໄຟຟ້າ, ຄໍາປະສົມ, ຄໍາແທ່ງ, ເກືອກາລີ, ແຮ່ທອງ, ເຈ້ຍ ແລະ ເຄື່ອງທີ່ ເຮັດດ້ວຍເຈ້ຍ, ມັນຕົ້ນ ແລະ ອື່ນໆ. ປະເທດ ທີ່ ສປປ ລາວ ສົ່ງອອກຫຼາຍ 05 ອັນດັບປະກອບມີ: ຈີນ ປະມານ 273 ລ້ານໂດລາສະຫະລັດ, ສ ອາເມລິກາ ປະມານ 240 ລ້ານໂດລາສະຫະລັດ, ຫວຽດນາມ 187 ລ້ານໂດລາ ສະຫະລັດ, ໄທ 99 ລ້ານໂດລາສະຫະລັດ ແລະ ແລະ ອິດສະຕາລີ ປະມານ 69 ລ້ານໂດລາສະຫະລັດ.

ສິນຄ້ານໍາເຂົ້າຫຼັກປະກອບມີ: ວັດຖຸມີຄ່າ, ພາຫະນະ, ຜະລິດຕະພັນເຄມີປະສົມສໍາເລັດຮູບ, ນໍ້າມັນກາຊວນ, ອຸປະກອນກົນຈັກ, ເຫຼັກ ແລະ ເຄື່ອງທີ່ເຮັດດ້ວຍເຫຼັກ, ເຫຼັກກ້າ, ເຄື່ອງໄຟຟ້າ ແລະ ອຸປະກອນໄຟຟ້າ, ເຄື່ອງໃຊ້ທີ່ ເຮັດດ້ວຍພລາສະຕິກ ແລະ ເຄື່ອງດື່ມ (ນໍ້າ, ນໍ້າອັດລົມ, ຊູກໍາລັງ). ປະເທດ ທີ່ ສປປ ລາວ ນໍາເຂົ້າຫຼາຍ 05 ອັນດັບ ປະກອບມີ: ໄທ ປະມານ 410 ລ້ານໂດລາສະຫະລັດ, ຈີນ ປະມານ 337 ລ້ານໂດລາສະຫະລັດ, ຫວຽດນາມ ປະມານ 189 ລ້ານໂດລາສະຫະລັດ, ສ.ອາເມລິກາ ປະມານ 18 ແລະ ສິງກະໂປ ປະມານ 15 ລ້ານ ໂດລາສະຫະລັດ[9].

ສະພາບການຂອງຂະແໜງການທະນາຄານ


ຂະແໜງການເງິນ - ການທະນາຄານເປັນຂະແໜງທີ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໄດ້ປະກອບສ່ວນສໍາ ຄັນຕໍ່ການຂະຫຍາຍຕົວຂອງເສດຖະກິດ. ໃນປະຈຸບັນ, ລະບົບທະນາຄານໃນ ສປປ ລາວ ປະກອບດ້ວຍທະນາຄານ ແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດທີ່ມີການເຄື່ອນໄຫວ ລວມທັງໝົດ 36 ແຫ່ງ ສໍາລັບທະນາຄານທຸລະກິດ ຈັດເປັນ 6 ກຸ່ມ ຄື:

- ທະນາຄານທຸລະກິດລັດ (State – Owned Commercial Bank);
- ທະນາຄານສະເພາະກິດ (Specialized Bank);
- ທະນາຄານທຸລະກິດລັດຮ່ວມທຶນ (Joint State Commercial Bank);
- ທະນາຄານເອກະຊົນ (Private Bank);
- ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ (Subsidiary Bank);
- ສາຂາທະນາຄານທຸລະກິດຕ່າງປະເທດ (Foreign Commercial Bank Branch).

ໃນນັ້ນ, ສາຂາທະນາຄານທຸລະກິດຕ່າງປະເທດກວມເອົາ 33%, ຮອງລົງມາແມ່ນກຸ່ມທະນາຄານທຸລະກິດທີ່ເປັນ ບໍລິສັດລູກຂອງທະນາຄານຕ່າງປະເທດ 25%, ກຸ່ມທະນາຄານເອກະຊົນ 19%, ກຸ່ມທະນາຄານທຸລະກິດຮ່ວມທຶນ ກວມເອົາ 14%, ກຸ່ມທະນາຄານສະເພາະກິດ 6% ແລະ ທະນາຄານທຸລະກິດລັດ ກວມເອົາ 3% ຂອງຈໍານວນ ທະນາຄານທັງໝົດ.

[9] ມູນຄ່າການຄ້າຕ່າງປະເທດ (ນໍາເຂົ້າ-ສົ່ງອອກ) ຂອງ ສປປ ລາວ ປະຈໍາເດືອນ ພຶດສະພາ ເພີ່ມຂຶ້ນ

ຮູບສະແດງທີ 01: ສັດສ່ວນທະນາຄານທຸລະກິດໃນລາວ (2025)




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ (2025)[10]

ສ່ວນແບ່ງການຕະຫຼາດຂອງຂະແໜງທະນາຄານ

ໂດຍລວມແລ້ວໃນປີ 2025, ທະນາຄານທຸລະກິດລັດກວມສ່ວນແບ່ງການຕະຫຼາດຫຼາຍກວ່າທະນາຄານອື່ນ ໂດຍສັດສ່ວນທາງດ້ານຊັບສິນ ແລະ ເງິນຝາກກວມເອົາ 31.95% ແລະ 37.19%, ຮອງລົງມາແມ່ນທະນາຄານ ເອກະຊົນ ໂດຍສັດສ່ວນທາງຊັບສິນ ແລະ ດ້ານເງິນຝາກກວມເອົາ 23.11% ແລະ 25.02%, ຮອງລົງມາແມ່ນ ທະນາຄານຮ່ວມທຶນໂດຍມີສັດສ່ວນທາງດ້ານເງິນກູ້ກວມເອົາ 34.17% ແລະ ທະນາຄານສາຂາຕ່າງປະເທດກວມ ເອົາສັດສ່ວນສ່ວນແບ່ງການຕະຫຼາດໜ້ອຍສຸດທາງດ້ານຊັບສິນ, ດ້ານເງິນຝາກ ແລະ ເງິນກູ້ກວມເອົາ 22.92%, 15.06% ແລະ 12.03% ຕາມລຳດັບ[11].

ຮູບສະແດງທີ 02: ສ່ວນແບ່ງການຕະຫຼາດຂອງທະນາຄານໃນ ສປປ ລາວ (%)

ໝາຍເຫດ: ຂໍ້ມູນປີ 2025



[10] https://www.bol.gov.la/comercial_bank
[11] https://www.bol.gov.la/Money_and_Banking

ອັດຕາດອກເບ້ຍສະເລ່ຍ (ຫົວໜ່ວຍ % ຕໍ່ປີ)

ອັດຕາດອກເບ້ຍເງິນຝາກຂອງທະນາຄານທຸລະກິດໃນປີ 2025 ເຫັນວ່າ ມີບາງອັດຕາດອກເບ້ຍທີ່ເພີ່ມຂຶ້ນ ແລະ ບາງອັດຕາດອກເບ້ຍຫຼຸດລົງເມື່ອປຽບທຽບກັບປີກ່ອນເຊັ່ນ:

ອັດຕາດອກເບ້ຍເງິນຝາກສະກຸນເງິນກີບ:

- ເງິນຝາກປະຢັດສະກຸນເງິນກີບຫຼຸດລົງຈາກ 1.72%/ປີ ມາເປັນ 1.71%/ປີ
- ອັດຕາດອກເບ້ຍເງິນຝາກ 06 ເດືອນຫຼຸດລົງຈາກ 6.11% ມາເປັນ 5.67%/ປີ
- ອັດຕາດອກເບ້ຍເງິນຝາກ 24 ເດືອນຫຼຸດລົງຈາກ 7.39% ມາເປັນ 7.30%/ປີ
- ອັດຕາດອກເບ້ຍເງິນຝາກ 48 ເດືອນຫຼຸດລົງຈາກ 8.50% ມາເປັນ 8.31%/ປີ
- ອັດຕາດອກເບ້ຍເງິນຝາກ 60 ເດືອນຫຼຸດລົງຈາກ 8.52% ມາເປັນ 7.76%/ປີ

ອັດຕາດອກເບ້ຍເງິນຝາກສະກຸນເງິນບາດ:

- ເງິນຝາກປະຢັດຫຼຸດລົງຈາກ 0.72% ເປັນ 0.70%/ປີ,
- ອັດຕາດອກເບ້ຍເງິນຝາກ 09 ເດືອນ ຫຼຸດລົງຈາກ 3.02% ເປັນ 2.90%/ປີ
- ອັດຕາດອກເບ້ຍເງິນຝາກ 24 ເດືອນ ຫຼຸດລົງຈາກ 4.37% ເປັນ 4.10%/ປີ
- ອັດຕາດອກເບ້ຍເງິນຝາກ 36 ເດືອນ ຫຼຸດລົງຈາກ 4.76% ເປັນ 4.60%/ປີ
- ອັດຕາດອກເບ້ຍເງິນຝາກ 60 ເດືອນ ຫຼຸດລົງຈາກ 5.70% ເປັນ 5.48%/ປີ

ອັດຕາດອກເບ້ຍເງິນຝາກສະກຸນເງິນໂດລາ:

- ເງິນຝາກປະຢັດຫຼຸດລົງຈາກ 1.11% ເປັນ 1.10%/ປີ
- ອັດຕາດອກເບ້ຍເງິນຝາກມີກຳນົດ 09 ເດືອນຫຼຸດລົງຈາກ 3.77% ເປັນ 3.69%/ປີ
- ອັດຕາດອກເບ້ຍເງິນຝາກມີກຳນົດ 24 ເດືອນຫຼຸດລົງຈາກ 4.78% ເປັນ 4.77%/ປີ
- ອັດຕາດອກເບ້ຍເງິນຝາກມີກຳນົດ 36 ເດືອນຫຼຸດລົງຈາກ 5.90% ເປັນ 5.88%/ປີ
- ອັດຕາດອກເບ້ຍເງິນຝາກມີກຳນົດ 48 ເດືອນຫຼຸດລົງຈາກ 6.17% ເປັນ 5.97%/ປີ
- ອັດຕາດອກເບ້ຍເງິນຝາກມີກຳນົດ 60 ເດືອນຫຼຸດລົງຈາກ 6.65% ເປັນ 6.47%/ປີ

ຕາຕະລາງ 2: ສະເລ່ຍອັດຕາດອກເບ້ຍເງິນຝາກຂອງທະນາຄານທຸລະກິດທົ່ວລະບົບ (%ຕໍ່ປີ)

	LAK		THB		USD	
	2024	2025	2024	2025	2024	2025
ເງິນຝາກປະຢັດ	1.72%	1.71%	0.72%	0.70%	1.11%	1.10%
ເງິນຝາກມີກຳນົດ						
ເງິນຝາກ 3 ເດືອນ	5.55%	4.93%	1.56%	1.59%	2.17%	2.19%
ເງິນຝາກ 6 ເດືອນ	6.11%	5.67%	2.25%	2.25%	2.88%	2.94%
ເງິນຝາກ 9 ເດືອນ	7.23%	7.69%	3.02%	2.90%	3.77%	3.69%
ເງິນຝາກ 12 ເດືອນ	6.96%	7.05%	3.04%	3.19%	3.77%	3.88%
ເງິນຝາກ 24 ເດືອນ	7.39%	7.30%	4.37%	4.10%	4.78%	4.77%
ເງິນຝາກ 36 ເດືອນ	7.80%	8.14%	4.76%	4.60%	5.90%	5.88%
ເງິນຝາກ 48 ເດືອນ	8.50%	8.31%	4.66%	5.55%	6.17%	5.97%
ເງິນຝາກ 60 ເດືອນ	8.52%	7.76%	5.70%	5.48%	6.65%	6.47%

ໝາຍເຫດ: ຂໍ້ມູນທ້າຍປີ 2025 ;ແຫຼ່ງຂໍ້ມູນ: ສັງລວມຈາກ website ຂອງ ທຫລ ໃນແຕ່ລະໄລຍະ

ອັດຕາດອກເບ້ຍເງິນກູ້ສະເລ່ຍ ໃນປີ 2025 ແມ່ນມີການປ່ຽນແປງທີ່ແຕກຕ່າງກັນໃນແຕ່ລະສະກຸນເງິນ ເມື່ອປຽບທຽບກັບປີ 2024 ເຊິ່ງສະແດງອອກດັ່ງນີ້:

ສະກຸນເງິນກີບ: ອັດຕາດອກເບ້ຍເງິນກູ້ໄລຍະສັ້ນເພີ່ມຂຶ້ນຈາກ 10.47% ເປັນ 10.74% ຕໍ່ປີ, ໃນຂະນະທີ່ເງິນກູ້ໄລຍະກາງຫຼຸດລົງຈາກ 10.42% ເປັນ 10.00% ຕໍ່ປີ ແລະ ເງິນກູ້ໄລຍະຍາວຫຼຸດລົງຈາກ 10.33% ເປັນ 10.03% ຕໍ່ປີ.

ສະກຸນເງິນບາດ: ອັດຕາດອກເບ້ຍເງິນກູ້ທຸກໄລຍະແມ່ນມີການເພີ່ມຂຶ້ນ ໂດຍເງິນກູ້ໄລຍະສັ້ນເພີ່ມຈາກ 7.95% ເປັນ 8.51% ຕໍ່ປີ, ໄລຍະກາງເພີ່ມຈາກ 7.73% ເປັນ 8.35% ຕໍ່ປີ ແລະ ໄລຍະຍາວເພີ່ມສູງສຸດຈາກ 7.66% ເປັນ 9.26% ຕໍ່ປີ.

ສະກຸນເງິນໂດລາ: ອັດຕາດອກເບ້ຍເງິນກູ້ທຸກໄລຍະມີການເພີ່ມຂຶ້ນເລັກນ້ອຍ ໂດຍເງິນກູ້ໄລຍະສັ້ນເພີ່ມຈາກ 7.84% ເປັນ 8.16% ຕໍ່ປີ, ໄລຍະກາງເພີ່ມຈາກ 7.92% ເປັນ 8.09% ຕໍ່ປີ ແລະ ໄລຍະຍາວເພີ່ມຈາກ 8.36% ເປັນ 8.48% ຕໍ່ປີ.

ຕາຕະລາງ 3: ສະເລ່ຍອັດຕາດອກເບ້ຍເງິນກູ້ (% ຕໍ່ປີ).

	LAK		THB		USD	
	2024	2025	2024	2025	2024	2025
ໄລຍະສັ້ນ 1 ປີ	10.47%	10.74%	7.95%	8.51%	7.84%	8.16%
ໄລຍະກາງ 1-3 ປີ	10.42%	9.99%	7.73%	8.32%	7.92%	8.10%
ໄລຍະຍາວ 3-6 ປີ	10.33%	10.02%	7.66%	9.22%	8.36%	8.50%

ໝາຍເຫດ: ຂໍ້ມູນທ້າຍປີ 2025.

ແຫຼ່ງຂໍ້ມູນ: ສັງລວມຈາກ website ຂອງ ທຫລ ໃນແຕ່ລະໄລຍະ[12]

3. ແນວໂນ້ມ ແລະ ທິດທາງສຳລັບປີ 2026

ສະພາບເສດຖະກິດມະຫາພາກ 2026

ອີງຕາມບົດລາຍງານຂອງກອງທຶນການເງິນສາກົນ (IMF), ປະຈຳເດືອນເມສາ 2026 ຄາດ ວ່າການເຕີບໂຕ ຂອງ GDP ທົ່ວໂລກຈະຊະລໍ ຕົວລົງຢູ່ທີ່ 3.1% ໃນປີ 2026 ເຊິ່ງຫຼຸດລົງຈາກ 3.4% ໃນປີ 2025. ການຊະລໍ ຕົວ ດັ່ງກ່າວສ່ວນໃຫຍ່ແມ່ນເນື່ອງມາຈາກຄວາມຂັດແຍ່ງທີ່ເກີດຂຶ້ນໃນຕາເວັນອອກກາງ ທີ່ສົ່ງຜົນກະທົບຕໍ່ລາຄາ ພະລັງງານ ແລະ ສະພາບການເງິນທົ່ວໂລກ. ເຖິງຢ່າງໃດກໍ່ຕາມ, ເສດຖະກິດໂລກຄາດວ່າຈະຄ່ອຍໆຟື້ນຕົວຂຶ້ນເລັກ ນ້ອຍຢູ່ທີ່ 3.2% ໃນປີ 2027. ສຳລັບເສດຖະກິດທີ່ພັດທະນາແລ້ວຄາດວ່າຈະຂະຫຍາຍຕົວຢູ່ທີ່ 1.8% ໃນປີ 2026 ແລະ 1.7% ໃນປີ 2027, ໃນຂະນະທີ່ກຸ່ມເສດຖະກິດຕະຫຼາດເກີດໃໝ່ ແລະ ເສດຖະກິດກຳລັງພັດທະນາຄາດວ່າຈະ ຂະຫຍາຍຕົວຊ້າລົງຢູ່ທີ່ 3.9% ໃນປີ 2026 ແລະ ຈະຟື້ນຕົວຄືນເປັນ 4.2% ໃນປີ 2027. ອັດຕາເງິນເຟີ້ທົ່ວໂລກ ຈະເພີ່ມຂຶ້ນຈາກ 4.1% ໃນປີ 2025 ເປັນ 4.4% ໃນປີ 2026 ແລະ ຄາດວ່າຈະຫຼຸດລົງເປັນ 3.7% ໃນປີ 2027.

ເຖິງແມ່ນວ່າເສດຖະກິດໂລກຈະສືບຕໍ່ຂະຫຍາຍຕົວຄົງທີ່ແຕ່ກໍຍັງປະເຊີນກັບສິ່ງທ້າທາຍ ແລະ ປັດໄຈສ່ຽງຫຼາຍ ດ້ານ: ຄວາມຕຶງຄຽດທາງພູມິສາດການເມືອງທີ່ສືບຕໍ່ດຳເນີນຢູ່ໃນຫຼາຍພາກພື້ນເຊັ່ນ: ສົງຄາມ, ການປິດເສັ້ນທາງ ການຄ້າທີ່ສຳຄັນເຊິ່ງສາມາດສົ່ງຜົນກະທົບຮ້າຍແຮງຕໍ່ຫ່ວງໂສ້ການສະໜອງຂອງໂລກ ເຮັດໃຫ້ລາຄາສິນຄ້າເພີ່ມສູງ

[12] https://www.bol.gov.la/Money_and_Banking ອັດຕາດອກເບ້ຍ

ຂຶ້ນກະທັນຫັນ ແລະ ເສດຖະກິດຊ້າລົງ. ນອກຈາກນັ້ນ, ດ້ານນະໂຍບາຍການຄ້າກໍຖືເປັນຄວາມສ່ຽງສຳຄັນອີກດ້ານໜຶ່ງເພາະເຖິງແມ່ນວ່າຜົນກະທົບຈາກພາສີຈະຫຼຸດລົງເທື່ອລະກ້າວ ແຕ່ຄວາມສ່ຽງຈາກການຂັດແຍ້ງການຄ້າລະຫວ່າງປະເທດມະຫາອຳນາດ (ສະຫະລັດອາເມລິກາ, ຈີນ, ສະຫະພາບເອີໂຣບ) ຍັງຄົງມີຢູ່, ສ້າງຄວາມບໍ່ແນ່ນອນຕໍ່ການລົງທຶນເນື່ອງຈາກການຕອບໂຕ້ພາສີການຄ້າອາດເກີດຂຶ້ນໄດ້ທຸກເມື່ອ. ນອກຈາກນັ້ນ, ສະພາບການຜັນຜວນຂອງດິນຟ້າອາກາດຍັງສົ່ງຜົນໃຫ້ໄພພິບັດທາງທຳມະຊາດມີຄວາມຮຸນແຮງເພີ່ມຂຶ້ນໃນແຕ່ລະປີເຊິ່ງສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດໂດຍລວມ[13].

ອີງຕາມການລາຍງານຂອງ **ທ່ານ ສັນຕິພາບ ພົມອິຫານ** ລັດຖະມົນຕີ ກະຊວງການເງິນໄດ້ລາຍງານຜົນຂອງກອງປະຊຸມສະຫຼຸບວຽກການເງິນປະຈຳປີ 2025 ແລະ ທິດທາງປະຈຳປີ 2026 ທີ່ໄຂຂຶ້ນໃນວັນທີ 29 ມັງກອນ 2026 ໄດ້ກ່າວວ່າ: ແຜນການປີ 2026 ແມ່ນສຸມໃສ່ການຊຸກຍູ້ລວມຍອດຜະລິດຕະພັນພາຍໃນ (GDP) ຂອງ ສປປ ລາວໃຫ້ຂະຫຍາຍຕົວໃນລະດັບ 5.5% ຂຶ້ນໄປ ແລະ ອັດຕາເງິນເຟີ້ແມ່ນສະເລ່ຍຢູ່ໃນລະດັບ 5%. ໃນນີ້, ຂະແໜງກະສິກຳຂະຫຍາຍຕົວ 4.6%, ຂະແໜງອຸດສາຫະກຳຂະຫຍາຍຕົວ 5.1%, ຂະແໜງບໍລິການຂະຫຍາຍຕົວ 6.6% ແລະ ພາສີ-ອາກອນຜະລິດຕະພັນຂະຫຍາຍຕົວ 4%. ເຊິ່ງປັດໄຈຕົ້ນຕໍທີ່ຊຸກຍູ້ການຂະຫຍາຍຕົວ GDP ມາຈາກຂະແໜງ ບໍລິການທ່ອງທ່ຽວ, ຂະແໜງພະລັງງານ, ຂະແໜງບໍລິການໂລຈິສຕິກ, ຂະແໜງກະສິກຳ ແລະ ອຸດສະຫະກຳປຸງແຕ່ງກະສິກຳ. ພ້ອມກັນນັ້ນ, GDP ສະເລ່ຍຕໍ່ຫົວຄົນຢູ່ທີ່ 2,238 ໂດລາສະຫະລັດ ແລະ ລວມຍອດລາຍໄດ້ແຫ່ງຊາດຕໍ່ຫົວຄົນຢູ່ທີ່ 2,101 ໂດລາສະຫະລັດ[14].

ເຖິງແມ່ນວ່າ ສປປ ລາວ ຕັ້ງເປົ້າໝາຍການຂະຫຍາຍຕົວຂອງ GDP ໄວ້ທີ່ 5.5% ແຕ່ຍັງມີປັດໃຈສ່ຽງທັງພາຍໃນ ແລະ ພາຍນອກຫຼາຍປະການທີ່ອາດສົ່ງຜົນກະທົບຕໍ່ການບັນລຸເປົ້າໝາຍດັ່ງກ່າວ. ປັດໄຈພາຍນອກທີ່ສຳຄັນປະກອບມີສະພາບຄວາມບໍ່ສະຫງົບໃນພາກພື້ນ ແລະ ສາກົນ, ສະພາບເສດຖະກິດຂອງປະເທດຄູ່ຄ້າຂອງ ສປປ ລາວ ລວມທັງໄພພິບັດທາງທຳມະຊາດທີ່ອາດຈະເກີດຂຶ້ນໃນແຕ່ລະໄລຍະ ແລະ ສຳລັບປັດໄຈພາຍໃນທີ່ອາດກະທົບຕໍ່ການຂະຫຍາຍຕົວເສດຖະກິດຂອງ ສປປ ລາວ ປະກອບດ້ວຍສະພາບຄວາມບອບບາງທາງດ້ານງົບປະມານ, ບັນຫາໜີ້ສາທາລະນະທີ່ຢູ່ໃນລະດັບສູງ ຍັງເປັນຄວາມທ້າທາຍສຳຄັນເຊິ່ງເຮັດໃຫ້ມີງົບປະມານທີ່ຈຳກັດສຳລັບການລົງທຶນພັດທະນາໂຄງສ້າງພື້ນຖານ ແລະ ຂະແໜງເສດຖະກິດຕ່າງໆ, ດ້ານສະຖຽນລະພາບທາງດ້ານເງິນຕາໂດຍສະເພາະການອ່ອນຄ່າຂອງເງິນກີບ ແລະ ການໃຊ້ເງິນຕາຕ່າງປະເທດສູງ (Dollarization) ສົ່ງຜົນກະທົບຕໍ່ຄວາມເຊື່ອໝັ້ນດ້ານເສດຖະກິດ, ທຶນສຳຮອງເງິນຕາຕ່າງປະເທດຍັງບໍ່ພຽງພໍສຳລັບການຮອງຮັບຄວາມຜັນຜວນທາງເສດຖະກິດທີ່ອາດເກີດຂຶ້ນ, ອັດຕາເງິນເຟີ້ທີ່ຍັງຢູ່ໃນລະດັບສູງເຊິ່ງອາດສົ່ງຜົນກະທົບຕໍ່ການບໍລິໂພກຂອງປະຊາຊົນ ແລະ ຕົ້ນທຶນການດຳເນີນທຸລະກິດ. ນອກຈາກນັ້ນ, ການປ່ຽນແປງຂອງດິນຟ້າອາກາດກໍສົ່ງຜົນກະທົບໂດຍກົງຕໍ່ຂະແໜງກະສິກຳທີ່ເປັນຖານເສດຖະກິດສຳຄັນຂອງປະເທດ ແລະ ຕ້ອງໃຊ້ງົບປະມານຈຳນວນຫຼາຍສຳລັບການຟື້ນຟູເພື່ອຊ່ວຍເຫຼືອປະຊາຊົນ.

ທິດທາງ ແລະ ແຜນການ ທຄຕລ 2026

ປີ 2026 ກໍເປັນອີກປີໜຶ່ງທີ່ການດຳເນີນທຸລະກິດ ຂອງ ທຄຕລ ສືບຕໍ່ປະເຊີນກັບສິ່ງທ້າທາຍທັງປັດໄຈພາຍໃນ ແລະ ພາຍນອກ, ເປັນຕົ້ນແມ່ນຄວາມບໍ່ແນ່ນອນຂອງສະພາບເສດຖະກິດໂລກ ແລະ ພາກພື້ນທີ່ຍັງມີທ່າອ່ຽງສືບຕໍ່ມີຄວາມຜັນຜວນ. ນອກຈາກນັ້ນ, ສປປ ລາວ ຍັງປະເຊີນກັບສິ່ງທ້າທ້າຍດ້ານສະຖຽນລະພາບທາງດ້ານເງິນຕາ, ການ

[13] World Economic Outlook, April 2026; Global Economy in the Shadow of War; April 14, 2026
[14] ຄາດໝາຍ ເສດຖະກິດ ປີ 2026 ແມ່ນໃຫ້ຂະຫຍາຍຕົວ 5.5% ຂຶ້ນໄປ - LAO ECONOMIC

ຂາດດຸນງົບປະມານ, ບັນຫາອັດຕາເງິນເຟີ້, ລາຄາສິນຄ້າທີ່ສືບຕໍ່ເພີ່ມຂຶ້ນ ແລະ ໄພພິບັດທຳມະຊາດໄດ້ສົ່ງຜົນກະທົບຮ້າຍແຮງຕໍ່ຂະແໜງກະສິກຳ ແລະ ການກໍ່ສ້າງພື້ນຖານໂຄງລ່າງໃນຫຼາຍແຂວງທົ່ວປະເທດ ເຊິ່ງລວມເຖິງຄວາມເສຍຫາຍຕໍ່ຜົນລະປູກ, ເຄືອຂ່າຍເສັ້ນທາງ, ລະບົບໄຟຟ້າ, ບັນດາອ່າງເກັບນ້ຳ ແລະ ລະບົບຊົນລະປະທານກໍໄດ້ຮັບຄວາມເສຍຫາຍ. ສະນັ້ນ, ເພື່ອຮັບມືກັບສະພາບດັ່ງກ່າວ, ທຄຕລ ຈຶ່ງໄດ້ກຳນົດທິດທາງລວມສຳລັບປີ 2026 ດັ່ງນີ້:

- ທົບທວນ, ປັບປຸງ ແລະ ພັດທະນາວຽກງານຮອບດ້ານ ຂອງ ທຄຕລ;
- ສືບຕໍ່ສັບຊ້ອນຈັດວາງບຸກຄະລາກອນພາຍໃນໃຫ້ແທດເໝາະເພື່ອຍົກລະດັບການບໍລິຫານງານໃນແຕ່ລະຂົງເຂດມີຄວາມຄ່ອງຕົວ;
- ຍົກສູງການຄຸ້ມຄອງຄຸນນະພາບສິນເຊື່ອໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
- ຖືເອົາວຽກງານແກ້ໄຂໜີ້ເປັນບູລິມະສິດເພື່ອເປັນການແກ້ໄຂໜີ້ທັງໃນ ແລະ ນອກຜັງ ໃຫ້ຫຼຸດລົງ;
- ຖືເອົາວຽກງານການຫັນເປັນທັນສະໄໝເປັນບຸລິມະສິດຕົ້ນຕໍອີກດ້ານໜຶ່ງເພື່ອຮັກສາຄວາມເປັນຜູ້ນຳດ້ານ Digital Banking;
- ສ້າງຄວາມເຂັ້ມແຂງທາງດ້ານການເງິນເພື່ອປັບປຸງອັດຕາສ່ວນຕ່າງໆບັນລຸຕາມເກນມາດຖານກຳນົດໄວ້;
- ຄົ້ນຄວ້າຮ່ວມມືທາງທຸລະກິດກັບພາກສ່ວນພາຍນອກຕາມໂຄງການທີ່ກຳລັງດຳເນີນຢູ່ ແລະ ໂຄງການໃໝ່;
- ເອົາໃຈໃສ່ບໍລິຫານແຫຼ່ງທຶນໃຫ້ມີປະສິດທິພາບຫຼາຍຂຶ້ນຄົ້ນຄວ້າຮູບແບບການລົງທຶນທີ່ຫຼາກຫຼາຍ ແລະ ເໝາະສົມກັບແຫຼ່ງທຶນເພື່ອສ້າງລາຍຮັບໃຫ້ສູງຂຶ້ນ;
- ພັດທະນາຍົກລະດັບທຸກຜະລິດຕະພັນໃຫ້ທັນສະໄໝ ແລະ ປອດໄພຍິ່ງຂຶ້ນ ສາມາດຕອບໂຈດຄວາມຕ້ອງການຂອງທຸກກຸ່ມລູກຄ້າ, ສາມາດເຊື່ອມໂຍງທັງພາຍໃນ ແລະ ສາກົນ;
- ສືບຕໍ່ເລັ່ງຂະຫຍາຍຜະລິດຕະພັນ, ການບໍລິການ ແລະ ຮັກສາສ່ວນແບ່ງການຕະຫຼາດໃຫ້ຢູ່ໃນລະດັບສູງ ແລະ ຫັນໄປສູ່ການຕະຫຼາດແບບບຸກທະລຸຫຼາຍຂຶ້ນ ເພື່ອໃຫ້ສອດຄ່ອງກັບ ການແຂ່ງຂັນທີ່ນັບມື້ນັບສູງ;
- ປັບປຸງການບໍລິການໃຫ້ມີຄວາມສະດວກ, ວ່ອງໄວ ໂດຍຍຶດຖືເອົາລູກຄ້າເປັນໃຈກາງ; ຮັກສາຖານລູກຄ້າເກົ່າຄຽງຄູ່ກັບການສ້າງຖານລູກຄ້າໃໝ່;
- ເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍປະຢັດມັດທະຍັດ ແລະ ຫຼຸດຜ່ອນລາຍຈ່າຍດ້ານຕ່າງໆ ທີ່ບໍ່ຈຳເປັນເພື່ອສ້າງຜົນປະໂຫຍດສູງສຸດໃຫ້ແກ່ທະນາຄານ;
- ຖືເອົາວຽກງານກວດກາເປັນເຄື່ອງມືສຳຄັນເອົາໃຈໃສ່ປະຕິບັດວຽກງານກວດກາ 3 ຂັ້ນຕອນ ໃຫ້ເຂັ້ມງວດຂຶ້ນກວ່າເກົ່າເພື່ອຕີຖອຍບັນດາປະກົດການຫຍໍ້ທໍ້ຕ່າງໆບໍ່ໃຫ້ເກີດຂຶ້ນໃນຖັນແຖວພະນັກງານ.
- ສືບຕໍ່ວຽກ BASEL II, IFRS, RWA, CG, DATA GOVERNANCE, Big Data ແລະ ອື່ນໆ.

ແຜນພັດທະນາ ທຄຕລ 2025 - 2029

ເພື່ອບັນລຸເປົ້າໝາຍການພັດທະນາໃນປີ 2025 - 2029 ທຄຕລ ໄດ້ກຳນົດແຜນພັດທະນາແບບຮອບດ້ານໂດຍເລັ່ງໃສ່ການຮັບປະກັນການຂະຫຍາຍຕົວທາງທຸລະກິດໃຫ້ມີຄວາມສະຖຽນ ແລະ ເຂັ້ມແຂງທາງດ້ານການເງິນ, ທະນາຄານມຸ່ງໝັ້ນພັດທະນາການບໍລິການທີ່ທັນສະໄໝ ໂດຍນຳໃຊ້ນະວັດຕະກຳໃໝ່ໆເພື່ອຫັນສູ່ການເປັນທະນາຄານດິຈິຕອນຢ່າງເຕັມຮູບແບບ ພ້ອມທັງຍົກສູງການພັດທະນາ ແລະ ປັບປຸງລະບົບຢ່າງເປັນປະຈຳເພື່ອຮັບປະກັນ ແລະ ຍົກລະດັບຄວາມປອດໄພຂອງບັນດາຜະລິດຕະພັນອີເລັກໂຕຣນິກຕ່າງໆຂອງ ທຄຕລ. ນອກຈາກນີ້, ທະນາຄານຍັງໃຫ້ຄວາມສຳຄັນກັບການພັດທະນາບຸກຄະລາກອນໃຫ້ມີຄວາມຊຳນານ ແລະ ເປັນມືອາຊີບ, ພ້ອມທັງ ເນັ້ນໜັກການບໍລິການທີ່ຍຶດລູກຄ້າເປັນໃຈກາງເພື່ອຮັກສາຖານລູກຄ້າເກົ່າ ແລະ ຂະຫຍາຍຖານລູກຄ້າໃໝ່.

ທຄຕລ ຈະສືບຕໍ່ປັບປຸງການດຳເນີນງານໃຫ້ສອດຄ່ອງກັບມາດຕະຖານສາກົນເທື່ອລະກ້າວ, ພ້ອມທັງສ້າງຜົນຕອບແທນທີ່ຍືນຍົງໃຫ້ແກ່ຜູ້ຖືຮຸ້ນ ແລະ ປະກອບສ່ວນເຂົ້າໃນການພັດທະນາສັງຄົມ. ເຊິ່ງແຜນງານ ແລະ ໂຄງການ 2025 - 2029 ປະກອບມີ 15 ແຜນງານ ແລະ 50 ໂຄງການ ເຊິ່ງລາຍລະອຽດຂອງບັນດາແຜນງານມີດັ່ງນີ້:

1. ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ເຂັ້ມແຂງ: 7 ໂຄງການ
2. ການຄຸ້ມຄອງ ແລະ ຂະຫຍາຍສິນເຊື່ອ ຢ່າງມີປະສິດທິພາບ: 5 ໂຄງການ
3. ພັດທະນາດ້ານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ: 3 ໂຄງການ
4. ສ້າງພື້ນຖານການຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ ໃຫ້ເຂັ້ມແຂງ: 2 ໂຄງການ
5. ພັດທະນາ ແລະ ຄຸ້ມຄອງລະບົບໄອທີໃຫ້ທັນສະໄໝ: 6 ໂຄງການ
6. ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking: 8 ໂຄງການ
7. ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຖານສາກົນ: 4 ໂຄງການ
8. ພັດທະນາການອະນຸມັດສິນເຊື່ອຫັນເປັນທັນສະໄໝ: 3 ໂຄງການ
9. ປັບປຸງ ແລະ ພັດທະນາລະບົບບັນຊີ-ລາຍງານການເງິນໃຫ້ເປັນທັນສະໄໝ: 1 ໂຄງການ
10. ຫັນການຄຸ້ມຄອງ ແລະ ບໍລິຫານອົງກອນໃຫ້ຍືນຍົງຕາມທິດສີຂຽວ sustainability and Green goal: 3 ໂຄງການ
11. ການປະຕິບັດເພື່ອຫັນສູ່ຫຼັກການ Basel II: 3 ໂຄງການ
12. ພັດທະນາວຽກງານບັນຊີ ແລະ ລາຍງານການເງິນ ໃຫ້ໄດ້ຕາມມາດຕະຖານ IFRS: 1 ໂຄງການ
13. ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ກ້າວສູ່ມາດຕະຖານ COSO: 2 ໂຄງການ
14. ພັດທະນາວຽກງານພາຍໃນໃຫ້ໄດ້ຕາມມາດຖານສາກົນ ISO9001:2015: 1 ໂຄງການ
15. ພັດທະນາໂຄງການ PCI Compliance ຫຼື (Payment Card Industry Data Security Standard): 1 ໂຄງການ.

V. ຜົນການດຳເນີນທຸລະກິດຕົ້ນຕໍໃນແຕ່ລະດ້ານ

1. ພາບລວມການດຳເນີນງານຂອງ ທຄຕລ ໃນປີ 2025

ໃນໄລຍະປີ 2025 ທຄຕລ ສາມາດປະຕິບັດວຽກງານທີ່ຜົ້ນເດັ່ນຫຼາຍດ້ານເຊັ່ນ: ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2024 ແລະ ກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2025 ພ້ອມທັງສຳເລັດການຈ່າຍເງິນປັນຜົນ ຈຳນວນ 100 ກີບ/ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນ ທຄຕລ; ຈັດກອງປະຊຸມສະພາບໍລິຫານສະໄໝສາມັນ ຈຳນວນ 4 ຄັ້ງ ແລະ ວິສາມັນ 5 ຄັ້ງ ແລະ ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ທຄຕລ 3 ຄັ້ງ; ຄົ້ນຄວ້າ ແລະ ຮັບຮອງແຜນຍຸດທະສາດ 5 ປີສະບັບໃໝ່ ຂອງ ທຄຕລ ໄລຍະ 2025-2029; ສະຫຼຸບຜົນການຈັດຕັ້ງປະຕິບັດ KPI ແລະ ການຈັດຂັ້ນສາຂາ ປະຈຳປີ 2024 ພ້ອມທັງຍ້ອງຍໍ ໃຫ້ລາງວັນປະຈຳປີຂອງວຽກງານ KPI ແລະ ວຽກງານການຈັດຂັ້ນສາຂາ ແລະ ໜ່ວຍບໍລິການ; ກຳນົດ KPI ແລະ ການຈັດຂັ້ນສາຂາ ປະຈຳປີ 2025; ເປີດເຜີຍບົດລາຍງານປະຈຳປີ 2024 ແລະ ປະຈຳແຕ່ລະໄຕມາດ 2025, ພ້ອມທັງເປີດເຜີຍລາຍງານການເງິນມາດຖານສາກົນ ຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ແລະ ເວັບໄຊສ໌ຂອງ ທຄຕລ. ສຳເລັດການເພີ່ມທຶນຈຳນວນ 841.91 ຕື້ກີບ ດ້ວຍການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມອບຊຶນທົ່ວໄປ RO/PO.

ດ້ານການຮ່ວມມືທາງດ້ານທຸລະກິດກັບພາກສ່ວນຕ່າງໆທີ່ສຳຄັນ: ເຊື່ອມຕໍ່ລະບົບຊື້-ຂາຍປະກັນໄພ ຮ່ວມກັບບໍລິສັດປະກັນແຫ່ງປະເທດລາວ; ເຊື່ອມຕໍ່ລະບົບຊຳລະສະສາງຊື້-ຂາຍຄຳ ຮ່ວມກັບທະນາຄານຄຳ; ປັບປຸງລະບົບ LaPass; ເຊື່ອມຕໍ່ລະບົບ CMS ຂອງ ທຫລ; ຮ່ວມມືວຽກງານ Smart Cash ກະຊວງການເງິນ ຜ່ານລະບົບ Finlink;

ສຳເລັດການພັດທະນາເຄື່ອງມືດ້ານໄອທີ, ຜະລິດຕະພັນ, ການບໍລິການເພື່ອຮັບໃຊ້ພາຍໃນ ແລະ ຮັບໃຊ້ສັງຄົມ, ພັດທະນາ ແລະ ປັບປຸງຜະລິດຕະພັນ ເພື່ອຕອບໂຈດຄວາມຕ້ອງການລູກຄ້າເຊັ່ນ: ຜະລິດຕະພັນ OneBank, OneBank Kid, OnePay Shop, ATM UnionPay Virtual Card, E-Statement, ການຊື້-ຂາຍຮຸ້ນຜ່ານ BCEL One, ໃຫ້ບໍລິການຊຳລະສະສາງຊື້ຂາຍຄຳລະຫວ່າງ ທຄຕລ ແລະ ທະນາຄານຄຳ, ຕູ້ຖອນເງິນຫຼາຍສະກຸນ (ຢວນ ແລະ ບາດ) ແລະ ຕູ້ແລກປ່ຽນເງິນຕາຕ່າງປະເທດ; ຍົກລະດັບຕົວແທນ BCOME Super Agent 2 ແຫ່ງ; ຂະຫຍາຍຕົວແທນບີຄຳ 176 ຕົວແທນ ແລະ ມັນນີແກຣມ 23 ຕົວແທນ;

ພ້ອມນີ້, ທຄຕລ ຍັງໄດ້ຮັບລາງວັນຊິງກຽດ ຄື:

- ລາງວັນດີເດັ່ນດ້ານຄຸນະພາບທຸລະກຳເງິນໂອນຕ່າງປະເທດ ຈາກ JP Morgan Chase Bank;
- ລາງວັນນັກທຸລະກິດຊົ້ນນຳດີເດັ່ນ ຂອງການສ້າງຕັ້ງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
- ລາງວັນ ຜູ້ບໍລິຫານຍິງດີເດັ່ນ-ສາຂາທະນາຄານ ປະຈຳປີ 2025 ຈາກອີງກອນ Women's Tabloid
- ລາງວັນຄຸນະພາບການບໍລິການຜ່ານລະບົບຂອງບໍລິສັດ LAPNet;
- ລາງວັນຈາກຕະຫຼາດຫຼັກຊັບລາວ 7 ລາງວັນຄື:
  1) ລາງວັນການເປີດເຜີຍຂໍ້ມູນແບບສະໝັກໃຈດີເດັ່ນ;
  2) ລາງວັນການຄຸ້ມຄອງບໍລິຫານດີເດັ່ນ;
  3) ລາງວັນບໍລິສັດທີ່ມີຜົນການເຄື່ອນໄຫວທຸລະກິດດີເດັ່ນ;
  4) ລາງວັນຜູ້ລົງທຶນສຳພັນດີເດັ່ນ;
  5) ລາງວັນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີດີເດັ່ນ;
  6) ລາງວັນບໍລິສັດລະດົມທຶນດີເດັ່ນ;
  7) ໃບຍ້ອງຍໍການເປີດເຜີຍຂໍ້ມູນປະຈຳປີ 2025.

ດ້ານຕາໜ່າງບໍລິການ ສຳເລັດການຍົກລະດັບໜ່ວຍບໍລິການໄຊສົມບູນ ເປັນສາຂາໄຊສົມບູນ, ສຳເລັດການຍົກຍ້າຍສະຖານທີ່ຈຸດບໍລິການຕຶກຕະຫຼາດຫຼັກຊັບລາວໄປ ເຂດດົງຄຳຊ້າງ (ໜ່ວຍບໍລິການດົງຄຳຊ້າງ) ແລະ ຍົກລະດັບຫ້ອງແລກປ່ຽນເຊໂນ ເປັນໜ່ວຍບໍລິການເຊໂນ ສາຂາສະຫວັນນະເຂດ.


2. ຊັບສິນ ແລະ ໜີ້ສິນ

ໃນໄລຍະຜ່ານມາຖານະການເງິນ ຂອງ ທຄຕລ ມີການເຕີບໂຕເພີ່ມຂຶ້ນໃນທຸກໆປີ ສິ່ງຜົນເຮັດໃຫ້ຍອດຊັບສິນ ແລະ ໜີ້ສິນ ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ເປັນຕົ້ນແມ່ນການຂະຫຍາຍສິນເຊື່ອ, ການລົງທຶນດ້ານຫຼັກຊັບ, ພັນທະບັດ, ເງິນຝາກລະຫວ່າງທະນາຄານ, ເງິນຝາກລູກຄ້າ ແລະ ຄັງຕ່າງໆ ກໍ່ເພີ່ມຂຶ້ນຕາມໆກັນ. ໃນໄລຍະ 5 ປີຜ່ານມາເຫັນໄດ້ວ່າຍອດຊັບສິນ ທຄຕລ ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນປີ 2020 ເພີ່ມຂຶ້ນ 16%, ປີ 2021 ເພີ່ມຂຶ້ນ 26%, ປີ 2022 ເພີ່ມຂຶ້ນ 38%, ປີ 2023 ເພີ່ມຂຶ້ນ 34% ປີ, ປີ 2024 ເພີ່ມຂຶ້ນ 12% ແລະ ປີ 2025 ເພີ່ມຂຶ້ນ 13% ຕາມລຳດັບ

ຕາຕະລາງ 4: ຍອດຊັບສິນແຕ່ລະປີ

ຫົວໜ່ວຍ: ລ້ານກີບ

ລາຍການ	2025	2024	2023	2022	2021
ຍອດຊັບສິນ	160,756,835	142,191,250	126,433,759	94,493,015	68,236,991



3. ການລະດົມທຶນ

ວຽກງານການລະດົມທຶນ ຖືເປັນວຽກງານໜຶ່ງທີ່ສຳຄັນຂອງ ທຄຕລ ເນື່ອງຈາກແຫຼ່ງທຶນສ່ວນໃຫຍ່ແມ່ນມາຈາກເງິນຝາກຂອງລູກຄ້າ ເຊິ່ງໃນໄລຍະຜ່ານມາເຖິງປະຈຸບັນ ການລະດົມເງິນຝາກຂອງ ທຄຕລ ໄດ້ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ຍ້ອນຄວາມເຊື່ອໝັ້ນສູງຕໍ່ການບໍລິການຂອງທະນາຄານ ແລະ ການນຳໃຊ້ຜະລິດຕະພັນທາງດ້ານອີເລັກໂທນິກຕ່າງໆ ທີ່ນັບມື້ນັບເພີ່ມຂຶ້ນ ເຮັດໃຫ້ມີເງິນໝຸນວຽນຢູ່ໃນລະບົບທະນາຄານຫຼາຍຂຶ້ນ ຈຶ່ງເປັນປັດໄຈເຮັດໃຫ້ເງິນຝາກຂອງທະນາຄານມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຊິ່ງຊ່ວຍໃຫ້ການບໍລິຫານສະພາບຄ່ອງຂອງ ທຄຕລ ດີຂຶ້ນ ແລະ ຫຼຸດຜ່ອນການກູ້ຢືມເງິນຈາກພາກສ່ວນອື່ນທັງພາຍໃນ ແລະ ຕ່າງປະເທດ. ນອກຈາກນັ້ນ, ການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ກໍ່ເປັນອີກປັດໄຈໜຶ່ງທີ່ເຮັດໃຫ້ເງິນຝາກທັງໝົດທຽບເທົ່າສະກຸນເງິນກີບເພີ່ມຂຶ້ນ ໃນໄລຍະຜ່ານມາ. ແຕ່ເຖິງເງິນຝາກຈະມີການເພີ່ມຂຶ້ນຢ່າງຕໍ່ເນື່ອງກໍ່ຕາມ ໃນຕໍ່ໜ້າ ທຄຕລ ຍັງຈະໄດ້ອອກແຮງໃນການລະດົມທຶນດ້ວຍຫຼາຍຮູບແບບ ໂດຍການສຶກສາພຶດຕິກຳ ແລະ ຄວາມຕ້ອງການຂອງລູກຄ້າທີ່ປ່ຽນແປງໄປຕາມແຕ່ລະໄລຍະ, ສ້າງເງື່ອນໄຂອຳນວຍຄວາມສະດວກ, ວ່ອງໄວໃນການໃຫ້ບໍລິການ ແລະ ສາມາດ


ຕອບສະໜອງຄວາມຕ້ອງການຂອງທຸກກຸ່ມລູກຄ້າ ທັງນີ້, ກໍ່ເພື່ອເປັນການຮັກສາຖານລູກຄ້າເກົ່າໄວ້ໃຫ້ດີ ແລະ ຂະຫຍາຍຖານລູກຄ້າໃໝ່ໃຫ້ກວ້າງຂວາງອອກຕື່ມ ເຮັດໃຫ້ສາມາດຕອບສະໜອງຕາມຄວາມຕ້ອງການໃນການນຳໃຊ້ແຫຼ່ງທຶນ ໃນແຕ່ລະໄລຍະ.


ທາງດ້ານໂຄງສ້າງເງິນຝາກຂອງ ທຄຕລ ຮອດທ້າຍປີ 2025 ເງິນຝາກປະຢັດຍັງກວມອັດຕາສ່ວນສູງກວ່າໝູ່ 59.19%, ຮອງລົງມາແມ່ນເງິນຝາກມີກຳນົດ 23.71, ເງິນຝາກກະແສລາຍວັນ 13.10%, ເງິນຝາກທະນາຄານ ແລະ ສະຖາບັນການເງິນ 3.96% ແລະ ເງິນຝາກຄ້ຳປະກັນກວມເອົາ 0.04% ຕາມລຳດັບ ຊຶ່ງມີລາຍລະອຽດລຸ່ມນີ້:

ຕາຕະລາງ 5: ເງິນຝາກແຕ່ລະປີ

ຫົວໜ່ວຍ: ລ້ານກີບ

ປະເພດເງິນຝາກ	2025	2024	2023	2022	2021
ເງິນຝາກກະແສລາຍວັນ	19,764,196	16,286,689	16,773,450	10,938,271	7,627,802
ເງິນຝາກປະຢັດ	89,285,544	74,275,298	59,829,971	42,874,328	28,428,750
ເງິນຝາກມີກຳນົດ	35,766,926	36,283,976	31,394,673	26,007,200	20,439,403
ເງິນຝາກທະນາຄານ ແລະ ສະຖາບັນການເງິນ	5,968,495	6,070,399	9,418,490	6,591,804	5,226,879
ເງິນຝາກຄ້ຳປະກັນ	62,413	219,425	210,254	370,732	79,905
ເງິນຝາກທັງໝົດ	**150,847,574**	**133,135,787**	**117,626,838**	**86,782,335**	**61,802,739**






4. ການຂະຫຍາຍ ແລະ ການຄຸ້ມຄອງສິນເຊື່ອ


ການຂະຫຍາຍສິນເຊື່ອ ທຽບໃສ່ປີຜ່ານມາເຫັນວ່າມີການຂະຫຍາຍເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍລວມແລ້ວ ການຂະຫຍາຍສິນເຊື່ອ, ການສ້າງລາຍຮັບດ້ານດອກເບ້ຍ ແລະ ຄ່າທຳນຽມສິນເຊື່ອ ໃນປີຜ່ານມາແມ່ນມີແນວໂນ້ມທີ່ດີຂຶ້ນ, ແຕ່ເຖິງຢ່າງໃດກໍ່ຕາມ ທຄຕລ ກໍ່ຍັງມີລາຍຈ່າຍໃນການສຳຮອງເງິນແຮຄ່າເສື່ອມສິນເຊື່ອໃນລະດັບທີ່ສູງສົມຄວນ. ທາງດ້ານໂຄງສ້າງສິນເຊື່ອຂອງ ທຄຕລ ຮອດທ້າຍປີ 2025 ສິນເຊື່ອໃນຂະແໜງອຸດສາຫະກຳ ກວມເອົາສູງກວ່າໝູ່ 61.02%, ຮອງລົງມາແມ່ນຂະແໜງການຄ້າ 14.36%, ຂະແໜງກໍ່ສ້າງ 11.05%, ຂະແໜງບໍລິການ 7%, ຂະແໜງປະກອບວັດຖຸເຕັກນິກ 3.16%, ຂະແໜງການອື່ນໆ 2.22%, ຂະແໜງກະສິກຳ-ປ່າໄມ້ 1%, ຂະແໜງຂົນສົ່ງ-ໄປສະນີ 0.17% ແລະ ຂະແໜງຫັດຖະກຳ ກວມເອົາ 0.02% ຕາມລຳດັບ.

ຕາຕະລາງ 6: ເງິນກູ້ທັງໝົດແຍກຕາມຂະແໜງເສດຖະກິດ

ຫົວໜ່ວຍ: ລ້ານກີບ

ເງິນກູ້ທັງໝົດແຍກຕາມ ຂະແໜງ ເສດຖະກິດ	2025	2024	2023	2022	2021
ຂະແໜງອຸດສາຫະກຳ	42,420,856	37,341,192	29,659,421	23,252,832	16,367,536
ຂະແໜງບໍລິການ	4,865,512	5,333,145	5,587,391	5,667,984	4,609,807
ຂະແໜງການຄ້າ	9,982,918	9,425,757	6,507,353	4,672,093	3,830,878
ຂະແໜງກໍ່ສ້າງ	7,678,948	6,389,390	6,354,360	5,120,441	3,723,445
ຂະແໜງຂົນສົ່ງ-ໄປສະນີ	116,184	230,923	2,095,071	1,751,815	1,199,632
ຂະແໜງປະກອບວັດຖຸເຕັກນິກ	2,199,479	1,710,799	1,017,387	1,755,682	50,507
ຂະແໜງກະສິກຳ-ປ່າໄມ້	692,438	512,125	235,490	80,631	45,683
ຂະແໜງຫັດຖະກຳ	16,386	11,624	3,093	2,830	2,103
ຂະແໜງອື່ນໆ	1,541,181	1,207,667	738,497	504,494	251,383
ເງິນກູ້ທັງໝົດ	**69,513,902**	**62,162,622**	**52,198,063**	**42,808,802**	**30,080,974**





5. ລາຍຮັບ ແລະ ລາຍຈ່າຍ


➢ ລາຍຮັບ

ຜົນການດຳເນີນທຸລະກິດຂອງ ທຄຕລ ໃນປີ 2025 ທີ່ຜ່ານມາ ເຫັນວ່າສາມາດສ້າງລາຍຮັບເພີ່ມຂຶ້ນໃນທຸກໆດ້ານເປັນຕົ້ນແມ່ນ ລາຍຮັບສຸດທິຈາກດອກເບ້ຍ, ລາຍຮັບສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ. ສຳລັບໂຄງສ້າງລາຍຮັບສຸດທິໃນປີ 2025 ເຫັນໄດ້ວ່າ ລາຍຮັບສຸດທິຈາກດອກເບ້ຍ ຍັງກວມອັດຕາສ່ວນທີ່ສູງກວ່າໝູ່ 71.15%, ຮອງລົງມາແມ່ນລາຍຮັບສຸດທິຈາກຄ່າທຳນຽມ 15.24%, ລາຍຮັບອື່ນໆ 9.97% ແລະ ລາຍຮັບສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ ກວມເອົາ 6.64% ຕາມລຳດັບ.

ຕາຕະລາງ 7: ລາຍຮັບແຕ່ລະປີ

ຫົວໜ່ວຍ: ລ້ານກີບ

ເນື້ອໃນ	2025	2024	2024	2022	2021
ລາຍຮັບສຸດທິດອກເບ້ຍ	3,821,121	3,652,284	1,738,189	1,270,883	752,597
ລາຍຮັບສຸດທິຄ່າທຳນຽມ	818,311	830,984	553,206	364,145	278,198
ລາຍຮັບສຸດທິຊື້ຂາຍເງິນຕາຕ່າງປະເທດ	356,734	244,081	1390,926	(38,154)	4,084
ລາຍຮັບອື່ນໆ	374,074	506,516	445,957	121,260	180,385
ລວມ	**5,370,240**	**5,233,865**	**3,128,278**	**1,718,134**	**1,215,264**



- **ລາຍຈ່າຍໃນການດຳເນີນງານ**

ຄຽງຄູ່ກັບກັບການສ້າງລາຍຮັບຂອງ ທຄຕລ ນັ້ນ ຍັງມີລາຍຈ່າຍທີ່ຕິດພັນໃນການບໍລິຫານງານ, ການດຳເນີນງານໃນທຸລະກິດ, ວຽກງານບໍລິການ, ວຽກງານດ້ານບຸກຄະລາກອນ ແລະ ການພັດທະນາວຽກງານຕ່າງໆໃຫ້ທັນສະໄໝ, ສະດວກສະບາຍ ແລະ ຮັບປະກັນຄວາມປອດໄພ. ສຳລັບໂຄງສ້າງລາຍຈ່າຍໃນການດຳເນີນງານໃນປີ 2025 ລາຍຈ່າຍດ້ານພະນັກງານກວມ 61.97%, ລາຍຈ່າຍບໍລິຫານກວມ 27.3% ແລະ ລາຍຈ່າຍຫຼຸ້ຍຫ້ຽນຊັບສິນບັດກວມ 11% ຕາມລຳດັບ. ໃນຕໍ່ໜ້າ ທຄຕລ ຍັງຈະໄດ້ສືບຕໍ່ເອົາໃຈໃສ່ໃນການຄວບຄຸມລາຍຈ່າຍດ້ານຕ່າງໆ ທີ່ບໍ່ຈຳເປັນໃຫ້ຫຼຸດລົງ ແລະ ຄວບຄຸມລາຍຈ່າຍໃນການດຳເນີນງານດ້ານຕ່າງໆໃຫ້ຢູ່ໃນລະດັບທີ່ເໝາະສົມ ທັງນີ້, ກໍ່ເພື່ອເພີ່ມປະສິດທິຜົນໃນການດຳເນີນງານໃຫ້ສູງຂຶ້ນ.

ຕາຕະລາງ 8: ລາຍຈ່າຍແຕ່ລະປີ

ຫົວໜ່ວຍ: ລ້ານກີບ

ເນື້ອໃນ	2025	2024	2023	2022	2021
ລາຍຈ່າຍພະນັກງານ	(857,643)	(595,148)	(399,534)	(329,249)	(305,806)
ລາຍຈ່າຍບໍລິຫານ	(374,066)	(322,607)	(294,971)	(195,263)	(175,296)
ລາຍຈ່າຍຫຼ້ຽຫ້ຽນ	(152,205)	(118,159)	(102,190)	(120,721)	(89,390)
ລວມ	**(1,383,914)**	**(1,035,914)**	**(796,695)**	**(645,233)**	**(570,492)**




6. ກຳໄລ ແລະ ຂາດທຶນ

ຈາກສະພາບເສດຖະກິດໂດຍລວມທີ່ເລີ່ມປັບຕົວດີຂຶ້ນ ແລະ ດ້ວຍຄວາມພະຍາຍາມໃນການແກ້ໄຂສະພາບການດຳເນີນທຸລະກິດພາຍໃນຂອງ ທຄຕລ ເຮັດໃຫ້ ຜົນການດຳເນີນທຸລະກິດໃນປີ 2025 ໄດ້ຮັບການປັບປຸງດີຂຶ້ນ ດ້ວຍຈັງຫວະທີ່ຕໍ່ເນື່ອງ ການສ້າງກຳໄລສາມາດບັນລຸ ແລະ ລື່ນແຜນການທີ່ກຳນົດໄວ້.

ຕາຕະລາງ 9: ກຳໄລແຕ່ລະປີ

ຫົວໜ່ວຍ: ລ້ານກີບ

ລາຍການ	2025	2024	2023	2022	2021
ກຳໄລກ່ອນອາກອນ	1,152,842	694,511	283,120	197,079	12,585



7. ເງິນປັນຜົນ


ໃນໄລຍະປີ 2025 ຜົນການດຳເນີນທຸລະກິດຂອງ ທຄຕລ ໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າປີທີ່ຜ່ານມາ. ທຄຕລ ໄດ້ເອົາໃຈໃສ່ສູ້ຊຶນປະຕິບັດແຜນດຳເນີນທຸລະກິດ, ພັດທະນາຜະລິດຕະພັນໃໝ່ຫຼາຍຢ່າງເພື່ອເປັນທາງເລືອກໃຫ້ແກ່ຜູ້ໃຊ້ບໍລິການ ແລະ ເປັນຊ່ອງທາງໃນການຊອກຫາແຫຼ່ງລາຍຮັບເພີ່ມຂຶ້ນ. ທັງນີ້ກໍ່ເພື່ອການສ້າງຄວາມເຂັ້ມແຂງດ້ານທຸລະກິດ, ຮັກສາຜົນປະໂຫຍດ, ສ້າງຄວາມໝັ້ນໃຈໃຫ້ຜູ້ຖືຮຸ້ນ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມາລົງທຶນໃນຮຸ້ນຂອງ ທຄຕລ ໂດຍສະເພາະການແບ່ງເງິນປັນຜົນຈາກກຳໄລສຸດທິຂອງ ທຄຕລ ພາຍຫຼັງຈາກຫັກເຂົ້າຄັງຕ່າງໆ ເພື່ອຈັດສັນເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນໃນແຕ່ລະປີ, ຈາກຜົນການດຳເນີນງານໃນປີ 2025 ທີ່ຜ່ານມາ ທຄຕລ ສະເໜີຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນໃນຈຳນວນ 200 ກີບ/ຮຸ້ນ ເຊິ່ງປັບຕົວດີຂຶ້ນກວ່າປີທີ່ຜ່ານມາ 100% (ໃນປີ 2024 ທຄຕລ ຈ່າຍເງິນປັນຜົນ 100 ກີບ/ຮຸ້ນ ເຊິ່ງເວລານັ້ນ ທຄຕລ ມີຮຸ້ນທັງໝົດ 1,038,616,500 ຮຸ້ນ; ໃນເດືອນ 11/2025 ສຳເລັດການເພີ່ມທຶນຈົດທະບຽນໃໝ່ ດ້ວຍການອອກຈຳໜ່າຍຮຸ້ນເພີ່ມທຶນ (RO/PO) ເຮັດໃຫ້ປະຈຸບັນ ທຄຕລ ມີຮຸ້ນທັງໝົດຈຳນວນ 1,544,872,000 ຮຸ້ນ ຫຼື ເພີ່ມຂຶ້ນ 1.5 ເທົ່າ ຂອງຈຳນວນຮຸ້ນໃນປີ 2024)


ຕາຕະລາງ 10: ເງິນປັນຜົນແຕ່ລະປີ — ຫົວໜ່ວຍ: ກີບຕໍ່ຮຸ້ນ

ເນື້ອໃນ	2025	2024	2023	2022	2021
ເງິນປັນຜົນ	200	100	300	100	0

8. ການຊື້-ຂາຍຮຸ້ນຂອງ ທຄຕລ ຢູ່ໃນຕະຫຼາດຫຼັກຊັບ

ດ້ານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບ ເຫັນໄດ້ວ່າມີຫຼາຍບໍລິສັດທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ລາວ ແລະ ດຳເນີນເປີດການຊື້-ຂາຍຮຸ້ນໃນແຕ່ລະວັນ. ເຊິ່ງໃນນັ້ນ, ຮຸ້ນຂອງ ທຄຕລ ແມ່ນໄດ້ສ້າງຄວາມສົນໃຈແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດຫຼາຍສົມຄວນ ເຊິ່ງສະແດງອອກໃນການຊື້-ຂາຍຕໍ່ວັນ. ສຳລັບໃນປີ 2025 ໂດຍສະເລ່ຍປະລິມານການຊື້-ຂາຍຮຸ້ນ ທຄຕລ ແມ່ນ 704,000 ຮຸ້ນ/ວັນ (ປະລິມານການຊື້-ຂາຍຮຸ້ນໃນປີ ຈຳນວນ 185,868,200 ຮຸ້ນ, ເປັນຈຳນວນເງິນທັງໝົດ 257 ຕື້ກວ່າກີບ) ຖ້າທຽບໃສ່ປີຜ່ານມາເຫັນວ່າປະລິມານການຊື້ຂາຍມີການເພີ່ມຂຶ້ນຫຼາຍສົມຄວນ. ສ່ວນລາຄາຮຸ້ນຂອງ ທຄຕລ ສະເລ່ຍໝົດປີຢູ່ໃນລະດັບ 1,251 ກີບ/ຮຸ້ນ (ໃນນັ້ນ, ລາຄາສູງສຸດແມ່ນ 1,510 ກີບ/ຮຸ້ນ ແລະ ລາຄາຕ່ຳສຸດແມ່ນ 1,094 ກີບ/ຮຸ້ນ).


ລາຄາຮຸ້ນປີ 2025
1,600
1,400
1,200
1,000
800
600
400
200
-
2/01/2025
2/02/2025
2/03/2025
2/04/2025
2/05/2025
2/06/2025
2/07/2025
2/08/2025
2/09/2025
2/10/2025
2/11/2025
2/12/2025


ປະລິມານ ຊື້-ຂາຍ(ຮຸ້ນ) ປີ 2025
25,000,000
20,000,000
15,000,000
10,000,000
5,000,000
0
2-Jan-25
2-Feb-25
2-Mar-25
2-Apr-25
2-May-25
2-Jun-25
2-Jul-25
2-Aug-25
2-Sep-25
2-Oct-25
2-Nov-25
2-Dec-25

VI. ໂຄງປະກອບການຈັດຕັ້ງ

1. ຜູ້ຖືຮຸ້ນ

1) ລັດຖະບານແຫ່ງ ສປປ ລາວ ຕາງໜ້າໂດຍກະຊວງການເງິນ ຖືຮຸ້ນ 60% ຂອງຮຸ້ນ ທຄຕລ ທັງໝົດ;
2) ບໍລິສັດ COFIBRED (ຄູ່ຮ່ວມຮຸ້ນທາງຍຸດທະສາດ) ເຊິ່ງເປັນບໍລິສັດລູກຂອງກຸ່ມທະນາຄານ BRED ຈາກປະເທດຝຣັ່ງ ຖືຮຸ້ນ 10% ຂອງຮຸ້ນ ທຄຕລ ທັງໝົດ.
3) ສ່ວນນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ (ທັງບຸກຄົນ ແລະ ນິຕິບຸກຄົນ) ຖືຮຸ້ນລວມກັນເທົ່າກັບ 30% ຂອງຮຸ້ນ ທຄຕລ ທັງໝົດ.

+ ໂຄງສ້າງການຖືຮຸ້ນ

ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2025 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	ສັດສ່ວນ
ລັດຖະບານ (ຕາງໜ້າໂດຍກະຊວງການເງິນ)	926,922,633	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ (COFIBRED)	154,487,295	10%
ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດອື່ນໆ	463,462,072	30%
ລວມທັງໝົດ	**1,544,872,000**	**100%**

2. ສະພາບໍລິຫານ

ສະພາບໍລິຫານ ທຄຕລ ທີ່ປະຕິບັດໜ້າທີ່ໃນໄລຍະປີ 2025 ມີລາຍຊື່ລຸ່ມນີ້:

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ບ່ອນປະຈຳການ	ວັນທີ່ແຕ່ງຕັ້ງ/ສິ້ນສຸດ
1	ທ່ານ ສຸລິວັດ ສຸວັນນະຈູມຄຳ	ປະທານ	ກະຊວງການເງິນ	ແຕ່ງຕັ້ງວັນທີ 30 ເມສາ 2025
2	ທ່ານ ປອ. ອາຄົມ ປຣະເສີດ	ຮອງປະທານ, ກຳມະການອິດສະລະ	ສະພາແຫ່ງຊາດ	ວາລະສິ້ນສຸດ ວັນ 05 ກັນຍາ 2025
3	ທ່ານ ນ. ບຸນຕາ ດາຣາວີ	ຮອງປະທານ, ກຳມະການອິດສະລະ	-	ແຕ່ງຕັ້ງວັນທີ 05 ກັນຍາ 2025
4	ທ່ານ ນ. ສາຍສະໝອນ ຈັນທະຈັກ	ກຳມະການ	ຜູ້ອຳນວຍການ ທຄຕລ	ແຕ່ງຕັ້ງວັນທີ 22 ພະຈິກ 2022
5	ທ່ານ ມິກາແອລ໌ ເດີ ແຊ໌ງ	ກຳມະການ	COFIBRED	ແຕ່ງຕັ້ງວັນທີ 05 ກັນຍາ 2025
6	ທ່ານ ປະສົມເພັດ ຄຳຕັນ	ກຳມະການ	ກະຊວງການເງິນ	ແຕ່ງຕັ້ງວັນທີ 29 ຕຸລາ 2021
7	ທ່ານ ຣສ. ທອງເພັດ ຈັນທະນີວົງ	ກຳມະການ ອິດສະລະ	ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ	ແຕ່ງຕັ້ງວັນທີ 29 ຕຸລາ 2021
8	ທ່ານນາງ ລັດດາວັນ ຊົງວິໄລ	ກຳມະການ ອິດສະລະ	ສະຖາບັນຄົ້ນຄວ້າ ເສດຖະກິດແຫ່ງຊາດ	ແຕ່ງຕັ້ງວັນທີ 29 ຕຸລາ 2021
9	ທ່ານ ສອນໄຊ ສີລາເພັດ	ກຳມະການ ອິດສະລະ	ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ	ແຕ່ງຕັ້ງວັນທີ 29 ຕຸລາ 2021

ສະພາບໍລິຫານ ທຄຕລ (ຊຸດປັດຈຸບັນ)



ທ່ານ ສຸລິວັດ ສຸວັນມະຈູມຄຳ
ປະທານສະພາບໍລິຫານ



ທ່ານ ນ. ບຸນຕາ ດາຣາວີ
ຮອງປະທານສະພາບໍລິຫານ, ກຳມະການອິດສະຫຼະ



ທ່ານ ນ. ສາຍສະໝອນ ຈັນທະຈັກ
ກຳມະການ



ທ່ານ ມິກາແອລ ເດີ ແຄ໋ກ
ກຳມະການ



ທ່ານ ປະສົມເພັດ ຄຳຕັນ
ກຳມະການ



ທ່ານ ຣສ ທອງເພັດ ຈັນທະນິວົງ
ກຳມະການອິດສະຫຼະ



ທ່ານ ນ. ລັດດາວັນ ຊົ່ງວິໄລ
ກຳມະການອິດສະຫຼະ



ທ່ານ ສອນໄຊ ສີລາເພັດ
ກຳມະການອິດສະຫຼະ

www.bcel.com.la

+85621 213200

ເລກທີ 01, ຖະໜົນປາງຄຳ
ບ. ຊຽງຍືນ ມ. ຈັນທະບູລີ ນະຄອນຫຼວງວຽງຈັນ

3. ຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ທຄຕລ ປະກອບດ້ວຍ 4 ຄະນະກຳມະການ ເຊິ່ງແຕ່ລະຄະນະກຳມະການປະກອບດ້ວຍສະມາຊິກສະພາບໍລິຫານ 3-4 ທ່ານ ຕາມລາຍລະອຽດດັ່ງລຸ່ມນີ້:

3.1. ຄະນະກຳມະການກວດສອບ

1. ທ່ານ ສອນໄຊ ສີລາເພັດ	ກຳມະການສະພາບໍລິຫານ ທຄຕລ	ເປັນປະທານ
2. ທ່ານ ຣສ ທອງເພັດ ຈັນທະນິວົງ	ກຳມະການສະພາບໍລິຫານ ທຄຕລ	ເປັນຮອງປະທານ
3. ທ່ານ ປະສົມເພັດ ຄຳຕັນ	ກຳມະການສະພາບໍລິຫານ ທຄຕລ	ເປັນກຳມະການ

3.2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

1. ທ່ານ ຣສ ທອງເພັດ ຈັນທະນິວົງ	ກຳມະການສະພາບໍລິຫານ ທຄຕລ	ເປັນປະທານ
2. ທ່ານ ປະສົມເພັດ ຄຳຕັນ	ກຳມະການສະພາບໍລິຫານ ທຄຕລ	ເປັນຮອງປະທານ
3. ທ່ານ ສອນໄຊ ສີລາເພັດ	ກຳມະການສະພາບໍລິຫານ ທຄຕລ	ເປັນກຳມະການ

3.3. ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການກຳນົດຄ່າຕອບແທນ:

1. ທ່ານນາງ ບຸນຕາ ດາຣາວີ	ຮອງປະທານສະພາບໍລິຫານ ທຄຕລ	ເປັນປະທານ
2. ທ່ານ ສຸລິວັດ ສຸວັນນະຈຸມຄຳ	ປະທານສະພາບໍລິຫານ ທຄຕລ	ຮອງປະທານ
3. ທ່ານນາງ ສາຍສະໝອນ ຈັນທະຈັກ	ກຳມະການສະພາບໍລິຫານ ທຄຕລ	ເປັນກຳມະການ

3.4. ຄະນະກຳມະການຄຸ້ມຄອງບໍລິຫານ

1. ທ່ານນາງ ລັດດາວັນ ຊົງວິໄລ	ກຳມະການສະພາບໍລິຫານ ທຄຕລ	ເປັນປະທານ
2. ທ່ານນາງ ສາຍສະໝອນ ຈັນທະຈັກ	ກຳມະການສະພາບໍລິຫານ ທຄຕລ	ເປັນຮອງປະທານ
3. ທ່ານ ສອນໄຊ ສີລາເພັດ	ກຳມະການສະພາບໍລິຫານ ທຄຕລ	ເປັນກຳມະການ
4. ທ່ານ ມິກາແອລ ເດີ ແຊ່ງ	ກຳມະການສະພາບໍລິຫານ ທຄຕລ	ເປັນກຳມະການ

➢ **ການຖືຮຸ້ນ ທຄຕລ ຂອງສະມາຊິກສະພາບໍລິຫານ (ຊຸດປັດຈະບັນ)**

ອີງຕາມບັນຊີລາຍຊື່ຜູ້ຖືຮຸ້ນຂອງ ທຄຕລ ທີ່ປິດໃນວັນທີ 11 ກັນຍາ 2025, ສະມາຊິກສະພາບໍລິຫານ ຍັງຄົງຖືຄອງຮຸ້ນຂອງ ທຄຕລ ດັ່ງນີ້:

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຈຳນວນຮຸ້ນທີ່ຖື	ສັດສ່ວນ	ໝາຍເຫດ
1	ທ່ານ ສຸລິວັດ ສຸວັນນະຈຸມຄຳ	ປະທານ	0 ຮຸ້ນ	-	
2	ທ່ານນາງ ບຸນຕາ ດາຣາວີ	ກຳມະການອິດສະຫຼະ ຮອງປະທານ	30,000 ຮຸ້ນ	0.0028%	
3	ທ່ານ ນ. ສາຍສະໝອນ ຈັນທະຈັກ	ກຳມະການ ຜູ້ອຳນວຍການ	0 ຮຸ້ນ	-	
4	ທ່ານ ມິກາແອລ ເດີ ແຊ່ງ	ກຳມະການ	0 ຮຸ້ນ	-	
5	ທ່ານ ປະສົມເພັດ ຄຳຕັນ	ກຳມະການ	0 ຮຸ້ນ	-	
6	ທ່ານ ຣສ.ປອ ທອງເພັດ ຈັນທະນິວົງ	ກຳມະການອິດສະຫຼະ	0 ຮຸ້ນ	-	
7	ທ່ານ ນ. ລັດດາວັນ ຊົງວິໄລ	ກຳມະການອິດສະຫຼະ	0 ຮຸ້ນ	-	
8	ທ່ານ ສອນໄຊ ສີລາເພັດ	ກຳມະການອິດສະຫຼະ	0 ຮຸ້ນ	-	

4. ຄະນະອຳນວຍການ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີແຕ່ງຕັ້ງ
1	ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ສິງຫາ 2022
2	ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
3	ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
4	ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
5	ທ່ານ ສາຍຈິດ ສິມມະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
6	ທ່ານ ນ. ພູແສງທອງ ອານຸລັກຄຳ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ກໍລະກົດ 2024
7	ທ່ານ ນາລິນ ສີລະວົງສິດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ກໍລະກົດ 2024

ການຖືຮຸ້ນ ທຄຕລ ຂອງຄະນະອຳນວຍການ

ອີງຕາມບັນຊີລາຍຊື່ຜູ້ຖືຮຸ້ນຂອງ ທຄຕລ ທີ່ປິດໃນວັນທີ 11 ກັນຍາ 2025, ຄະນະອຳນວຍການ ຖືຄອງຮຸ້ນຂອງ ທຄຕລ ດັ່ງນີ້:

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຈຳນວນຮຸ້ນທີ່ຖື	ສັດສ່ວນ	ໝາຍເຫດ
1	ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	0 ຮຸ້ນ	-	
2	ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	51,625 ຮຸ້ນ	0.0049%	
3	ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	60,000 ຮຸ້ນ	0.0057%	
4	ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	55,000 ຮຸ້ນ	0.0052%	
5	ທ່ານ ສາຍຈິດ ສິມມະວົງ	ຮອງຜູ້ອຳນວຍການ	9,000 ຮຸ້ນ	0.0008%	
6	ທ່ານ ນ. ພູແສງທອງ ອານຸລັກຄຳ	ຮອງຜູ້ອຳນວຍການ	70,000 ຮຸ້ນ	0.0067%	
7	ທ່ານ ນາລິນ ສີລະວົງສິດ	ຮອງຜູ້ອຳນວຍການ	0 ຮຸ້ນ	-	

5. ຄ່າຕອບແທນ

ຄ່າຕອບແທນໃຫ້ແກ່ສະພາບໍລິຫານ ແລະ ຄະນະອຳນວຍການ ແມ່ນໄດ້ປະຕິບັດຢ່າງສອດຄ່ອງກັບນະໂຍບາຍຄ່າຕອບແທນຕາມລະບຽບທີ່ກ່ຽວຂ້ອງ ຂອງ ທຄຕລ. ລວມເງິນເດືອນ ແລະ ຜົນປະໂຫຍດສຳລັບສະພາບໍລິຫານ ແລະ ຄະນະອຳນວຍການໃນປີ 2025 ເທົ່າກັບ 7,221 ລ້ານກີບ ສຳລັບປີ 2024 ເທົ່າກັບ 4,028 ລ້ານກີບ.

ຄະນະອຳນວຍການ ທຄຕລ

ຊຸດປັດຈຸບັນ



ທ່ານ ນ. ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ



ທ່ານ ນັນທະລາດ ແກ້ວປະເສີດ
ຮອງຜູ້ອຳນວຍການ



ທ່ານ ກົງສັກ ສຸພອນສີ
ຮອງຜູ້ອຳນວຍການ



ທ່ານ ນ. ບົວໄພວັນ ນັນດາວົງ
ຮອງຜູ້ອຳນວຍການ



ທ່ານ ສາຍຈິດ ສິມມະວົງ
ຮອງຜູ້ອຳນວຍການ



ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ



ທ່ານ ນາລິນ ສີລະວົງສິດ
ຮອງຜູ້ອຳນວຍການ

www.bcel.com.la | 021 213 200 | ບ. ຊຽງຍືນ ມ. ຈັນທະບູລີ ນະຄອນຫຼວງວຽງຈັນ

VII. ກອງປະຊຸມຜູ້ຖືຮຸ້ນ ແລະ ການປະຕິບັດໜ້າທີ່ຂອງສະພາບໍລິຫານ

1. ກອງປະຊຸມຜູ້ຖືຮຸ້ນ ແລະ ການຈັດຕັ້ງປະຕິບັດ

ໃນປີ 2025 ທຄຕລ ໄດ້ຈັດກອງປະຊຸມຜູ້ຖືຮຸ້ນ 2 ຄັ້ງ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ໃນ ວັນທີ 30/04/2025 ແລະ ກອງປະຊຸມວິສາມັນ ຜູ້ຖືຮຸ້ນປະຈຳປີ 2025 ໃນວັນທີ 05/09/2025;

❖ **ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ໄດ້ມີມະຕິຮັບຮອງດັ່ງນີ້:**

- **ວາລະທີ 01:** ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ທຄຕລ ປະຈຳປີ 2023;
- **ວາລະທີ 02:** ຮັບຮອງ ບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2024;
- **ວາລະທີ 03:** ຮັບຮອງການຈັດສັນກຳໄລປະຈຳປີ 2024 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ;
- **ວາລະທີ 04:** ຮັບຮອງເອົາແຜນການປີ 2025;
- **ວາລະທີ 05:** ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029;
- **ວາລະທີ 06:** ຮັບຮອງເອົາຜູ້ກວດສອບອິດສະລະປະຈຳປີ 2025;
- **ວາລະທີ 07:** ຮັບຮອງ ການແຕ່ງຕັ້ງ ປະທານ ແລະ ສະມາຊິກສະພາບໍລິຫານທຄຕລ ປ່ຽນແທນທ່ານສະມາຊິກເດີມທີ່ພົ້ນຈາກໜ້າທີ່ ແລະ ຮັບຮອງອາຍຸການຂອງສະພາບໍລິຫານ;
- **ວາລະທີ 08:** ຮັບຮອງ ການເພີ່ມທຶນຈົດທະບຽນຂອງ ທຄຕລ;
- **ວາລະທີ 09:** ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງຈຳກັດ;
- **ວາລະທີ 10:** ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ບໍລິສັດເຊລິດໄຟຟ້າລາວ ມະຫາຊົນ.

❖ **ກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2025 ໄດ້ມີມະຕິຮັບຮອງດັ່ງນີ້:**

- **ວາລະທີ 01:** ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2024;
- **ວາລະທີ 02:** ຮັບຮອງການດັດແກ້ແຜນທຸລະກິດ ຂອງ ທຄຕລ ປະຈຳປີ 2025;
- **ວາລະທີ 03:** ຮັບຮອງ ການແຕ່ງຕັ້ງຮອງປະທານສະພາບໍລິຫານ ທຄຕລ;
- **ວາລະທີ 04:** ຮັບຮອງ ການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ;

2. ການປະຕິບັດໜ້າທີ່ຂອງສະພາບໍລິຫານ:

2.1. ກອງປະຊຸມ

ໃນປີ 2025, ທຄຕລ ຈັດກອງປະຊຸມສະພາບໍລິຫານ ທຄຕລ ທັງໝົດ 09 ຄັ້ງ ໃນນີ້ ມີກອງປະຊຸມສາມັນ ຈຳນວນ 04 ຄັ້ງ ແລະ ກອງປະຊຸມວິສາມັນ 05 ຄັ້ງ:

❖ ກອງປະຊຸມສະໄໝສາມັນ ຈຳນວນ 04 ຄັ້ງ ຄື:

1) ຄັ້ງທີ 1: 18/03/2025;
2) ຄັ້ງທີ 2: 03/06/2025;
3) ຄັ້ງທີ 3: 10/11/2025;
4) ຄັ້ງທີ 4: 26/12/2025;

❖ ກອງປະຊຸມສະໄໝວິສາມັນ ຈຳນວນ 05 ຄັ້ງ ຄື:

1) ຄັ້ງທີ 1: 17/04/2025;
2) ຄັ້ງທີ 2: 21/04/2025;
3) ຄັ້ງທີ 3: 10/07/2025;
4) ຄັ້ງທີ 4: 29/08/2025;
5) ຄັ້ງທີ 5: 05/12/2025;

2.2. ການເຂົ້າຮ່ວມກອງປະຊຸມ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຮ່ວມປະຊຸມ	ຂາດປະຊຸມ	ໝາຍເຫດ
1	ທ່ານ ສຸລິວັດ ສຸວັນນະຈູມຄຳ	ປະທານສະພາບໍລິຫານ	09	0	
2	ທ່ານ ປອ ອາຄົມ ປຣະເສີດ	ຮອງປະທານສະພາ ບໍລິຫານ/ກຳມະການອິດ ສະລະ (ທ່ານເດີມ)	02	0	(ອີກ 7 ຄັ້ງທີ່ເຫຼືອທ່ານບໍ່ ໄດ້ເຂົ້າຮ່ວມ ເນື່ອງຈາກ ທ່ານສິ້ນສຸດວາລະ)
3	ທ່ານ ນ. ບຸນຕາ ດາຣາວີ	ຮອງປະທານສະພາ ບໍລິຫານ (ທ່ານໃໝ່)	06	0	(ອີກ 03 ຄັ້ງກ່ອນໜ້າ ນັ້ນ ທ່ານຍັງບໍ່ທັນໄດ້ ຮັບການແຕ່ງຕັ້ງ)
4	ທ່ານ ນ. ສາຍສະໝອນ ຈັນທະຈັກ	ກຳມະການ	09	0	
5	ທ່ານ ມິກາແອລ໌ ເດີ ແຊ່ງ	ກຳມະການ	06	03	ຂາດມີເຫດຜົນ
6	ທ່ານ ປະສົມພັດ ຄຳຕັນ	ກຳມະການ	09	0	
7	ທ່ານ ສອນໄຊ ສີລາພັດ	ກຳມະການອິດສະລະ	06	03	ຂາດມີເຫດຜົນ
8	ທ່ານ ຣສ ທອງພັດ ຈັນທະນີວົງ	ກຳມະການອິດສະລະ	09	0	
9	ທ່ານ ນ. ລັດດາວັນ ຊົງລີໄລ	ກຳມະການອິດສະລະ	09	0	

2.3. ມະຕິກອງປະຊຸມທີ່ສຳຄັນໃນກອງປະຊຸມສະພາບໍລິຫານ:

ບາງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານທີ່ໄດ້ຈັດຂຶ້ນໃນຮອບປີຜ່ານມາລວມມີດັ່ງນີ້:

1) ຮັບຊາບການລາຍງານກ່ຽວກັບການປ່ຽນແປງປະທານສະພາບໍລິຫານ ທຄຕລ ເພື່ອນຳສະເໜີຕໍ່ກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ.
2) ຮັບຮອງຜົນການກວດສອບເອກະລາຍງານການເງິນຂອງ ທຄຕລ ປະຈຳປີ 2024 ຕາມມາດຕະຖານບັນຊີລາວ ທີ່ກວດສອບໂດຍຜູ້ກວດສອບອິດສະລະ;

3) ຮັບຮອງສັດສ່ວນການຈັດສັນກຳໄລປະຈຳປີ 2024 ເຂົ້າຄັງຕ່າງໆ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;
4) ຮັບຮອງເງິນປັນຜົນປະຈຳປີ 2024 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ:
    - ເງິນປັນຜົນ: 100 ກີບ/ຮຸ້ນ;
    - ມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອຮັບເງິນປັນຜົນ: 25 ເມສາ 2025;
    - ມື້ຈ່າຍເງິນປັນຜົນ: 14 ພຶດສະພາ 2025.

5) ຮັບຮອງແຜນດຳເນີນທຸລະກິດປະຈຳປີ 2025 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ.
6) ຮັບຮອງແຜນຍຸດທະສາດຂອງ ທຄຕລ ໄລຍະປີ 2025-2029 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ.
7) ຮັບຮອງທາງດ້ານຫຼັກການກ່ຽວກັບການຮັບໜີ້ຕ້ອງຮັບມາເປັນຫຼັກຊັບຄ້ຳປະກັນ.
8) ຮັບຮອງທາງດ້ານຫຼັກການກ່ຽວກັບການປ່ອຍສິນເຊື່ອໃຫ້ແກ່ໂຄງການກໍ່ສ້າງທີ່ຕິດພັນກັບໂຄງການຂອງລັດຖະບານໃນຕໍ່ໜ້າ.
9) ຮັບຮອງການແຕ່ງຕັ້ງຜູ້ກວດສອບອິດສະລະປະຈຳປີ 2025 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ.
10) ພິຈາລະນາຮັບຮອງແຜນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024
11) ຮັບຮອງແຜນຈັດກອງປະຊຸມສະພາບໍລິຫານ ແລະ ຄະນະກຳມະການສະພາບໍລິຫານ ປີ 2025;
12) ຮັບຮອງການການແຕ່ງຕັ້ງ ແລະ ການສັບຊ້ອນບຸກຄະລາກອນ ຂັ້ນຄະນະພະແນກ 1 ຕຳແໜ່ງ.
13) ຮັບຊາບການລາຍງານ ກ່ຽວກັບ ວຽກງານຄຸ້ມຄອງຄວາມສ່ຽງ ປະຈຳໄຕມາດ 01/2025 ແລະ ຄວາມຄືບ ໜ້າ ຂອງການຈັດຕັ້ງປະຕິບັດໂຄງ ການບາເຊວ II ປະຈຳໄຕມາດ 01/2025;
14) ຮັບຮອງຜົນການປະເມີນການດຳເນີນງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2024;
15) ຮັບຮອງແບບຟອມ ສຳລັບການປະເມີນການດຳເນີນງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2025.
16) ຮັບຊາບການລາຍງານ ກ່ຽວກັບຄວາມຄືບໜ້າການຈັດຊື້-ຈັດຈ້າງບໍລິສັດທີ່ເຂົ້າຮ່ວມປະມູນໂຄງການ Data Center ໄລຍະທີ 02.
17) ຮັບຮອງທາງດ້ານຫຼັກການ ກ່ຽວກັບ ການສະເໜີປັບປຸງແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ຂອງ ທຄຕລ ປະຈຳປີ 2025;
18) ຮັບຮອງທາງດ້ານຫຼັກການ ກ່ຽວກັບ ການຄັດເລືອກບັນດາຜູ້ຮັບເໝົາໂຄງການດາຕ້າເຊັນເຕີຂອງ ທຄຕລ ໄລຍະທີ 02;
19) ຮັບຮອງທາງດ້ານຫຼັກການ ກ່ຽວກັບ ວຽກງານການເພີ່ມທຶນຂອງ ທຄຕລ;
20) ຮັບຮອງການປ່ອຍກູ້ໃຫ້ລູກຄ້າບໍລິສັດ 10 ລາຍການ ທີ່ຂຶ້ນກັບສິດອະນຸມັດຂອງສະພາບໍລິຫານ;
21) ຮັບຮອງການແຕ່ງຕັ້ງ ຮອງປະທານສະພາບໍລິຫານ ທຄຕລ ຄົນໃໝ່ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ.

22) ຮັບຮອງການດັດແກ້ແຜນທຸລະກິດປະຈຳປີ 2025;
23) ຮັບຮອງແຜນການຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2025
24) ຮັບຊາບການລາຍງານຄວາມຄືບໜ້າຂອງວຽກງານການເພີ່ມທຶນຂອງ ທຄຕລ.
25) ຮັບຮອງໜັງສືຊວນຊື້ການອອກຈຳໜ່າຍຮຸ້ນເພີ່ມທຶນ ຂອງ ທຄຕລ ແລະ ຮັບຮອງແຜນການອອກຈຳໜ່າຍຮຸ້ນ ຂອງ ທຄຕລ ພາຍຫຼັງໄດ້ຮັບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ດັ່ງນີ້:
    - ຮັບຮອງ ການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປທັງໝົດ ຈຳນວນ 506,255,500 ຮຸ້ນ, ມູນຄ່າການລະດົມທຶນສຳລັບການເພີ່ມທຶນທັງໝົດ 833,333,168,000 ກີບ;
    - ຮັບຮອງ ອັດຕາສ່ວນການອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ RO ໃນອັດຕາສ່ວນ 1,100:500 (ໝາຍຄວາມວ່າ: ຜູ້ຖືຮຸ້ນເດີມ 11 ຮຸ້ນ ສາມາດຈອງຊື້ຮຸ້ນໃຫມ່ 5 ຮຸ້ນ ໂດຍເປັນທະວີຄູນຂອງ 100) ສຳລັບຮຸ້ນ RO ຖ້າຜູ້ຖືຮຸ້ນບໍ່ນຳໃຊ້ສິດຂອງຕົນ ຮຸ້ນດັ່ງກ່າວຈະເອົາມາຈຳໜ່າຍໃຫ້ແກ່ມວນຊົນທົ່ວໄປ (PO);
    - ຮັບຮອງ ຈຳນວນຮຸ້ນທີ່ອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ RO ຈຳນວນ 472,098,300 ຮຸ້ນ, ໃນລາຄາອອກຈຳໜ່າຍ 1,640 ກີບຕໍ່ຮຸ້ນ;
    - ຮັບຮອງ ຈຳນວນຮຸ້ນທີ່ອອກຈຳໜ່າຍໃຫ້ແກ່ມວນຊົນທົ່ວໄປ PO ຈຳນວນ 34,157,200 ຮຸ້ນ, ໃນລາຄາອອກຈຳໜ່າຍ 1,730 ກີບຕໍ່ຮຸ້ນ;
    - ຮັບຮອງ ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ທຄຕລ ເພື່ອກຳນົດສິດໃຫ້ຜູ້ຖືຮຸ້ນເດີມ (RO) ໃນການຈອງຊື້ຮຸ້ນສາມັນເພີ່ມທຶນ ເຊິ່ງຈະກຳນົດເອົາວັນທີ 11/09/2025;
    - ຮັບຮອງ ກຳນົດໄລຍະເວລາການອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ RO ໃນການຈອງຊື້ໃໝ່ ໃນວັນທີ 22-26/09/2025;
    - ຮັບຮອງ ກຳນົດໄລຍະເວລາການອອກຈຳໜ່າຍໃຫ້ແກ່ມວນຊົນທົ່ວໄປ PO ໃນການຈອງຊື້ໃໝ່ ໃນວັນທີ ວັນທີ 29/09-03/10/2025;
    - ຮັບຮອງ ມື້ຈົດທະບຽນຮຸ້ນສາມັນເພີ່ມທຶນໃນຕະຫຼາດຫຼັກຊັບລາວ ວັນທີ 05/11/2025;
26) ຮັບຮອງການປັບປຸງຕົວຊີ້ວັດລະດັບຄວາມສ່ຽງທີ່ຍອມຮັບໄດ້ດ້ານສິນເຊື່ອ ແລະ ດ້ານຕະຫຼາດ ຂອງ ທຄຕລ.
27) ຮັບຮອງຕົວເລກຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳ 06 ເດືອນຕົ້ນປີ 2025 ທີ່ຜ່ານການທົບທວນໂດຍຜູ້ກວດສອບອິດສະລະ.
28) ຮັບຮອງການແຕ່ງຕັ້ງ ແລະ ສັບຊ້ອນບຸກຄະລາກອນ ຂັ້ນຄະນະພະແນກຂອງ ທຄຕລ ຈຳນວນໜຶ່ງ.
29) ຮັບຮອງການປ່ຽນແປງສະມາຊິກສະພາບໍລິຫານ ຈາກຄູ່ຮ່ວມຍຸດທະສາດ COFIBRED.
30) ຮັບຮອງການກຳນົດລາຄາຂາຍຮຸ້ນ EDL-Gen ທີ່ ທຄຕລ ຖືຄອງຢູ່;
31) ຮັບຊາບລາຍງານຜົນດຳເນີນທຸລະກິດປະຈຳໄຕມາດ 3 ປີ 2025 ແລະ ຕົວເລກຜົນດຳເນີນທຸລະກິດ ຂອງ ທຄຕລ ຮອດເດືອນ 10/2025 (ກ່ອນການກວດສອບ);
32) ຮັບຮອງລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດຫຼັກການ Basel II ແລະ ການປັບປຸງການຈັດຕັ້ງປະຕິບັດແຜນແມ່ບົດຕາມຫຼັກການ Basel II;
33) ຮັບຊາບການລາຍງານວຽກກວດກາພາຍໃນປະຈຳໄຕມາດ 03/2025;
34) ຮັບຮອງບາງບັນຫາສຳຄັນທີ່ຕິດພັນກັບການແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃໝ່;
35) ຮັບຮອງການແຕ່ງຕັ້ງຕາງໜ້າຜູ້ຖືຮຸ້ນຂອງ ທຄຕລ ຢູ່ບໍລິສັດຮ່ວມທຶນ;

36) ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານເຂົ້າໃນຄະນະກຳມະການສະພາບໍລິຫານ.
37) ຮັບຊາບການລາຍງານການດຳເນີນທຸລະກິດຂອງ ທຄຕລ ປະຈຳໄຕມາດ 4/2025;
38) ຮັບຮອງແຜນ ແລະ ກຳນົດເວລາສຳລັບການຈັດກອງປະຊຸມສະພາບໍລິຫານປະຈຳປີ 2026.

3. ການປະຕິບັດໜ້າທີ່ຂອງຄະນະກຳມະການຂັ້ນສະພາບໍລິຫານ

3.1. ຄະນະກຳມະການກວດສອບ

ຄະນະກຳມະການກວດສອບ ໄດ້ດຳເນີນກອງປະຊຸມໃນປີ 2025 ຈຳນວນ 4 ຄັ້ງ. ນອກນັ້ນ ຄະນະກຳມະການ ໄດ້ເອົາໃຈໃສ່ໃນການຕິດຕາມວຽກງານຜ່ານຈົດໝາຍວຽນ ແລະ ບົດລາຍງານໃນແຕ່ລະໄລຍະ ເຊິ່ງການເຄື່ອນໄຫວສຳຄັນຂອງຄະນະກຳມະການມີດັ່ງນີ້:

- ຕິດຕາມການປະຕິບັດລະບຽບ ເປັນຕົ້ນແມ່ນການປະຕິບັດໜ້າທີ່ຕາມຂອບເຂດສິດ ແລະ ຂັ້ນຕອນຂອງພະນັກງານແລະຜູ້ບໍລິຫານ, ຜ່ານວຽກງານການກວດກາປົກກະຕິ, ກວດກາສະເພາະກິດ, ກວດກາສະເພາະດ້ານ ແລະ ກວດກາສຸກເສີນຂອງບັນດາພະແນກ, ສູນ ແລະ ສາຂາ ທຄຕລ. ພ້ອມທັງຕິດຕາມການແກ້ໄຂຂໍ້ພົບເຫັນຈາກກວດກາພາຍໃນ-ພາຍນອກ ຂອງບັນດາພະແນກການ, ສາຂາ ທຄຕລ ທົ່ວລະບົບ;
- ຕິດຕາມວຽກງານການແກ້ໄຂຂໍ້ພົບເຫັນຂອງກວດສອບພາຍໃນ ແລະ ກວດສອບພາຍນອກ ຢ່າງເປັນປົກກະຕິ;
- ສຳເລັດການທົບທວນເອກະສານລາຍງານການເງິນ ທຄຕລ ປະຈຳປີ 2024, ປະຈຳ 06 ເດືອນຕົ້ນປີ 2025 ແລະ ໄຕມາດ 04/2025;
- ສຳເລັດການປັບປຸງຂໍ້ຕົກລົງວ່າດ້ວຍຄະນະກຳມະການກວດສອບ ຂອງສະພາບໍລິຫານຊຸດປັດຈຸບັນ.
- ຕິດຕາມການລາຍງານປະກົດການຫຍໍ້ທໍ້, ວຽກງານການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃຫ້ແກ່ຄະນະບໍລິຫານງານ ແລະ ທະນາຄານແຫ່ງ ສປປ ລາວ;
- ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດມາດຖານສາກົນ ດ້ານການລາຍງານການເງິນຂອງ ທຄຕລ (IFRS) ໃນແຕ່ລະໄລຍະ;
- ໄດ້ສັງລວມວຽກງານຂອງຄະນະກຳມະການກວດສອບ ລາຍງານສະພາບໍລິຫານແຕ່ລະໄລຍະ.

3.2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ດຳເນີນກອງປະຊຸມໃນປີ 2025 ຈຳນວນ 4 ຄັ້ງ, ຄະນະກຳມະການໄດ້ເອົາໃຈໃສ່ໃນການຕິດຕາມ ວຽກງານຜ່ານບົດລາຍງານແຕ່ລະໄລຍະ ດັ່ງນີ້:

- ສຳເລັດການປັບປຸງຂໍ້ຕົກລົງວ່າດ້ວຍຄະນະກຳມະການຄຸ້ມຄອງຄວາມສ່ຽງ ຊຸດປັດຈຸບັນ.
- ຮັບຮອງການປັບປຸງນະໂຍບາຍຈຳນວນໜຶ່ງທີ່ຕິດພັນກັບການຄຸ້ມຄອງຄວາມສ່ຽງ;
- ສັງລວມວຽກງານຂອງຄະນະກຳມະການ ເພື່ອລາຍງານສະພາບໍລິຫານແຕ່ລະໄລຍະ;
- ຮັບຊາບລາຍງານວຽກງານຄຸ້ມຄອງຄວາມສ່ຽງຂອງ ທຄຕລ ປະຈຳໄຕມາດ 01; 02; 03 ປີ 2025;
- ຕິດຕາມຕົວຊີ້ວັດຄວາມສ່ຽງ ແຕ່ລະດ້ານໃນການດຳເນີນງານຂອງ ທຄຕລ;
- ຕິດຕາມສັງລວມຄວາມສ່ຽງຫຼັກຂອງອົງກອນໃນດ້ານຕ່າງໆ;
- ຕິດຕາມລາຍງານຂອງບັນດາໂຄງການຕ່າງໆທີ່ໄດ້ດຳເນີນການ ແລະ ນອນຢູ່ໃນໂຄງການຂອງ Basel II.

3.3. ຄະນະກຳມະການຄຸ້ມຄອງບໍລິຫານ

ໃນປີ 2025 ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ເປີດກອງປະຊຸມ 04 ຄັ້ງ, ຄະນະກຳມະການກໍ່ໄດ້ເອົາໃຈໃສ່ໃນການຕິດຕາມການປະຕິບັດງານຂອງ ທຄຕລ ຜ່ານບົດລາຍງານ ແລະ ໄດ້ຮັບຮອງບາງເນື້ອໃນທີ່ສຳຄັນດັ່ງນີ້:

- ຮັບຮອງແຜນການປະຈຳປີ 2026, ບັນຫາສຳຄັນອື່ນໆ ເພື່ອສະເໜີສະພາບໍລິຫານ ແລະ ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງຕາມລຳດັບ;
- ສຳເລັດການປັບປຸງຂໍ້ຕົກລົງວ່າດ້ວຍຄະນະກຳມະການຄຸ້ງຄອງບໍລິຫານ ຂອງສະພາບໍລິຫານຊຸດປັດຈຸບັນ.
- ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດຂອງ ທຄຕລ ເປັນແຕ່ລະໄລຍະ;
- ຕິດຕາມ ແລະ ໃຫ້ທິດຊີ້ນຳວຽກງານການບໍລິຫານທຶນ, ດ້ານສະພາບຄ່ອງ, ບັນຫາເງິນຕາ, ການນຳໃຊ້ທຶນ ແລະ ການບໍລິຫານເງິນຕາຕ່າງປະເທດ ເປັນແຕ່ລະໄລຍະ;
- ຕິດຕາມຄຸ້ມຄອງການບໍລິຫານສິນເຊື່ອໃຫ້ມີຄຸນນະພາບ, ການແກ້ໄຂໜີ້ NPL;
- ຮັບຊາບການຈັດຕັ້ງປະຕິບັດມາດຖານການບັນຊີ ຕາມມາດຖານສາກົນ (IFRS)
- ຄະນະກຳມະການໄດ້ລາຍງານການດຳເນີນງານຂອງຄະນະກຳມະການຕໍ່ກອງປະຊຸມສະພາບໍລິຫານແຕ່ລະໄລຍະ.

3.4. ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

ຄະນະກຳມະການໄດ້ເປີດກອງປະຊຸມ ແລະ ປຶກສາຜ່ານຈົດໝາຍວຽນ ລວມກັນທັງໝົດຈຳນວນ 08 ຄັ້ງ: ການຮັບຮອງການສັບຊ້ອນ ແລະ ແຕ່ງຕັ້ງພະນັກງານຫົວໜ້າພະແນກ, ຫົວໜ້າສູນ ແລະ ຫົວໜ້າສາຂາ; ການປັບປຸງນະໂຍບາຍໃຫ້ພະນັກງານ; ພິຈາລະນາກ່ຽວກັບການສະເໜີແຕ່ງຕັ້ງຮອງປະທານສະພາບໍລິຫານທ່ານໃໝ່; ຮັບຮອງໂດຍພື້ນຖານຕໍ່ກັບການພິຈາລະນາເປົ້າໝາຍສະມາຊິກສະພາບໍລິຫານ ຜູ້ຄົບວາລະ , ການແຕ່ງຕັ້ງຕາງໜ້າຜູ້ຖືຮຸ້ນ ຂອງ ທຄຕລ ໃນບັນດາບໍລິສັດຮ່ວມທຶນຂອງ ທຄຕລ ແລະ ສຳເລັດການປັບປຸງຂໍ້ຕົກລົງວ່າດ້ວຍຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ຊຸດປັດຈຸບັນ.

4. ການປະເມີນການປະຕິບັດໜ້າທີ່ຂອງສະພາບໍລິຫານ

4.1 ວິທີການປະເມີນ

ຫຼັງຈາກປິດປີການບັນຊີ 2025, ທຄຕລ ໄດ້ນຳສົ່ງແບບຟອມໃຫ້ບັນດາສະມາຊິກສະພາບໍລິຫານ ເພື່ອປະກອບ ແລະ ຈະສັງລວມເປັນຄະແນນນຳມາລາຍງານຕໍ່ສະພາບໍລິຫານ ເພື່ອຮັບຮອງ ແລະ ນຳໄປເປີດເຜີຍຢູ່ໃນບົດລາຍງານປະຈຳປີ.

ສຳລັບວິທີການປະເມີນ ປະຕິບັດດັ່ງນີ້:

1. ແບບປະເມີນສະພາບໍລິຫານ: ສະມາຊິກສະພາບໍລິຫານທຸກທ່ານເປັນຜູ້ປະເມີນ
2. ແບບປະເມີນບັນດາຄະນະກຳມະການຂອງສະພາບໍລິຫານ: ສະມາຊິກຂອງແຕ່ລະຄະນະກຳມະການເປັນຜູ້ປະເມີນ;
3. ແບບປະເມີນສະມາຊິກສະພາບໍລິຫານ (ລາຍບຸກຄົນ): ສະມາຊິກສະພາບໍລິຫານແຕ່ລະທ່ານປະເມີນສະມາຊິກດ້ວຍກັນເອງ.

ການໃຫ້ຄະແນນມີ 3 ລະດັບ: ບໍ່ເຫັນດີ (0 ຄະແນນ), ເຫັນດີບາງສ່ວນ (1 ຄະແນນ), ເຫັນດີ (2 ຄະແນນ) ເຊິ່ງພາຍຫຼັງການລວມຄະແນນ ແມ່ນຈະສະແດງເປັນເປີເຊັນ.

4.2 ຜົນການປະເມີນ

❖ **ຜົນການປະເມີນສະພາບໍລິຫານ**: **535/960** ຄະແນນ, ເທົ່າກັບ **96.35%**

❖ **ຜົນການປະເມີນບັນດາຄະນະກຳມະການຂອງສະພາບໍລິຫານ**:

- ຄະນະກຳມະການຄຸ້ມຄອງບໍລິຫານ: **148/150** ຄະແນນ, ເທົ່າກັບ **98.67%**
- ຄະນະກຳມະການກວດສອບ: **209/225** ຄະແນນ, ເທົ່າກັບ **92.89%**
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ: **209/225** ຄະແນນ, ເທົ່າກັບ **92.89%**
- ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ: **219/225** ຄະແນນ, ເທົ່າກັບ **97.33%**

❖ **ຜົນການປະເມີນສະມາຊິກສະພາບໍລິຫານ:**

- ທ່ານ ທ່ານ ສຸລິວັດ ສຸວັນນະຈຸມຄຳ, ປະທານສະພາບໍລິຫານ: **212/216** ຄະແນນ, ເທົ່າກັບ **98.15**%
- ທ່ານ ປອ. ອາຄົມ ປຣະເສີດ, ຮອງປະທານສະພາບໍລິຫານ (ຜູ້ເກົ່າ): **201/216** ຄະແນນ, ເທົ່າກັບ **93.06%**
- ທ່ານ ນ. ບຸນຕາ ດາຣາວີ, ຮອງປະທານສະພາບໍລິຫານ (ຜູ້ໃໝ່): **193/216** ຄະແນນ, ເທົ່າກັບ **89.35%**
- ທ່ານນາງ ສາຍສະໝອນ ຈັນທະຈັກ, ກຳມະການ: **214/216** ຄະແນນ, ເທົ່າກັບ **99.07%**
- ທ່ານ ທ່ານ ມິກາແອລ໌ ເດີ ແຊ໋ງ, ກຳມະການ: **197/216** ຄະແນນ, ເທົ່າກັບ **87.75%**
- ທ່ານ ປະສົມເພັດ ຄຳຕັນ, ກຳມະການ: **199/216** ຄະແນນ, ເທົ່າກັບ **92.13**%
- ທ່ານ ຣສ. ທອງເພັດ ຈັນທະນີວົງ, ກຳມະການອິດສະລະ: **202/216** ຄະແນນ, ເທົ່າກັບ **93.52%**
- ທ່ານນາງ ລັດດາວັນ ຊົງວິໄລ, ກຳມະການອິດສະລະ: **202/216** ຄະແນນ, ເທົ່າກັບ **93.52**%
- ທ່ານ ສອນໄຊ ສີລາເພັດ, ກຳມະການອິດສະລະ: **201/216** ຄະແນນ, ເທົ່າກັບ **93.06**%

VIII. ບົດລາຍງານຄວາມຍືນຍົງ

1. ພາບລວມການພັດທະນາແບບຍືນຍົງຂອງການຄຸ້ມຄອງບໍລິຫານ

ແນວຄິດການພັດທະນາແບບຍືນຍົງ ເປັນໜຶ່ງໃນບົດບາດສຳຄັນຂອງທະນາຄານ ໃນການດຳເນີນທຸລະກິດບົນພື້ນຖານຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ, ສັງຄົມ ຄຽງຄູ່ກັບ ການບໍລິຫານຈັດການທີ່ໂປ່ງໃສ ແລະ ມີປະສິດທິພາບ. ໃນຖານະເປັນຜູ້ຈັດສັນເງິນທຶນໃນລະບົບເສດຖະກິດ, ເປົ້າໝາຍສຳຄັນຂອງທະນາຄານ ແມ່ນ ເພື່ອສົ່ງເສີມການພັດທະນາເສດຖະກິດ ແລະ ສັງຄົມໃຫ້ຍືນຍົງໃນໄລຍະຍາວ, ທຸກໆບາດກ້າວຂອງການດຳເນີນ ທຸລະກິດ, ທະນາຄານໄດ້ຄຳນຶງເຖິງຜົນປະໂຫຍດໂດຍລວມຂອງທຸກຝ່າຍ ບໍ່ວ່າຈະເປັນປະໂຫຍດຂອງອົງກອນ, ພະນັກງານ, ສັງຄົມ ລວມເຖິງ ສິ່ງແວດລ້ອມ ເພື່ອໃຫ້ທຸກພາກສ່ວນໄດ້ຮັບການຍົກລະດັບ ແລະ ພັດທະນາ ດ້ວຍຄວາມຍືນຍົງໄປພ້ອມໆກັນ.

ໃນໄລຍະຜ່ານມາ ທຄຕລ ໄດ້ສືບຕໍ່ພາລະກິດການເປັນສື່ກາງໃນການລະດົມເງິນທຶນເພື່ອຊ່ວຍເຫຼືອ ສັງຄົມໂດຍຜ່ານໂຄງການ One Heart ບໍ່ວ່າຈະເປັນການລະດົມທຶນເພື່ອຜູ້ດ້ອຍໂອກາດ, ລະດົມທຶນການສຶກ ສາເພື່ອຄົນທຸກຍາກ, ຊ່ວຍເຫຼືອປະຊາຊົນຜູ້ປະສົບໄພພິບັດທຳມະຊາດ ແລະ ອື່ນໆ. ນອກນັ້ນກໍຍັງສືບຕໍ່ ເຂົ້າ ຮ່ວມບັນດາກອງທຶນສີຂຽວຕ່າງໆ ທີ່ມີຈຸດປະສົງໃນການຊຸກຍູ້ສົ່ງເສີມໂຄງການຕ່າງທີ່ຕິດພັນກັບສິ່ງແວດລ້ອມ ເຊັ່ນ: Green Climate Fund, Global Green Growth Institute, Alliance for Green Commercial Banks (ຂອງ IFC).

ປັດຈຸບັນ, ທຄຕລ ໄດ້ເລັ່ງສ້າງນະໂຍບາຍຕ່າງໆ ເພື່ອສົ່ງເສີມວຽກງານ ESG ໃຫ້ມີການປະຕິບັດທີ່ ສອດຄ່ອງ ແລະ ມີປະສິດທິພາບ, ເພື່ອໃຫ້ ທຄຕລ ກາຍເປັນທະນາຄານຕົວແບບໃນການພັດທະນາແບບຍືນຍົງ ທີ່ບໍ່ພຽງຄຳນຶງເຖິງຜົນກຳໄລພຽງຢ່າງດຽວ ແຕ່ຍັງໃສ່ໃຈຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງບໍລິຫານທີ່ ໂປ່ງໃສ.

2. ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ

ທະນາຄານ ໃຫ້ຄວາມສຳຄັນແກ່ ວຽກງານການຄຸ້ມຄອງບໍລິຫານ (Corporate Governance: CG) ເພື່ອຍົກລະດັບວຽກງານດັ່ງກ່າວໃຫ້ທຽບເທົ່າພາກພື້ນ ກໍ່ຄື ສາກົນ ເຊິ່ງ ທຄຕລ ເປັນໜຶ່ງໃນບັນດາ ບໍລິສັດຈົດທະບຽນທີ່ສະໝັກໃຈເຂົ້າຮ່ວມ ການປະເມີນການຈັດຕັ້ງປະຕິບັດວຽກການຄຸ້ມຄອງບໍລິຫານອົງ ກອນທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຮ່ວມກັບ ຕະຫຼາດຫຼັກຊັບລາວ ຈັດຂຶ້ນເປັນແຕ່ລະໄລຍະ ເພື່ອຮັບປະກັນວ່າທະນາຄານມີການຈັດຕັ້ງປະຕິບັດຕາມຫຼັກການຄຸ້ມຄອງບໍລິຫານທີ່ດີ. ຜົນການປະເມີນ ໄດ້ຊີ້ ໃຫ້ເຫັນວ່າ ທຄຕລ ໄດ້ຮັບຄະແນນສູງສຸດໃນບັນດາບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ໂດຍໄດ້ຮັບ 87.58 ຄະແນນ ເຊິ່ງຖືກຈັດຢູ່ໃນປະເພດດີເດັ່ນ 5 ດາວ. ເວົ້າສະເພາະ, ຜົນການປະເມີນສະແດງໃຫ້ຮູ້ວ່າ ທຄຕລ ສາມາດຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບໍລິຫານໄດ້ເຖິງ 81% ຂອງຄະແນນທີ່ເຮັດໄດ້ທັງໝົດ, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ ເທົ່າກັບ 15% ແລະ ບໍ່ສາມາດປະຕິບັດໄດ້ ມີພຽງ 4% ຂອງ ຄະແນນທີ່ເຮັດໄດ້ທັງໝົດ. ໃນນັ້ນ, ຄະແນນການປະເມີນທີ່ແຍກເປັນແຕ່ລະພາກ ແມ່ນມີດັ່ງນີ້:

- **ພາກທີ 1: ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ:** ທຄຕລ ສາມາດປະຕິບັດ ໄດ້ຄະແນນເຕັມທັງໝົດ 14 ຄະແນນ ຄິດເປັນ 93%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ 01 ຄະແນນ ຄິດເປັນ 7% ຂອງຄະແນນທັງໝົດໃນພາກດັ່ງກ່າວ.
- **ພາກທີ 2: ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ:** ໃນພາກນີ້ ທຄຕລ ສາມາດ ປະຕິບັດໄດ້ຄະແນນເຕັມທັງໝົດ 7 ຄະແນນ ຄິດເປັນ 64%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ 04 ຄະແນນ ຄິດເປັນ 36% ຂອງຄະແນນທັງໝົດໃນພາກດັ່ງກ່າວ.
- **ພາກທີ 3: ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ:** ໃນພາກດັ່ງກ່າວ ທຄຕລ ສາມາດປະຕິບັດໄດ້ທັງ ໝົດ 30 ຄະແນນ ຄິດເປັນ 81%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ 05 ຄະແນນ ຄິດເປັນ 14% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ 05% ຂອງຄະແນນທັງໝົດໃນພາກດັ່ງກ່າວ.

- **ພາກທີ 4: ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ:** ໃນພາກດັ່ງກ່າວນີ້, ທຄຕລ ສາມາດປະຕິບັດໄດ້ທັງໝົດ 30 ຄະແນນ ຄິດເປັນ 81%, ປະຕິບັດໄດ້ບາງສ່ວນ ເທົ່າກັບ 05 ຄະແນນ ຄິດເປັນ 14% ແລະ ບໍ່ສາມາດປະຕິບັດໄດ້ 05% ຂອງຄະແນນໃນພາກນີ້.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບໍລິຫານ ມີຄວາມສອດຄ່ອງກັບມາດຕະຖານຂອງບັນດາປະເທດໃນພາກພື້ນ ແລະ ສາກົນ, ທຄຕລ ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດດັ່ງນີ້:

2.1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ທຄຕລ ສົ່ງເສີມ ແລະ ອຳນວຍຄວາມສະດວກ ແກ່ຜູ້ຖືຮຸ້ນທຸກໆຄົນ ບໍ່ວ່າຈະເປັນຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ຖືຮຸ້ນລາຍນ້ອຍ, ນັກລົງທຶນ, ສະຖາບັນ ຫຼື ຜູ້ຖືຮຸ້ນຕ່າງປະເທດ ເພື່ອໃຊ້ສິດຂອງຕົນຢ່າງເຕັມທີ່ ໂດຍສະເພາະສິດພື້ນຖານໃນການຊື້-ຂາຍ, ໄດ້ຮັບເງິນປັນຜົນຮຸ້ນ, ສິດເຂົ້າຮ່ວມປະຊຸມຜູ້ຖືຮຸ້ນ, ສິດໃນການມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມ, ສິດໃນການລົງຄະແນນສຽງ ຫຼື ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນ, ສິດໃນການສະເໜີຄຳເຫັນຕໍ່ກອງປະຊຸມ, ສິດໃນການເລືອກສະມາຊິກສະພາບໍລິຫານ/ກຳມະການ (ຕາມສັດສ່ວນຜູ້ຖືຮຸ້ນ ທີ່ຖືຮຸ້ນ 5% ຂຶ້ນໄປ) ລວມໄປເຖິງ ການເປີດເຜີຍຂໍ້ມູນຂອງ ທຄຕລ ຢ່າງຖືກຕ້ອງ, ໂປ່ງໃສ ໃຫ້ແກ່ຜູ້ຖືຮຸ້ນ.

ທຄຕລ ໃຫ້ຄວາມສຳຄັນແກ່ຜູ້ຖືຮຸ້ນທຸກໆຄົນຢ່າງເທົ່າທຽມກັນ ບໍ່ວ່າຈະເປັນ ຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ຖືຮຸ້ນລາຍນ້ອຍ, ນັກລົງທຶນ, ສະຖາບັນ ຫຼື ຜູ້ຖືຮຸ້ນຕ່າງປະເທດ ໂດຍທຸກພາກສ່ວນຈະໄດ້ຮັບການປະຕິບັດດ້ວຍຄວາມເປັນທຳ ແລະ ສະເໝີພາບດັ່ງນີ້:

- ສິດໃນການຈອງຮຸ້ນອອກໃໝ່, ຊື້, ຂາຍ ຫຼື ໂອນຮຸ້ນ: ທຄຕລ ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ ໂດຍຍຶດໝັ້ນໃນລະບຽບການ ຂອງຕະຫຼາດຫຼັກຊັບລາວ, ເຊິ່ງຜູ້ຖືຮຸ້ນທຸກພາກສ່ວນ ຈະໄດ້ຮັບການອຳນວຍຄວາມສະດວກໃນການໃຫ້ບໍລິການ ຊື້, ຂາຍ ຫຼື ໂອນຮຸ້ນ ຜ່ານບໍລິສັດຫຼັກຊັບທີ່ ຈົດທະບຽນຖືກຕ້ອງຕາມກົດໝາຍຢ່າງເທົ່າທຽມກັນ, ຜູ້ຖືຮຸ້ນຈະໄດ້ຮັບສິດໃນການຈອງຊື້ຮຸ້ນໃໝ່ໃນອັດຕາສ່ວນ ແລະ ວິທີແບ່ງປັນຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ ກ່ອນສະເໜີຂາຍໃຫ້ແກ່ພາກສ່ວນພາຍນອກ.
- ສິດໃນການຮັບເງິນປັນຜົນ: ທຄຕລ ມີການຈັດສັນເງິນປັນຜົນໃຫ້ກັບຜູ້ຖືຮຸ້ນ ໃນອັດຕາທີ່ສົມເຫດສົມຜົນ, ສອດຄ່ອງຕາມລະບຽບ ຄຽງຄູ່ກັບ ການຄຳນຶງເຖິງຄວາມພຽງພໍຂອງທຶນທີ່ຈະນຳໃຊ້ເຂົ້າໃນການເສີມສ້າງຄວາມໝັ້ນຄົງໃຫ້ແກ່ທະນາຄານຢ່າງຍືນຍົງໃນໄລຍະຍາວ.
- ສິດໃນການຮັບຂໍ້ມູນຂ່າວສານ: ທຄຕລ ໄດ້ເອົາໃຈໃສ່ໃນການສື່ສານເຖິງ ຜູ້ຖືຮຸ້ນ ແລະ ນັກລົງທຶນ ໃຫ້ໄດ້ຮັບຂໍ້ມູນຂ່າວສານທີ່ພຽງພໍ ແລະ ທັນເວລາ ໂດຍການເປີດເຜີຍຂໍ້ມູນຜ່ານຕະຫຼາດຫຼັກຊັບ ລວມໄປເຖິງ ການເປີດເຜີຍຂໍ້ມູນຜ່ານເວັບໄຊຂອງ ທຄຕລ ເອງ.
- ສິດໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ: ທຄຕລ ໃຫ້ຄວາມສຳຄັນຕໍ່ການຮ່ວມປະຊຸມຜູ້ຖືຮຸ້ນເປັນບຸລິມະສິດ ໂດຍກ່ອນມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ, ທຄຕລ ມີການແຕ່ງຕັ້ງຄະນະກຳມະການກະກຽມກອງປະຊຸມ ເຊິ່ງເຮັດໜ້າທີ່ຮັບຜິດຊອບດ້ານເນື້ອໃນກອງປະຊຸມ, ງົບປະມານ, ພິທີການ, ລົງທະບຽນແຂກ ແລະ ສະຖານທີ່, ກວດກາເອກະສານຂາຮຸ້ນພາຍໃນ, ຂາຮຸ້ນຕ່າງປະເທດ ແລະ ຂາຮຸ້ນບໍ່ມີໜ້າ, ກວດກາຂາຮຸ້ນ ແລະ ນັບຄະແນນສຽງ ລວມໄປເຖິງ ການສົ່ງໜັງສືແຈ້ງເຊີນເຖິງຜູ້ຖືຮຸ້ນລ່ວງໜ້າ ໂດຍກຳນົດວາລະທີ່ຈະມີການພິຈາລະນາ ແລະ ຮັບຮອງ ໃນໜັງສືແຈ້ງເຊີນດັ່ງກ່າວ.
- ສິດໃນການລົງຄະແນນສຽງ: ໃນການປະຊຸມຜູ້ຖືຮຸ້ນ, ທຄຕລ ໃຫ້ສິດຜູ້ຖືຮຸ້ນຢ່າງເທົ່າທຽມໃນການລົງຄະແນນສຽງ ລວມໄປເຖິງ ອະນຸຍາດໃຫ້ມີການລົງຄະແນນສຽງໂດຍບໍ່ເຂົ້າຮ່ວມການລົງຄະແນນສຽງ ຜ່ານການມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເຊິ່ງກຳນົດເອົາໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ສິດສະເໜີຄຳເຫັນຕໍ່ກອງປະຊຸມ: ທຸກໆວາລະກອງປະຊຸມ, ທຄຕລ ມີວາລະໃຫ້ຜູ້ຖືຮຸ້ນສະເໜີຄຳຖາມ ຫຼື ປະກອບຄຳເຫັນຕໍ່ກັບແຕ່ລະວາລະຢ່າງກົງໄປກົງມາ ຜ່ານສະພາບໍລິຫານ ແລະ ຜູ້ອຳນວຍການ ລວມໄປເຖິງ ຜູ້ກວດສອບພາຍນອກ (ທີ່ມີສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ທຄຕລ).
- ສິດໃນການເລືອກສະມາຊິກສະພາບໍລິຫານ/ຄະນະກຳມະການ: ທຄຕລ ອະນຸຍາດໃຫ້ຜູ້ຖືຮຸ້ນສາມາດເລືອກສະມາຊິກສະພາບໍລິຫານ/ຄະນະກຳມະການ ອີງຕາມຜົນຂອງການລົງມະຕິຕາມຄະແນນສຽງທີ່ຫຼາຍກວ່າເຄິ່ງໜຶ່ງ ແລະ ທຄຕລ ຍັງອະນຸຍາດໃຫ້ (ກຸ່ມ) ຜູ້ຖືຮຸ້ນ ທີ່ຖືຮຸ້ນ 5% ຂຶ້ນໄປຂອງ ທຄຕລ ມີສິດສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ, ມີສິດສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕ່ຳ ທຄຕລ ເພື່ອພິຈາລະນາ, ພ້ອມກັນນັ້ນ ຜູ້ຖືຮຸ້ນທີ່ຖືຮຸ້ນ 10% ຂຶ້ນໄປຂອງ ທຄຕລ ມີສິດສະເໜີຕໍ່ສະພາບໍລິຫານເພື່ອຂໍເປີດກອງປະຊຸມວິສາມັນຜູ້ຖືຮຸ້ນໄດ້.

2.2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ

ທຄຕລ ໃຫ້ຄວາມສຳຄັນແກ່ນະໂຍບາຍ ແລະ ກົນໄກທີ່ພຽງພໍໃນການປົກປ້ອງ ແລະ ສົ່ງເສີມການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ຢ່າງເທົ່າທຽມ, ເປັນທຳ ບໍ່ວ່າຈະເປັນ ຜູ້ຖືຮຸ້ນ, ຜູ້ບໍລິຫານ ແລະ ພະນັກງານ, ລູກຄ້າ, ຄູ່ຄ້າ, ເຈົ້າໜີ້, ໜ່ວຍງານລັດ ແລະ ມີຄວາມຮັບຜິດຊອບຕໍ່ສັງຄົມ ຜ່ານການຄຸ້ມຄອງການຕິດຕໍ່ພົວພັນລະຫວ່າງ ທຄຕລ ແລະ ຜູ້ທີ່ມີສ່ວນຮ່ວມໃນຕະຫຼາດຢ່າງເໝາະສົມ ດັ່ງນີ້:

- ຜູ້ຖືຮຸ້ນ: ທຄຕລ ເອົາໃຈໃສ່ຕໍ່ການດຳເນີນທຸລະກິດໃຫ້ຈະເລີນເຕີບໂຕ ຄຽງຄູ່ກັບຄວາມໝັ້ນຄົງ ມີຄວາມສາມາດໃນການແຂ່ງຂັນ ເພື່ອສ້າງມູນຄ່າໃຫ້ແກ່ ທຄຕລ ໃນຮູບແບບມູນຄ່າຮຸ້ນທີ່ສູງ ແລະ ການຈ່າຍເງິນປັນຜົນໃນອັດຕາທີ່ດຶງດູດ ລວມໄປເຖິງ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ.
- ຜູ້ບໍລິຫານ ແລະ ພະນັກງານ: ທຄຕລ ສົ່ງເສີມການພັດທະນາຄວາມຮູ້ ແລະ ປະສົບການຂອງຜູ້ບໍລິຫານ ຕະຫຼອດຮອດພະນັກງານ ທຄຕລ ທຸກລະດັບ ໃຫ້ມີປະສິດທິພາບ ໂດຍການຈັດໃຫ້ມີການຝຶກອົບຮົມວຽກງານສະເພາະດ້ານພາຍໃນປະເທດ ແລະ ການນຳສົ່ງພະນັກງານໄປຝຶກອົບຮົມວຽກງານວິຊາສະເພາະຈາກສາກົນ. ນອກຈາກນັ້ນ ກໍ່ຍັງໄດ້ເອົາໃຈໃສ່ຕໍ່ສຸຂະພາບຂອງພະນັກງານ ແລະ ຜູ້ບໍລິຫານໂດຍຈັດໃຫ້ມີສະຫວັດດີການທີ່ດີ ແລະ ເໝາະສົມ, ສະຖານທີ່ເຮັດວຽກທີ່ສະອາດ, ປອດໄພ ລວມໄປເຖິງ ຊ່ອງທາງການຕິດຕໍ່ພົວພັນ, ຊ່ອງທາງການຮັບຄຳເຫັນ ຫຼື ຄຳຮ້ອງຟ້ອງ ຂອງພະນັກງານ.
- ລູກຄ້າ: ທຄຕລ ຍຶດຖືລູກຄ້າເປັນສູນກາງ ໃນການໃຫ້ບໍລິການທາງການເງິນ, ເພີ່ມຄວາມຫຼາກຫຼາຍທາງດ້ານຜະລິດຕະພັນ, ເພີ່ມຊ່ອງທາງການໃຫ້ບໍລິການ, ຊ່ອງທາງການຕິດຕໍ່ພົວພັນ, ຊ່ອງທາງການຮັບຄຳເຫັນ ຫຼື ຄຳຮ້ອງຟ້ອງ, ເພື່ອໃຫ້ລູກຄ້າມີຄວາມສະດວກສະບາຍ ແລະ ຄວາມເພິ່ງພໍໃຈໃນການໃຊ້ບໍລິການທະນາຄານ ບໍ່ວ່າຈະເປັນການໃຫ້ບໍລິການຜ່ານເຄົ້າເຕີ້ບໍລິການ ຫຼື ການໃຫ້ບໍລິການອີເລັກໂທຣນິກ ເຊິ່ງປັດຈຸບັນໄດ້ມີການພັດທະນາປັບປຸງໃຫ້ມີຄວາມທັນສະໄໝຍິ່ງຂຶ້ນ ແລະ ມີຜະລິດຕະພັນໃໝ່ໆອອກມາຮັບໃຊ້ສັງຄົມເພີ່ມຂຶ້ນ.
- ຄູ່ຄ້າ: ທຄຕລ ໃຫ້ຄວາມສຳຄັນຕໍ່ຄູ່ຄ້າຕາມກົດໝາຍ ແລະ ສັນຍາທີ່ຕົກລົງກັນ ສະແດງອອກໂດຍຂະບວນການຈັດຫາ, ຈັດຊື້-ຈັດຈ້າງ, ການເຊົ່າ, ຄັດເລືອກຄູ່ຄ້າຢ່າງເປັນທຳ, ເປີດໂອກາດໃຫ້ຫຼາຍພາກສ່ວນສາມາດແຂ່ງຂັນໄດ້ຢ່າງເປັນທຳ, ມີຂະບວນການຄັດເລືອກທີ່ໂປ່ງໃສ ຫຼີກລ່ຽງການຮ່ວມມືກັບບໍລິສັດທີ່ເຮັດທຸລະກິດຜິດກົດໝາຍ, ມີນະໂຍບາຍ ສະກັດກັ້ນການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ ໄວ້ໃນກົດລະບຽບກ່ຽວກັບຈັນຍາບັນຂອງທະນາຄານ.
- ເຈົ້າໜີ້: ທຄຕລ ເອົາໃຈໃສ່ໃນການປະຕິບັດບັນດາຂໍ້ກຳນົດ, ສັນຍາ ແລະ ຂໍ້ຜູກພັນຕ່າງໆຂອງເຈົ້າໜີ້ຢ່າງເຄັ່ງຄັດ, ປະຕິບັດຕາມການຊຳລະໜີ້, ດອກເບ້ຍ, ເງິນກູ້ ໃຫ້ເຈົ້າໜີ້ຖືກຕ້ອງ ແລະ ຄົບຖ້ວນ ຢ່າງກົງໄປກົງມາ.
- ໜ່ວຍງານລັດ: ທຄຕລ ໃຫ້ຄວາມສຳຄັນໃນການປະຕິບັດລະບຽບກົດໝາຍຢ່າງເຄັ່ງຄັດ ແລະ ໃຫ້ຄວາມຮ່ວມມືເປັນຢ່າງດີຕໍ່ກັບພາກສ່ວນກ່ຽວຂ້ອງທີ່ມີການປະສານງານເຂົ້າມາ ໂດຍສະເພາະເລື່ອງຮີບດ່ວນຕ່າງໆ ທີ່ຕິດພັນກັບການແກ້ໄຂບັນຫາເສດຖະກິດ ແລະ ອື່ນໆ. ນອກຈາກການປະສານໃນດ້ານຕ່າງໆແລ້ວ, ທຄຕລ ຍັງມີລະບົບທະນາຄານທີ່ທັນສະໄໝ ເຊິ່ງຖືກນຳໃຊ້ຊ່ວຍເຂົ້າໃສ່ນການເກັບພາສີ-ອາກອນ ຕ່າງໆຂອງລັດ.
- ຄວາມຮັບຜິດຊອບຕໍ່ສັງຄົມ: ນອກຈາກການບໍລິການດ້ານການເງິນແລ້ວ, ທຄຕລ ຍັງມີສ່ວນຮ່ວມທາງສັງຄົມ ແລະ ສິ່ງແວດລ້ອມ ເຊິ່ງສະແດງໃຫ້ເຫັນໄດ້ຈາກການສົ່ງເສີມການພັດທະນາແບບຍືນຍົງ ຜ່ານຄຸນຄ່າຫຼັກ (Core Value) ຂອງ ທຄຕລ ໂດຍສະເພາະ ຄວາມຮັບຜິດຊອບຕໍ່ສັງຄົມ (Social Responsibility) ເຊິ່ງໄດ້ລະບຸວ່າ: "ທຸກຄົນເອົາໃຈໃສ່ຊ່ວຍເຫຼືອສັງຄົມ, ຊຸມຊົນ ແລະ ສິ່ງແວດລ້ອມ" ໂດຍສະແດງໃຫ້ເຫັນໄດ້ຈາກການເປັນສື່ກາງໃນການລະດົມເງິນຊ່ວຍເຫຼືອສັງຄົມ ຜ່ານໂຄງການ BCEL One Heart ທີ່ເປັນສູນກາງຂອງການລະດົມທຶນເປັນຕົ້ນແມ່ນ ໂຄງການລະດົມທຶນຊ່ວຍເຫຼືອຜູ້ດ້ອຍໂອກາດ ຫຼື ປະຊາຊົນຜູ້ທຸກຍາກ, ຊ່ວຍເຫຼືອດ້ານການອຳນວຍຄວາມສະດວກໃນການເຂົ້າເຖິງລະບົບການສຶກສາ, ແລະ ອື່ນໆອີກຫຼາຍໂຄງການທີ່ຕິດພັນກັບການຊຸກຍູ້ຊ່ວຍເຫຼືອສັງຄົມ.

2.3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ທຄຕລ ໃຫ້ຄວາມສຳຄັນແກ່ການເປີດເຜີຍຂໍ້ມູນອີງຕາມ ລະບຽບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ລາວ ໂດຍຂໍ້ມູນທີ່ເປີດເຜີຍຈະຕ້ອງມີຄວາມຖືກຕ້ອງ, ຄົບຖ້ວນ, ພຽງພໍ ແລະ ເຊື່ອຖືໄດ້ ເພື່ອໃຫ້ຜູ້ນຳໃຊ້ຂໍ້ມູນ ຫຼື ນັກລົງທຶນໄດ້ຮັບຂໍ້ມູນຢ່າງເທົ່າທຽມກັນ. ພ້ອມກັນນັ້ນ, ທຄຕລ ກໍ່ຍັງມີຄະນະກຳມະການທີ່ເຮັດໜ້າທີ່ໃນການເຜີຍແຜ່ຂໍ້ມູນ ເຊິ່ງເປັນທີມງານທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການທີ່ເໝາະສົມ ພ້ອມທັງຄວາມຮັບຜິດຊອບໃນການເຜີຍແຜ່ ຫຼື ລາຍງານບົດລາຍງານທາງການເງິນປະຈຳປີຂອງ ທຄຕລ.

- ຂໍ້ມູນຂອງ ທຄຕລ ແລະ ບໍລິສັດໃນກຸ່ມ: ທຄຕລ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ວິໄສທັດ, ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານ ຂອງ ທຄຕລ ຫຼື ບໍລິສັດໃນກຸ່ມຂອງຕົນ ຢ່າງໂປ່ງໃສໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງທະນາຄານ.
- ຂໍ້ມູນທາງການເງິນ: ທຄຕລ ໄດ້ເປີດເຜີຍຂໍ້ມູນທາງການເງິນ, ນະໂຍບາຍປັນຜົນ ໃນບົດສະຫຼຸບຜົນການເຄື່ອນໄຫວທຸລະກິດປະຈຳປີ ເຊິ່ງເປັນອີກໜຶ່ງພາກທີ່ສຳຄັນ. ໃນນັ້ນ, ທຄຕລ ກໍ່ໄດ້ປະຕິບັດຕາມມາດຕະຖານບັນຊີສາກົນ ແລະ ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ໂດຍຜ່ານຊ່ອງທາງທີ່ເຂົ້າເຖິງງ່າຍ ເຊັ່ນ: ເວັບໄຊຂອງທະນາຄານ.
- ຂໍ້ມູນທີ່ບໍ່ແມ່ນການເງິນ: ທຄຕລ ໄດ້ເປີດເຜີຍຂໍ້ມູນທີ່ບໍ່ແມ່ນການເງິນ ບໍ່ວ່າຈະເປັນວຽກງານຈັດກອງປະຊຸມ, ວຽກງານການພັດທະນາວຽກງານບໍລິການ ແລະ ພັດທະນາຜະລິດຕະພັນ, ການບໍລິການສັງຄົມ ທີ່ໄດ້ລະບຸ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງ ທຄຕລ ລວມໄປເຖິງ ຂໍ້ມູນກ່ຽວກັບປະຫວັດການສຶກສາ ແລະ ການຝຶກອົບຮົມ ຂອງສະມາຊິກສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງ ທຄຕລ.
- ທຄຕລ ໄດ້ເປີດເຜີຍຂໍ້ມູນຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ໃນປີ 2025 ທຄຕລ ໄດ້ດຳເນີນການເປີດເຜີຍຂໍ້ມູນ ດັ່ງນີ້:

ປະເພດເປີດເຜີຍຂໍ້ມູນ	ຈຳນວນຄັ້ງ
ການເປີດເຜີຍຂໍ້ມູນຕາມເຫດການ	22 ຄັ້ງ
ການເປີດເຜີຍຂໍ້ມູນຕາມຮອບວຽນເວລາ	07 ຄັ້ງ
ການເປີດເຜີຍຂໍ້ມູນຕາມການສະໝັກໃຈ	39 ຄັ້ງ
ການເປີດເຜີຍຂໍ້ມູນຕາມການຮຽກຮ້ອງ	0 ຄັ້ງ
ລວມ	68 ຄັ້ງ

2.4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ທຄຕລ ເນັ້ນໜັກການຄຸ້ມຄອງບໍລິຫານທີ່ມີຄວາມຊັດເຈນທາງການປະຕິບັດວຽກງານຂອງຕົນ ສະແດງອອກຈາກການກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຢ່າງຊັດເຈນຂອງ ຄະນະກຳມະການຂອງສະພາບໍລິຫານເຊິ່ງປະກອບມີ 04 ຄະນະກຳມະການ ຄື: 1) ຄະນະກຳມະການກວດສອບ, 2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ, 3) ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ແລະ 4) ຄະນະກຳມະການຄຸ້ມຄອງບໍລິຫານ. ພ້ອມກັນນັ້ນ, ສະມາຊິກຄະນະກຳມະການຂອງສະພາບໍລິຫານແຕ່ລະຄະນະຕ້ອງເປັນສະມາຊິກສະພາບໍລິຫານ ແລະ ຕ້ອງປະກອບດ້ວຍຢ່າງໜ້ອຍ 03 ທ່ານ ທີ່ມີຄວາມຫຼາກຫຼາຍ, ຄວາມຮູ້ຄວາມສາມາດ ແລະ ປະສົບການທີ່ກ່ຽວຂ້ອງກັບຂະແໜງການທີ່ ທຄຕລ ດຳເນີນທຸລະກິດ.

3. ການຄວບຄຸມພາຍໃນ

ທຄຕລ ໄດ້ຖືເອົາການຄວບຄຸມພາຍໃນເປັນກົນໄກຍຸດທະສາດທີ່ສຳຄັນຕໍ່ການປະຕິບັດພາຍໃນໃຫ້ເຂັ້ມແຂງ ເຊິ່ງໄດ້ສະແດງອອກຜ່ານການປົກປ້ອງຊັບສິນ, ຄວາມສາມາດໃນການປະຕິບັດຜົນງານ ແລະ ສ້າງຄວາມເຊື່ອໝັ້ນໃຫ້ກັບຜູ້ທີ່ມີສ່ວນໄດ້ສ່ວນເສຍ. ການຄວບຄຸມພາຍໃນ ແມ່ນຖືກອອກແບບມາເພື່ອຮັບປະກັນການດຳເນີນງານທີ່ສອດຄ່ອງລະຫວ່າງ ການດຳເນີນທຸລະກິດ ແລະ ການຄວບຄຸມພາຍໃນທີ່ມີປະສິດທິພາບ.

ການຄວບຄຸມພາຍໃນໄດ້ກຳນົດໂຄງສ້າງການບໍລິຫານທີ່ມີສ່ວນຮ່ວມ ນັບແຕ່ຂັ້ນສະພາບໍລິຫານ ຕະຫຼອດຮອດ ພະນັກງານທຸກຂັ້ນໃນພະແນກ, ສູນ ແລະ ສາຂາຂອງ ທຄຕລ ເພື່ອຮັບປະກັນວ່າການຄວບຄຸມພາຍໃນມີຄວາມເປັນເອກະພາບໃນທົ່ວລະບົບຕາມແນວທາງທີ່ມີການກຳນົດສິດ, ພາລະບົດບາດທີ່ຊັດເຈນ ຢູ່ພາຍໃຕ້ການຊີ້ນຳຂອງການບໍລິຫານໃນ ທຄຕລ ທີ່ສະແດງໃຫ້ເຫັນເຖິງຄວາມໂປ່ງໃສ, ເອກະພາບ ແລະ ມີການຄຸ້ມຄອງທີ່ມີປະສິດທິພາບ. ສິ່ງເຫຼົ່ານີ້ສະແດງອອກຜ່ານການສ້າງຄວາມເຂັ້ມແຂງດ້ານນິຕິກຳ ທີ່ມີຄວາມສອດຄ່ອງຕາມຍຸດທະສາດທີ່ໄດ້ກຳນົດໄວ້ ຜ່ານການທົບທວນນະໂຍບາຍ, ລະບຽບ, ຄູ່ມື ຫຼື ຄຳແນະນຳຕ່າງໆ ເພື່ອຕອບສະໜອງການຫັນປ່ຽນທີ່ທັນສະໄໝດ້ານເສດຖະກິດ ຄຽງຄູ່ກັບ ການຍົກລະດັບດ້ານເຕັກໂນໂລຊີ ເພື່ອຮັບປະກັນການປະຕິບັດວຽກງານຕົວຈິງໃຫ້ມີຄວາມສອດຄ່ອງກັບການຄຸ້ມຄອງຄວາມສ່ຽງທີ່ໄດ້ມາດຕະຖານ. ທັງນີ້ກໍເພື່ອຮັບປະກັນການຈັດຕັ້ງປະຕິບັດທີ່ສອດຄ່ອງກັບສະພາບການປ່ຽນແປງຕົວຈິງໃນປັດຈຸບັນ ບົນພື້ນຖານການຄຸ້ມຄອງຄວາມສ່ຽງໃຫ້ມີປະສິດທິພາບ, ຮັດກຸມ ແລະ ສາມາດນຳໃຊ້ໄດ້ໃນຕົວຈິງ ອີກທັງເປັນການສ້າງຊັ້ນປ້ອງກັນທີ່ເຂັ້ມແຂງຕໍ່ອົງກອນໃນການຮັບມືກັບຂໍ້ຫຍຸ້ງຍາກທີ່ເກີດຂຶ້ນໃນແຕ່ລະຄັ້ງ.

ທຄຕລ ຍັງມີການກຳນົດຂອບເຂດທີ່ຊັດເຈນໃນການຄຸ້ມຄອງບໍລິຫານທີ່ມີປະສິດທິພາບ ຜ່ານການຄົ້ນຄ້ວາ ແລະ ປັບປຸງໂຄງສ້າງການຄຸ້ມຄອງບໍລິຫານ ໂດຍການປະເມີນຊ່ອງຫວ່າງ ການຈັດຕັ້ງປະຕິບັດຕົວຈິງຂອງ ທຄຕລ ທຽບກັບ ລະບຽບຫຼັກການພາຍໃນ ສປປ ລາວ, ຫຼັກການບາເຊວ II, ຫຼັກການ 03 ສາຍປ້ອງກັນ (Three Lines of Defense) ແລະ ຫຼັກການປະຕິບັດທີ່ດີຈາກທະນາຄານສາກົນ ເພື່ອຮັບປະກັນວ່າ ທຄຕລ ມີໂຄງສ້າງທີ່ເຂັ້ມແຂງ ແລະ ໄດ້ມາດຕະຖານສາກົນ ແລະ ສອດຄ່ອງກັບຜູ້ຄຸ້ມຄອງ ກໍຄື ທະນາຄານແຫ່ງ ສປປ ລາວ ເພື່ອຮັບປະກັນວ່າ ທຄຕລ ມີໂຄງສ້າງທີ່ເຂັ້ມແຂງ ແລະ ໄດ້ມາດຕະຖານສາກົນ ເຊິ່ງເຫັນໄດ້ວ່າ ການຈັດຕັ້ງປະຕິບັດຕາມລະບຽບຫຼັກການພາຍໃນ ສປປ ລາວ ໂດຍລວມແມ່ນສາມາດຈັດຕັ້ງປະຕິບັດໄດ້ໃນລະດັບດີ ໃນຂະນະທີ່ການຈັດຕັ້ງປະຕິບັດຕາມຫຼັກການສາກົນ ແມ່ນຍັງມີບາງຈຸດທີ່ຕ້ອງໄດ້ຮັບການປັບປຸງ. ດັ່ງນັ້ນ, ທຄຕລ ຈຶ່ງໄດ້ສຸມໃສ່ການສົ່ງເສີມວັດທະນະທຳດ້ານການຄຸ້ມຄອງຄວາມສ່ຽງໃນທົ່ວອົງກອນ ໂດຍເນັ້ນໃສ່ການສ້າງຄວາມເຂົ້າໃຈໃຫ້ກັບພະນັກງານທຸກຂັ້ນນັບແຕ່ຂັ້ນຄະນະຜູ້ບໍລິຫານ, ພະແນກ, ສູນ ແລະ ສາຂາທົ່ວລະບົບ ໄດ້ຮັບຮູ້ສິດ ແລະ ພາລະບົດບາດຂອງຕົນໃນວຽກງານຄຸ້ມຄອງຄວາມສ່ຽງ ດ້ວຍການເຜີຍແຜ່ ແລະ ຈັດຝຶກອົບຮົມສຳມະນາຫົວຂໍ້ຕ່າງໆຢ່າງເປັນປະຈຳທຸກປີ, ປັບປຸງໂຄງສ້າງການຄຸ້ມຄອງຄວາມສ່ຽງຂອງ ທຄຕລ ໃຫ້ທຽບເທົ່າກັບມາດຕະຖານສາກົນ ໂດຍການສ້າງຄວາມເຂັ້ມແຂງຂອງຂະບວນການຄຸ້ມຄອງຄວາມສ່ຽງຢ່າງເປັນລະບົບ ແລະ ສົ່ງເສີມການຄວາມຮ່ວມມືໃນການປະສານງານເຮັດວຽກກັບທຸກພະແນກ, ສູນ, ສາຂາ ທີ່ຕິດພັນກັບຄວາມສ່ຽງ ແນໃສ່ເຮັດໃຫ້ການລາຍງານຄວາມສ່ຽງຈາກພາກສ່ວນກ່ຽວຂ້ອງມີປະສິດທິພາບຍິ່ງຂຶ້ນ.

4. ການຄຸ້ມຄອງຄວາມສ່ຽງ

4.1. ການອອກນະໂຍບາຍກ່ຽວກັບວຽກງານຄຸ້ມຄອງຄວາມສ່ຽງ

ວຽກງານຄຸ້ມຄອງຄວາມສ່ຽງ ຖືເປັນກົນໄກສຳຄັນທີ່ຈະເຮັດໃຫ້ອົງກອນສາມາດດຳເນີນທຸລະກິດ ແລະ ບັນລຸວັດຖຸປະສົງຢ່າງມີປະສິດທິພາບ ເພື່ອສ້າງຜົນຕອບແທນທີ່ຍືນຍົງ, ໂດຍສອດຄ່ອງຕໍ່ການພັດທະນາ ແລະ ປັບປຸງບັນດານະໂຍບາຍທີ່ສຳຄັນ ເປັນຕົ້ນແມ່ນ ໂຄງສ້າງການຄຸ້ມຄອງຄວາມສ່ຽງ ທຄຕລ, ນະໂຍບາຍວ່າດ້ວຍການປະເມີນການຄວບຄຸມຄວາມສ່ຽງດ້ວຍຕົນເອງ, ນະໂຍບາຍວ່າດ້ວຍການກຳນົດຕົວຊີ້ວັດຄວາມສ່ຽງທີ່ສຳຄັນ, ນະໂຍບາຍວ່າດ້ວຍການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ ແລະ ນະໂຍບາຍທີ່ຕິດພັນອື່ນໆ ທີ່ມີຂອບເຂດການຄຸ້ມຄອງຄວາມສ່ຽງພາຍໃນ. ນອກຈາກນັ້ນ, ຍັງມີ ລະບຽບວ່າດ້ວຍການພັດທະນາແຜນບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ, ລະບຽບວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ບັນຊີຜູ້ໃຊ້ງານ, ລະບຽບວ່າດ້ວຍການຄຸ້ມຄອງບໍລິຫານສິນເຊື່ອ, ລະບຽບວ່າດ້ວຍວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ລະບຽບວ່າດ້ວຍການຄຸ້ມຄອງສີ່ສ້າງສັນ, ຄຳແນະນຳ ຫຼື ຄູ່ມືອື່ນໆທີ່ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງຂອງ ທຄຕລ.

ເພື່ອຍົກລະດັບການຄຸ້ມຄອງຄວາມສ່ຽງທີ່ມີປະສິດທິພາບ ແລະ ສອດຄ່ອງຕາມມາດຕະຖານສາກົນ ຈຶ່ງໄດ້ມີການທົບທວນປັບດານະໂຍບາຍ ແລະ ນິຕິກຳຕ່າງໆດ້ານການຄຸ້ມຄອງຄວາມສ່ຽງທີ່ສອດຄ່ອງຕາມຫຼັກການບາເຊ‍ວ II ເພື່ອຮັບປະກັນວ່າການດຳເນີນທຸລະກິດຂອງ ທຄຕລ ມີການຄຸ້ມຄອງຄວາມສ່ຽງທີ່ມີຄຸນນະພາບ ສະແດງອອກວ່າງ ແຜນການພັດທະນາ ນະໂຍບາຍຄວາມສ່ຽງທີ່ປິ່ນອ້ອມ ເຊັ່ນ: ນະໂຍບາຍວ່າດ້ວຍການໃຊ້ບໍລິການຈາກພາຍນອກ, ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານສະພາບຄ່ອງ, ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານໄຊເບີ , ນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງບໍລິຫານ ແລະ ຄຳແນະນຳທີ່ຕິດພັນກັບການດຳເນີນງານພາຍໃນ ທີ່ເປັນຂອບເຂດການຄຸ້ມຄອງຄວາມສ່ຽງ ຕາມການປະຕິບັດໃນຫຼັກການບາເຊ‍ວ II ທີ່ແນ່ໃສ່ 03 ຄວາມສ່ຽງຫຼັກ ຄື: ຄວາມສ່ຽງດ້ານສິນເຊື່ອ, ຄວາມສ່ຽງດ້ານຕະຫຼາດ ແລະ ຄວາມສ່ຽງດ້ານການດຳເນີນງານ ເພື່ອໃຫ້ເກີດປະສິດທິພາບພາຍໃນຂອງການປະຕິບັດວຽກງານຄວາມສ່ຽງນັ້ນ ແມ່ນຈຳເປັນຕ້ອງມີການປະຕິບັດຄູ່ກັບ ການຈັດການສຳມະນາ ແລະ ເຜີຍແຜ່ເນື້ອໃນກ່ຽວກັບແຕ່ລະວຽກງານໃຫ້ກັບ ຄະນະຜູ້ບໍລິຫານຂັ້ນສະພາບໍລິຫານ ແລະ ຄະນະອຳນວຍການ ຕະຫຼອດຮອດ ພະນັກງານວິຊາການຂອງ ທຄຕລ ຢ່າງເປັນປົກກະຕິ ເພື່ອໃຫ້ເປັນໂຄງສ້າງ ແລະ ແນວທາງໃນການຈັດຕັ້ງປະຕິບັດວຽກງານທີ່ມີຂອບເຂດ ແລະ ໄດ້ຮັບໝາກຜົນຕາມລະດັບຄາດໝາຍ.

4.2. ການກຽມຄວາມພ້ອມເພື່ອນຳໃຊ້ຫຼັກການບາເຊ‍ວ II

ໃນການປະຕິບັດແຜນແມ່ບົດການຈັດຕັ້ງປະຕິບັດຕາມຫຼັກການບາເຊ‍ວ II ແມ່ນໄດ້ມີການຕິດຕາມ ແລະ ທົບທວນຢ່າງເປັນປະຈຳ ເພື່ອຮັບປະກັນໃຫ້ບັນດາໂຄງການໄດ້ຮັບການຈັດຕັ້ງປະຕິບັດຕາມແຜນ, ເຊິ່ງດ້ານການຈັດຕັ້ງປະຕິບັດຕາແຜນແມ່ບົດທີ່ກ່າວມານັ້ນ ທຄຕລ ສຳເລັດການຈັດຕັ້ງປະຕິບັດຫຼາຍໂຄງການທີ່ສຳຄັນ ເປັນຕົ້ນ 1) ໂຄງການພັດທະນາເຄື່ອງມືການບໍລິຫານເຫດການສູນເສຍພາຍໃນ, 2) ໂຄງການພັດທະນາການຄຸ້ມຄອງບໍລິຫານຂໍ້ມູນ, 3) ໂຄງການອະນຸມັດສິນເຊື່ອແບບທັນສະໄໝ, 4) ໂຄງການພັດທະນາລະບົບການຈັດອັນດັບສິນເຊື່ອ, 5) ໂຄງການພັດທະນາເຄື່ອງມືຄິດໄລ່ຊັບສິນທີ່ມີນ້ຳໜັກຄວາມສ່ຽງ, 6) ໂຄງການກຳນົດວິທີການລະບຸການຄວບຄຸມໂດຍອີງຕາມຄວາມສ່ຽງ, 7) ໂຄງການຍົກລະດັບວຽກງານການຄຸ້ມຄອງຄວາມສ່ຽງການດຳເນີນງານ, 8) ໂຄງການພັດທະນາເຄື່ອງມືການປະເມີນການຄວບຄຸມຄວາມສ່ຽງດ້ວຍຕົນເອງ, 9) ໂຄງການພັດທະນາເຄື່ອງມືຕິວຊີ້ວັດຄວາມສ່ຽງທີ່ສຳຄັນ, 10) ໂຄງການຄົ້ນຄວ້າພັດທະນາປັບປຸງນະໂຍບາຍ ແລະ ຂັ້ນຕອນ ກ່ຽວກັບການບໍລິຫານຄວາມສ່ຽງສິນເຊື່ອ, 11) ໂຄງການບໍລິຫານຊັບສິນ - ໜີ້ສິນ, 12) ໂຄງການກຳນົດລາຄາໂອນທຶນພາຍໃນ ແລະ 13) ໂຄງການຍົກລະດັບວຽກງານການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ ແລະ 14) ໂຄງການພັດທະນາວຽກງານຂະບວນການປະເມີນຄວາມພຽງພໍຂອງທຶນ.

ການຈັດຕັ້ງປະຕິບັດແຜນແມ່ບົດການຈັດຕັ້ງປະຕິບັດຕາມຫຼັກການບາເຊ‍ວ II ແມ່ນໄດ້ດຳເນີນການສືບຕໍ່ປະຕິບັດໂດຍອີງໃສ່ການປະຕິບັດດຳເນີນໂຄງການທີ່ຍັງບໍ່ສຳເລັດ ແລະ ຄວາມຊັບຊ້ອນໃນການດຳເນີນໂຄງການ. ດັ່ງນັ້ນ, ຈຶ່ງໄດ້ສະເໜີຂໍຂະຫຍາຍເວລາການດຳເນີນໂຄງການ ເຖິງຜູ້ຄຸ້ມຄອງ ກໍ່ຄື ທະນາຄານ ແຫ່ງ ສປປ ລາວ ເຊິ່ງໄດ້ລາຍງານຂໍທິດຊີ້ນຳຕາມຂັ້ນຕອນ. ດັ່ງນັ້ນ, ຈຶ່ງຂະຫຍາຍເວລາການປະຕິບັດລະຫວ່າງ ໄລຍະປີ 2025-2028 ຈາກແຜນເດີມທີ່ໄດ້ກຳນົດແມ່ນ ໄລຍະປີ 2017-2025 ເພື່ອຮັບປະກັນການຈັດຕັ້ງປະຕິບັດທີ່ໄດ້ຮັບປະສິດທິພາບທີ່ດີຍິ່ງຂຶ້ນ ພ້ອມທັງເປັນໂອກາດການຄົ້ນຄ້ວາບັນດາເຄື່ອງມື ແລະ ລະບຽບການສຳລັບດ້ານດຳເນີນໂຄງການ ເພື່ອໃຫ້ການຈັດຕັ້ງປະຕິບັດຕາມຕາມຫຼັກການບາເຊ‍ວ II ຂອງ ທຄຕລ ສຳເລັດຕາມລະດັບຄາດໝາຍ.

ທຄຕລ ເອົາໃຈໃສ່ສືບຕໍ່ວຽກງານດັ່ງກ່າວ ແມ່ນເພື່ອສ້າງຄວາມເຂັ້ມແຂງໃນການດຳເນີນງານພາຍໃນ ເຊິ່ງສະແດງອອກໃນດ້ານການຊຸກຍູ້ການປະຕິບັດໂດຍໃຊ້ບຸກຄະລາກອນພາຍໃນ ໂດຍສະເພາະ ແມ່ນສິ່ງເສີມພາກສ່ວນທີ່ເປັນເຈົ້າຂອງໂຄງການໃນແຜນແມ່ບົດເພື່ອການຄົ້ນຄ້ວາ, ປະເມີນ ລວມໄປເຖິງ ການສຶກສາຈຸດສຳຄັນຂອງຊ່ອງຫວ່າງ ເພື່ອດຳເນີນການແກ້ໄຂ ຫຼື ສະກັດກັ້ນສິ່ງທີ່ຈະສ້າງຄວາມເສຍຫາຍ. ສະນັ້ນ, ການປະຕິບັດໃນ ທຄຕລ ໃຫ້ເປັນມາດຕະຖານສາກົນ ກໍ່ຄື ຫຼັກການບາເຊ‍ວ II ແມ່ນຖືເປັນການຍົກລະດັບຜູ້ປະຕິບັດງານໃຫ້ມີຄວາມຊຳນານ, ແນໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນ.

ດ້ານການຈັດຕັ້ງປະຕິບັດຕາມແຜນແມ່ບົດທີ່ໄດ້ກຳນົດມານັ້ນແມ່ນໄດ້ສຳເລັດ 14 ໂຄງການທີ່ສຳຄັນ, ເຊິ່ງໂຄງການທີ່ນອນໃນແຜນແມ່ບົດໃນໄລຍະ 2025-2028 ແມ່ນໄດ້ນຳເອົາໂຄງການທີ່ຍັງດຳເນີນບໍ່ສຳເລັດຕາມແຜນມາ

ສືບຕໍ່ດຳເນີນການໃຫ້ມີຄວາມຄືບໜ້າ ແລະ ຊ່ວຍໃຫ້ໂຄງການທີ່ລ່າຊ້າບໍ່ສຳເລັດຕາມແຜນນັ້ນໄດ້ມີການລິເລີ່ມໄປຕາມຂັ້ນຕອນ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດໂຄງການມີຄວາມສອດຄ່ອງຕາມຂອບເຂດທີ່ໄດ້ກຳນົດໄວ້.

5. ການດຳເນີນງານດ້ານທຸລະກິດ

ທຄຕລ ເນັ້ນໜັກເອົາໃຈໃສ່ເຮັດໃຫ້ທຸລະກິດໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວເຊິ່ງສະແດງອອກຈາກການເພີ່ມຂຶ້ນ ຂອງຕົວເລກທາງທຸລະກິດໂດຍມຸ່ງເນັ້ນປະຕິບັດ ຍຸດທະສາດການພັດທະນາສ້າງຄວາມເຂັ້ມແຂງໃຫ້ກັບອົງກອນຢ່າງຮອບດ້ານ ດັ່ງນີ້:

- ທຄຕລ ສາມາດສ້າງຄວາມເຂັ້ມແຂງໃຫ້ອົງກອນຫຼາຍດ້ານເປັນຕົ້ນແມ່ນດ້ານການດຳເນີນທຸລະກິດ: ຍອດຊັບສິນ, ການລະດົມເງິນຝາກ, ການຂະຫຍາຍສິນເຊື່ອ, ທຶນ ແລະ ການສ້າງລາຍຮັບສຸດທິໃນແຕ່ລະດ້ານໂດຍລວມແມ່ນໄປຕາມທິດທາງແຜນການທີ່ກຳນົດໄວ້ ແລະ ມີລັກສະນະເພີ່ມຂຶ້ນໃນແຕ່ລະປີຜ່ານມາ, ສາມາດເພີ່ມປະສິດທິພາບໃນການດຳເນີນງານໂດຍນຳໃຊ້ KPI ເຂົ້າໃນການຈັດຂັ້ນສາຂາ ແລະ ໜ່ວຍບໍລິການ, ການພັດທະນາການຄຸ້ມຄອງບໍລິຫານ Corporate Governance (CG) ເຫັນໄດ້ວ່າ ທຄຕລ ສາມາດປະຕິບັດໄດ້ສ່ວນຫຼາຍ;
- ດ້ານການຄຸ້ມຄອງບໍລິຫານທຶນແມ່ນໄດ້ບໍລິຫານທຶນໃນຮູບແບບຕ່າງໆທີ່ເປັນໄປໄດ້ຕາມເງື່ອນໄຂຕົວຈິງ, ໄດ້ເພີ່ມໂອກາດໃນການລົງທຶນເພື່ອສ້າງລາຍຮັບເພີ່ມ, ຫຼຸດຜ່ອນຄວາມສ່ຽງໃຫ້ເຫຼືອໜ້ອຍທີ່ສຸດ ແລະ ໄດ້ຮັບປະກັນສັດສ່ວນສະພາບຄ່ອງໃຫ້ມີຄວາມສົມດຸນກັນ;
- ວຽກງານການຕະຫຼາດ ແລະ ການບໍລິການຂອງ ທຄຕລ ແມ່ນໄດ້ຮັບການປັບປຸງ ແລະ ພັດທະນາຂຶ້ນຕໍ່ເນື່ອງເລື້ອຍໆມາເພື່ອສ້າງຄວາມເຂັ້ມແຂງ ແລະ ຄວາມໜ້າເຊື່ອຖືໃຫ້ກັບລູກຄ້າຕໍ່ກັບການບໍລິການ ທຄຕລ;
- ວຽກງານສິນເຊື່ອສາມາດຄຸ້ມຄອງສິນເຊື່ອໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ໃນແຕ່ລະໄລຍະ, ຂະຫຍາຍສິນເຊື່ອ ແລະ ແກ້ໄຂໜີ້ໄດ້ບັນລຸແຜນການປີໃນໄລຍະຜ່ານມາພ້ອມທັງລົງຊຸກຍູ້ວຽກງານການແກ້ໄຂໜີ້ໃນທົ່ວລະບົບ;
- ດ້ານການພັດທະນາບຸກຄະລາກອນແມ່ນໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນໃນການພັດທະນາຄວາມຮູ້-ຄວາມສາມາດຂອງບຸກຄະລາກອນ ໂດຍໃຫ້ສອດຄ່ອງກັບສາຍງານເພື່ອສ້າງຄວາມເປັນຊ່ຽວຊານໃນແຕ່ລະຕຳແໜ່ງງານ. ນອກຈາກນີ້, ຍັງມີການຈັດສອບເສັງເພື່ອທົບທວນຄວາມຮູ້ກ່ຽວກັບວິຊາສະເພາະຢ່າງເປັນປະຈຳ, ນຳສົ່ງພະນັກງານ ທຄຕລ ເຂົ້າຮ່ວມຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດ ເພື່ອຍົກລະດັບຄວາມຮູ້ ແລະ ໃຫ້ພະນັກງານສາມາດນຳມາປະຕິບັດໜ້າວຽກວິຊາສະເພາະຂອງຕົນເອງຢ່າງມີປະສິດທິພາບ. ພ້ອມນີ້ ກໍ່ຍັງໄດ້ມີການພັດທະນາເຄື່ອງມືຕິດຕາມ ແລະ ປະເມີນຜົນການເຮັດວຽກຂອງພະນັກງານ ທຄຕລ ໃນໄລຍະຜ່ານມາ.
- ທຄຕລ ຍົກສູງວຽກງານຄຸ້ມຄອງຄວາມສ່ຽງໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງຕາມມາດຕະຖານສາກົນກໍຄື ຫຼັກການ BASEL II ໂດຍສຸມໃສ່ວຽກງານການຄຸ້ມຄອງຄວາມສ່ຽງດ້ານຕ່າງໆ ມີການປັບປຸງຄູ່ມື/ຄຳແນະນຳ, ນຳໃຊ້ລະບົບລາຍງານທີ່ທັນສະໄໝໃຫ້ສອດຄ່ອງກັບແຕ່ລະສະພາບການ ແລະ ເອົາໃຈໃສ່ໃນການຕິດຕາມບັນດາພຶດຕິກຳການເຄື່ອນໄຫວຂອງກຸ່ມລູກຄ້າທີ່ມີການປັບປ່ຽນໄປຕາມຍຸກສະໄໝຢູ່ສະເໝີ.

6. ການດຳເນີນງານດ້ານສິ່ງແວດລ້ອມ

ເພື່ອປະຕິບັດຕາມທິດທາງແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX 2021 – 2025 ແລະ ປະກອບສ່ວນສະໜັບສະໜຸນໃນແຜນຍຸດທະສາດແຫ່ງຊາດໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຮອດປີ 2030, ທຄຕລ ໄດ້ລິເລີ່ມວາງແຜນໃນການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ສົ່ງເສີມການເຕີບໂຕສີຂຽວຢ່າງຕັ້ງໜ້າ. ການດຳເນີນງານດັ່ງກ່າວບໍ່ພຽງແຕ່ກໍ່ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນເທົ່ານັ້ນ, ແຕ່ຍັງເປີດໂອກາດໃນການຮ່ວມມືກັບພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດອີກດ້ວຍ.

ໃນໄລຍະຜ່ານມາ, ທຄຕລ ໄດ້ເພີ່ມທະວີການຮ່ວມມືກັບບັນດາອົງການຈັດຕັ້ງພາກລັດ ແລະ ສາກົນ ໃນໂຄງການທີ່ຕິດພັນກັບການເຕີບໂຕສີຂຽວ ແລະ ການພັດທະນາແບບຍືນຍົງຕາມທິດທາງນະໂຍບາຍຂອງລັດຖະບານ. ໂດຍສະເພາະໃນໄລຍະຜ່ານມາ ຫາ ປີ 2025, ທຄຕລ ໄດ້ເຂົ້າຮ່ວມທັງໝົດ 4 ໂຄງການສຳຄັນລາຍລະອຽດດັ່ງລຸ່ມນີ້:

- ໂຄງການກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (Green Climate Fund - GCF): ທຄຕລ ໄດ້ຮັບການຄັດເລືອກ ແລະ ຮັບຮອງຈາກ ກົມແຜນການ ແລະ ການເງິນ, ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ໃນນາມຈຸດປະສານງານແຫ່ງຊາດ ເພື່ອເປັນໜ່ວຍງານທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ (Direct Access Entity) ເພື່ອຍື່ນຂໍແຫຼ່ງທຶນໃນການປ່ອຍເງິນກູ້ດອກເບ້ຍຕ່ຳ ແລະ ການໃຫ້ສິນເຊື່ອແບບປະສົມປະສານຂອງ ກອງທຶນສີຂຽວດ້ານການແປງດິນຟ້າອາກາດຂອງ ສປປ ລາວ (GCF); ນອກຈາກນັ້ນ, ທຄຕລ ໄດ້ຮ່ວມມືສະຖາບັນເຕີບໂຕສີຂຽວ (Global Green Growth Institute - GGGI) ປະຈຳ ສປປ ລາວ ໃນການປະເມີນຊ່ອງວ່າງ, ເບິ່ງຄວາມພ້ອມຂອງທະນາຄານ ແລະ ກະກຽມໃນແຕ່ລະຂັ້ນຕອນເພື່ອຍື່ນສະໝັກ. ເຊິ່ງປະຈຸບັນ ທຄຕລ ແມ່ນຢູ່ໃນຂັ້ນຕອນການກະກຽມຍື່ນສະໝັກເຂົ້າໃນເວັບໄຊ ຂອງ GCF (Stage 1).
- ໂຄງການທົດລອງການປະເມີນການປ່ອຍທາດອາຍການກອນໃນ ສປປ ລາວ (Pilot Voluntary Carbon Foot-Print Assessment Project): ໂຄງການດັ່ງກ່າວແມ່ນໄດ້ຮ່ວມເຮັດວຽກກັບກົມການປ່ຽນແປງດິນຟ້າອາກາດ (ກຄປ) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໃນການດຳເນີນໂຄງການທົດລອງການປະເມີນລະດັບການປ່ອຍທາດອາຍການກອນສຳລັບຫ້ອງໜ່ວຍທຸລະກິດໃນ ສປປ ລາວ ເພື່ອວັດແທກການປ່ອຍທາດອາຍເຮືອນແກ້ວທີ່ເກີດຂຶ້ນຈາກການເຄື່ອນໄຫວຂອງອົງກອນ. ເຊິ່ງ ທຄຕລ ກໍ່ໄດ້ປະກອບສ່ວນໃນໂຄງການທົດລອງດັ່ງກ່າວຜ່ານການຕອບແບບສອບຖາມ ແລະ ເຂົ້າຮ່ວມສຳມະນາກ່ຽວກັບເປົ້າໝາຍຂອງໂລກຍຸກໃໝ່ໃຫ້ມີການນຳເອົາວຽກງານຮັກສາສິ່ງແວດລ້ອມເຂົ້າມາມີສ່ວນຮ່ວມໃນການດຳເນີນງານເພື່ອການພັດທະນາແບບຍືນຍົງ.
- ເຂົ້າຮ່ວມເປັນສະມາຊິກໃນເຄືອຂ່າຍພັນທະມິດສີຂຽວສຳລັບທະນາຄານທຸລະກິດ (Alliance for Green Commercial Banks) ຂອງ IFC: ການເປັນສະມາຊິກເຄືອຂ່າຍດັ່ງກ່າວ ຖືເປັນບາດກ້າວສຳຄັນໃນການສ້າງເຄືອຂ່າຍການຮ່ວມມືລະດັບສາກົນທີ່ຊ່ວຍໃຫ້ ທຄຕລ ສາມາດແລກປ່ຽນຄວາມຮູ້ ແລະ ປະສົບການກັບສະຖາບັນການເງິນສີຂຽວຊັ້ນນຳໃນອາຊຽນ.
- ການເຂົ້າຮ່ວມເປັນຄະນະຍ່ອຍ (Sub-group) ຂອງ Asia GX Consortium: ແມ່ນກຸ່ມທີ່ສ້າງຕັ້ງຂຶ້ນເພື່ອການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນໃນພາກພື້ນອາຊຽນ ແລະ ປະເທດຍີ່ປຸ່ນເພື່ອສົ່ງເສີມການເງິນເພື່ອການປ່ຽນຜ່ານ (Transition Finance) ໂດຍມີເປົ້າໝາຍເພື່ອສ້າງແນວທາງ ແລະ ສົ່ງເສີມຄວາມຮ່ວມມືລະຫວ່າງປະເທດໃນການຂັບເຄື່ອນການເງິນເພື່ອການປ່ຽນຜ່ານເປັນທະນາຄານສີຂຽວ ແລະ ຂັບເຄື່ອນເສດຖະກິດຂອງພາກພື້ນອາຊຽນໄປສູ່ເປົ້າໝາຍການປ່ອຍທາດອາຍເຮືອນແກ້ວສຸດທິເປັນສູນ (Net Zero).

ນອກຈາກນີ້, ທຄຕລ ໄດ້ສ້າງນະໂຍບາຍ ແລະ ລະບຽບການຕ່າງໆເພື່ອໃຫ້ສອດຄ່ອງກັບເງື່ອນໄຂໃນການເຂົ້າຮ່ວມກອງທຶນດອກເບ້ຍຕ່ຳເພື່ອປ່ອຍກູ້ໃຫ້ແກ່ກິດຈະກຳທີ່ສົ່ງເສີມ, ອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ. ພ້ອມກັນນັ້ນ, ທຄຕລ ຍັງໄດ້ບັນຈຸບັນດາແຜນງານ ແລະ ໂຄງການ ຕິດພັນກັບຫັນການຄຸ້ມຄອງ ແລະ ບໍລິຫານອົງກອນໃຫ້ຍືນຍົງຕາມທິດສີຂຽວ Sustainability and Green Goal ເຂົ້າໃນແຜນຍຸດທະສາດພັດທະນາ ທຄຕລ ໄລຍະຍາວ 2025-2029. ທຄຕລ ຖືວ່າເປັນທະນາຄານທຸລະກິດແຫ່ງທຳອິດຂອງ ສປປ ລາວ ທີ່ລິເລີ່ມ ແລະ ໃຫ້ຄວາມສຳຄັນຕໍ່ການສົ່ງເສີມການເງິນສີຂຽວ, ຊຶ່ງການເຂົ້າຮ່ວມໃນ 4 ໂຄງການດັ່ງກ່າວສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ ທຄຕລ ໃນການສະໜັບສະໜູນການພັດທະນາແບບຍືນຍົງ.

7. ການອຸປະຖຳສັງຄົມ

ທຄຕລ ໄດ້ດຳເນີນນະໂຍບາຍຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility: CSR) ຜ່ານໂຄງການ BCEL One Heart ເຊິ່ງເປັນຜະລິດຕະພັນທີ່ນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝປະກອບເຂົ້າໃນວຽກງານການຊ່ວຍເຫຼືອສັງຄົມໂດຍບໍ່ຫວັງຜົນຕອບແທນ, ເຊິ່ງຈະເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກຊ່ວຍເຫຼືອສັງຄົມທີ່ອຳນວຍຄວາມສະດວກລະຫວ່າງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ນຳໃຊ້ງ່າຍ, ສະດວກ, ວ່ອງໄວ ແລະ ມີຄວາມໂປ່ງໃສ. ສາມາດກວດສອບຂໍ້ມູນຂອງການຮັບບໍລິຈາກໄດ້ເຊິ່ງໄດ້ສ້າງຄວາມເຊື່ອໝັ້ນໃຫ້ກັບທັງຜູ້ໃຫ້ ແລະ ຜູ້ຮັບເຮັດໃຫ້ການມີສ່ວນຮ່ວມຕໍ່ສັງຄົມຂອງຫຼາຍພາກສ່ວນເພີ່ມຂຶ້ນ ປະກອບສ່ວນຊ່ວຍປັບປຸງສະຫວັດດີພາບ, ຄຸນນະພາບຊີວິດສັງຄົມໃຫ້ດີຂຶ້ນ, ສັງຄົມຄືຜູ້ໄດ້ຮັບຜົນປະໂຫຍດສູງສຸດ.

ປີ 2025, ມີໂຄງການເຂົ້າຮ່ວມ BCEL One Heart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກເງິນຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ, ເຊິ່ງໄດ້ເປີດຮັບບໍລິຈາກທັງໝົດ 09 ໂຄງການ ແລະ ມີຜູ້ບໍລິຈາກທັງໝົດ 4,699 ຄັ້ງ, ລວມເງິນທັງໝົດຈຳນວນ 300.55 ລ້ານກີບ. ນອກຈາກນີ້, ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳວຽກງານການສຶກສາ ແລະ ກິລາ, ວຽກງານສາທາລະນະສຸກ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ພາຍໃນປີ 2025 ຈຳນວນ 148 ລາຍການ ລວມເປັນຈຳນວນເງິນທັງໝົດ 2,112.62 ລ້ານກີບ.

IX. **ຜູ້ກວດສອບອິດສະຫຼະ**

1. **ການບໍລິການ ແລະ ມູນຄ່າກວດສອບ**

ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2024 ທີ່ຈັດຂຶ້ນໃນວັນທີ 30/04/2025 ໄດ້ຮັບຮອງເອົາ ບໍລິສັດ ພຣາຍສ໌ ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບອິດສະຫຼະ ຂອງ ທຄຕລ ປະຈຳປີ 2025 ໂດຍມີມູນຄ່າ ກວດສອບ ຈຳນວນ 945,000,000 ກີບ. ເຊິ່ງໄດ້ອອກບົດລາຍງານການກວດສອບປະຈຳປີ ແລະ ທົບທວນຖານະ ການເງິນ 06 ເດືອນ ລວມມີ ການກວດສອບຕາມມາດຕະຖານສາກົນ ແລະ ການກວດສອບຕາມມາດຕະຖານລາວ ເຊິ່ງມີທັງພາສາລາວ ແລະ ພາສາອັງກິດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

ຂໍ້ມູນທົ່ວໄປ

ທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ("ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງ ທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010, ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມ ໃບທະບຽນວິສາຫະກິດເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະການຄ້າ ແຫ່ງ ສປປ ລາວ. ໃນວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED''). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນ ໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ (ຄິດເປັນຈຳນວນຮຸ້ນ 68.047.300 ຮຸ້ນ) ແລະ ສາທາລະນະຊົນ(ຄິດເປັນຈຳນວນຮຸ້ນ 3.098.400 ຮຸ້ນ) ໃນຕະຫຼາດຫຼັກຊັບ ລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນ ທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫລາດຫລັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ ເພີ່ມທຶນຈົດທະບຽນ ຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ອີງຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນ ທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0429 /ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງ ອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບໂຄງສ້າງຜູ້ຖືຮຸ້ນ ໂດຍການສະເໜີຂາຍສິດຊື້ ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານແມ່ນເພື່ອສະໜັບສະໜຸນສະເໜີຂາຍໃຫ້ ແກ່ ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ໃນວັນທີ 29 ພະຈິກ 2019, ສຳນັກງານຄະນະ ກຳມະການຄຸ້ມຄອງຫຼັກຊັບ ໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

